

# 占芭 ຈຳປາ

ພິທີເປີດງານກິລາໂອລິມປິກຄົນພິການປັກກິ່ງ ປີ 2008ຢ່າງ ຄຶກຄື້ນ

ກວາງໂຈວພວມກະກຽມງານກິລາເອຊຽນເກມທີ່ມີຂະໜາດໃຫຍ່ທີ່ສຸດໃນປະຫວັດສາດຜ່ານມາ

ຄະນະຜູ້ແທນກົມສື່ມວນຊົນກະຊວງຖະແຫຼງຂ່າວວັດທະນະທຳ ສປປ ລາວຢ້ຽມຢາມສຳນັກພິມວາລະສານ 《ຈຳປາ》 ສ ປ ຈີນ

ລາຄາ: 13000 ກີບ ¥10
ISSN 1673-3266
10/2008
ສະບັບທີ 38



MEKONG An Authoritative Magazine in Thai
AUSPICIOUS An Authoritative Magazine in Burmanese
CHAMPA An Authoritative Magazine in Lao
Preferential Activity for Advertisement
Provided by the Three Publications
Foreign Media Overbalance Investment Overal Agent Lower Price
Same Investment Different Return
In order to thank old & new customers for their kindness in giving MEKONG, AUSPICIOUS & CHAMPA support for a long time, " The Three Publications " Golden Combination Suit advertisement has been specially worked out for customers.
Please contact the general agent for detailed information:
CHAMPA Magazine
Add:Education Garden,Extensionline of Xihua Road,
Kunming,Yunnan, China
Tel:86-871-8042593 Fax:86-871-8042591
E-meil:ynzhanba@163.com
http://la.yunnan.cn http://laos.cri.cn http://www.scio.gov.cn

# ແຈ້ງການ

### ກ່ຽວກັບການເຄື່ອນໄຫວ "ຈັດງານປະກວດຮ້ອງ ເພງຈີນ"

ເພື່ອປະສານສົມທົບການຮຽນພາສາຈີນຂອງຜູ້ອ່ານວາ ລະສານ "ຈຳປາ" (ຈີນ) ແລະ ເພື່ອນມິດຊາວລາວຈຳນວນຫລວງ ຫລາຍໃຫ້ໄດ້ຮັບຜົນດີກວ່າເກົ່າ, ສະຖານເອກອັກຄະລັດຖະທູດຈີນ ປະຈຳລາວ ແລະສຳນັກງານວາລະສານ "ຈຳປາ" (ຈີນ) ຮ່ວມ ກັນເປັນເຈົ້າພາບຈັດໃຫ້ມີການເຄື່ອນໄຫວ "ງານປະກວດຮ້ອງ ເພງ ຈີນ" ຂຶ້ນ, ຈຶ່ງຂໍແຈ້ງການມາຍັງທ່ານຜູ້ອ່ານທັງຫລາຍດັ່ງຕໍ່ ໄປນີ້:

1. ເປົ້າໝາຍຂອງຜູ້ເຂົ້າຮ່ວມງານປະກວດ: ຜູ້ອ່ານວາລະສານ "ຈຳປາ" (ຈີນ), ຜູ້ທີ່ພວມຮຽນພາສາຈີນ ຢູ່ລາວ, ນັກຮຽນນັກສຶກສາ, ຊາວລາວຜູ້ມັກຮ້ອງເພງຈີນ, ຈີນ ຕ່າງດ້າວແລະ ຊາວລາວທີ່ມີເຊື້ອສາຍຈີນ.

2. ຫົວໜ່ວຍທີ່ຮັບການຈັດງານປະກວດ: ສະມາຄົມຈີນນະຄອນຫລວງວຽງຈັນ.

3. ເພງທີ່ເຂົ້າຮ່ວມການປະກວດ: ໂດຍເອົາຊື່ເພງໃນ ຄໍລຳ "ຮຽນຮ້ອງເພງຈີນ" ໃນເວັບໄຊ "ຈຳປາ" (ຈີນ) ແລະ ເພງໃນແຜ່ນສຽງທີ່ສຳນັກງານວາລະສານ "ຈຳປາ" ແຈກຢາຍນັ້ນເປັນຫລັກ.

4. ການຈັດຕັ້ງການປະກວດຮອບທຳອິດ ແລະ ຮອບຄັດເລືອກພ້ອມທັງສະຖານທີ່ຂອງການປະກວດໃຫ້ແຕ່ລະພາກສ່ວນ, ແຕ່ລະຫົວໜ່ວຍແລະແຕ່ລະທ້ອງຖິ່ນຮັບຜິດຊອບເອງ, ປະກວດເອົາຜູ້ເຂົ້າຮ່ວມການແຂ່ງຂັນຮ້ອງເພງໃນຮອບຄັດ ເລືອກ 30 ຄົນເພື່ອເຂົ້າຮ່ວມການປະກວດຊີງຊະນະເລີດ.

5. ເວລາປະກວດຊີງຊະນະເລີດ: ກາງເດືອນທັນວາ ປີ2008.

6. ສະຖານທີ່ປະກວດຊີງຊະນະເລີດ: ຫໍວັດທະນະທຳ ແຫ່ງຊາດທີ່ນະຄອນຫລວງວຽງຈັນ ສປປ ລາວ.

7. ມາດຕະຖານຂອງການໃຫ້ຄະແນນ: ອອກສຽງສຳ ນຽງຊັດ, ອອກສຽງໄດ້ມາດຕະຖານ, ອາລົມຈິດທີ່ສະແດງອອກ ສວຍງາມ, ວາດຊົງຢູ່ເທິງເວທີສະຫງ່າ.

8. ງານປະກວດຊີງຊະນະເລີດໂດຍແມ່ນສະຖານເອກອັກຄະລັດຖະທູດຈີນປະຈຳລາວ, ສຳນັກງານວາລະສານ "ຈຳປາ" (ຈີນ)ແລະ ຫົວໜ່ວຍຮັບຈັດງານປະກວດຮ່ວມກັນຈັດຕັ້ງຂຶ້ນ.

ຜ່ານການປະກວດຊີງຊະນະເລີດແລ້ວ, ສຸດ ທ້າຍປະກວດອອກຜູ້ໄດ້ລາງວັນ ທີ 1: 5 ຄົນ, ລາງວັນທີ 2: 10 ຄົນ ແລະ ລາງວັນທີ 3: 15 ຄົນ. ເງິນລາງວັນທີ 1: 500 ຢວນ, ລາງວັນທີ 2: 300 ຢວນ, ລາງວັນທີ 3: 200 ຢວນ. ຜູ້ທີ່ເຂົ້າຮ່ວມການປະກວດຊີງຊະນະເລີດທັງໝົດລ້ວນແຕ່ໄດ້ຂອງລະນຶກ 1 ອັນ. ໃນນັ້ນ, ຜູ້ທີ່ໄດ້ລາງວັນທີ 1 ຈະຖືກສຳນັກພິມວາລະສານ "ຈຳປາ" ເຊື້ອເຊີນເດີນທາງໄປທັດສະນະສຶກສາ ແລະ ທ່ຽວຊົມທີ່ຄຸນມິງ ແລະ ແຫ່ງອື່ນໆຂອງຈີນ, ຄ່າໃຊ້ຈ່າຍແມ່ນສຳນັກງານວາລະສານ "ຈຳປາ" (ຈີນ)ເປັນຜູ້ຮັບຜິດຊອບ, ຈຶ່ງແຈ້ງການມາເພື່ອຊາບ.

ໂທລະສັບຫາບທານ: 0086-871-8042591 ຜູ້ຕິດຕໍ່ພົວພັນ: ຊູເອີນເອີນ

00856-21-214661 ຜູ້ຕິດຕໍ່ພົວພັນ: ເພິງເຈີ້ນຮົວ

ວັນທີ 18 ມິຖຸນາ ປີ 2008

ສະຖານເອກອັກຄະລັດຖະທູດ ສປ ຈີນ ປະຈຳ ສປປ ລາວ

ສຳນັກງານວາລະສານ "ຈຳປາ" ພາສາລາວ ແຫ່ງປະເທດຈີນ.

### 关于举办“学唱中文歌曲大赛”活动

# 公　告

为了更好地配合中国·《占芭》杂志读者和广大老挝朋友学习汉语，中国驻老挝大使馆、中国·《占芭》杂志社联合主办“学唱中文歌曲大赛”活动，现公告如下：

1. 参赛对象 ：中国·《占芭》杂志读者，老挝正在学习中文人员，青年学生，老挝中文歌曲爱好者，华人华侨。

2. 承办单位 ：老挝万象中华理事会。

3. 参赛歌曲 ：以中国·《占芭》网站“学唱中文歌曲”栏目中歌曲及杂志社发放的光盘歌曲为主要参赛曲目。

4. 初赛、复赛组织及地点由各系统、各单位、各地区负责，复赛后共选出 30 名选手参加决赛。

5. 决赛时间 ：2008 年 12 月中旬。

6. 决赛地点 ：老挝万象国家文化宫。

7. 评分标准 ：吐字清楚、发音准确，表情优美、台风庄重。

8. 决赛由中国驻老挝大使馆，中国·《占芭》杂志社，及承办单位共同组织。

通过大赛，最后决出一等奖 5 名，二等奖 10 名，三等奖 15 名。一等奖奖金人民币 500 元 ；二等奖奖金人民币 300 元 ；三等奖奖金人民币 200 元。凡参加决赛者均获纪念品一份。其中，一等奖获得者由中国·《占芭》杂志社邀请前往中国昆明等地观光考察，费用由《占芭》杂志社承担。

联系电话 ：0086—0871—8042591　联系人 ：苏雯雯

00856—21— 214661　联系人 ：彭正华

中国驻老挝大使馆
中国 · 老挝文《占芭》杂志社
2008年7月

# ສາລະບານ

10/2008 ສະບັບທີ 38


ເຈົ້າໜ້າທີ່ຄຸ້ມຄອງໂດຍ
ຫ້ອງການຂ່າວຄະນະລັດຖະບານສ ປຈີນ
ຈັດທຳໂດຍ
ສະມາຄົມແລກປ່ຽນວັດທະນະທຳກັບຕ່າງ
ປະເທດແຂວງຢູນນານສ ປຈີນ
ຮຽບຮຽງພິມຈຳໜ່າຍ
ສຳນັກພິມວາລະສານ 《ຈຳປາ》
ຫົວໜ້າບັນນາທິການ
ໄຊຊຸນແຊງ
ຫົວໜ້າບັນນາທິການບໍລິຫານ
ຢາງຢູນ
ຫົວໜ້າພິມຈຳໜ່າຍ
ຢູຍເຈີງຢູຍ
ຜູ້ຄຸ້ມງານບັນນາທິການ
ຫວາງວັນລີ
ບັນນາທິການປະຈຳ
ຊູເວີນເວີນ
ຜູ້ຄຸ້ມງານຝ່າຍສິລະປະ
ຈູ້ສິນ
ຜູ້ແປພາສາລາວ
ລາວລ້ານຊ້າງ. ລີວເຍີນເຫີ
ບັນນາທິການອ່ານກວດ ພາສາລາວ
ລີວເຍີນເຫີ
ຜູ້ພິມດີດພາສາລາວ
ປາຍຍຽນ
ຜູ້ຄຸ້ມງານຝ່າຍອິນເຕີເນັດ
ຈາງເຊີຢີ
ບັນນາທິການຝ່າຍອິນເຕີເນັດ
ລີທາວ
ພະນັກງານຝ່າຍປົກຄອງ
ລູຢູຍ

ພິມຈຳໜ່າຍເປີດເຜີຍ:
ພາຍໃນແລະຕ່າງປະເທດ
ອອກຈຳໜ່າຍ:
ວັນທີ 5 ທຸກເດືອນ
ລະຫັດວາລະສານມາດຖານສາກົນ:
ISSN 1673–3266
ລະຫັດວາລະສານປະເທດຈີນ:
CN53–1200/D
http://www.r ivermk.com
E–mail: ynzhanba@163.com

ເລກໃບປາຕັງທຸລະກິດໂຄສະນາ: 5300004000052

ສະຖານທີ່: ສວນດອກໄມ້ສຶກສາສາຍທາງຕໍ່ຖະ
ໜົນຊີຮວາ ນ.ຄ.ຄຸນໝິງ ຂວ.ຢູນນານ
ລະຫັດໄປສະນີ: 650228
ໂທ: 86-871-8042593
ແຟັກ: 86-871-8042591





ຜູ້ອາສາສະໝັກ ງານກິລາໂອລິມປິກ
奥运会志愿者　CFP 图


主　　管：中华人民共和国国务院新闻办公室
主　　办：云南省对外文化交流协会
编辑出版：《占芭》杂志社
总 编 辑：蔡春生
执行总编辑：杨　云
总编室主任：禹正玉
编辑总监：王万里
责任编辑：苏雯雯
美术总监：祝　群
翻　　译：大　伟　刘仁和
老挝文译审：刘仁和
老挝文录入：白　艳
网络总监：张守义
网络编辑：李　涛
编　　务：陆　蕊

发行范围：国内外公开发行
出版日期：每月五日
邮发代号：64－36
国际标准刊号：ISSN 1673－3266
国内统一刊号：CN53－1200/D

广告经营许可证号：5300004000052

地址：云南省昆明市西华路延长线 教育花园三楼
编辑部电话：86-871-8042593
办公室电话：86-871-8042591
传真：86-871-8042591
邮编：650228












## ສາລະຄະດີພິເສດ 本刊特稿

04.ພິທີເປີດງານກິລາໂອລິມປິກຄົນພິການປັກກິ່ງ ປີ 2008ຢ່າງ ຄຶກຄື້ນ

12.ບົດເພງສັນລະເສີນແຫ່ງຄວາມຫວັງແລະຊີວິດ

---ພິທີເປີດງານກິລາໂອລິມປິກຄົນພິການປັກກິ່ງສະເທືອນໂລກ

24.ຈີນໃຫ້ຄົນພິການຂອງປະເທດຕ່າງໆຮູ້ສຶກມີຄວາມອົບອຸ່ນ

30.ງານກິລາໂອລິມປິກຄົນພິການປັກກິ່ງປີ2008ໄດ້ອັດພິທີຢ່າງ ງົດງາມ





## ປະຕູເມືອງຈີນ 中国之窗

42.3ຂັ້ນຕອນປະຫວັດສາດໃນການປະຕິຮູບເສດຖະກິດຂອງຈີນ

48.ກວາງໂຈວພອມກະກຽມງານກິລາເອຊຽນເກມທີ່ມີຂະໜາດ ໃຫຍ່ທີ່ສຸດໃນປະຫວັດສາດຜ່ານມາ



## ເມືອງລາວໃນວັນນີ້ 今日老挝

52.ຄະນະຜູ້ແທນກົມສື່ມວນຊົນກະຊວງຖະແຫຼງຂ່າວວັດທະນະທຳ ສປປ ລາວຢ້ຽມຢາມສຳນັກພິມວາລະສານ<<ຈຳປາ>>ສ ປ ຈີນ

58.ປະລິມານຍົນສົ່ງຜູ້ໂດຍສານຖ້ຽວລົດເມສາກົນຄຸນມິງ-ວຽງຈັນ ໄດ້ເພີ່ມຂຶ້ນຫລາຍ

60.ເມືອງລາວຈະອະນຸມັດສື່ມວນຊົນຕ່າງປະ ເທດສ້າງຕັ້ງສຳນັກ ງານສາຂາຢູ່ລາວ






## ຮຽນພາສາຈີນ 学 汉 语

62.ສັ່ງຊື້ຂອງ

## ນິທານສຸພາສິດ 成语故事

64.ຖາມຢ່າງບໍ່ໜ້າອາຍ



# ພິທີເປີດງານກິລາໂອລິມ ປິກຄົນພິການປັກກິ່ງ ປີ 2008ຢ່າງຄຶກຄື້ນ

## 北京 2008 残奥会隆重开幕

北京 2008 年残奥会开幕式于 9 月 6 日晚在国家体育场隆重举行，中国国家主席胡锦涛出席开幕式并宣布北京残奥会开幕。来自 147 个国家和地区的残疾人运动员，同全场 9 万多名观众共同分享这一期盼已久的盛会。



ການສະແດງໄຟດອກໃນພິທີເປີດງານກິລາ ໂອລິມປິກຄົນພິການ
开幕式上的焰火表演　新华社 图



ທ່ານຫູຈິນທາວປະທານປະເທດຈີນເຂົ້າຮ່ວມພິທີເປີດງານກິລາແລະປະກາດເປີດສາກງານກິລາໂອລິມປິກຄົນພິການປັກກິ່ງ
中国国家主席胡锦涛出席开幕式并宣布北京残奥会开幕 新华社 图

ພິທີເປີດງານກິລາໂອລິມປິກຄົນພິການປັກກິ່ງປີ 2008 ໃນຕອນຄ່ຳວັນທີ 6 ກັນຍາຈັດຂຶ້ນທີ່ສະໜາມກິລາແຫ່ງຊາດຢ່າງຄຶກຄື້ນ.ທ່ານຫູຈິນທາວປະທານປະເທດຈີນໄດ້ເຂົ້າຮ່ວມພິທີ ແລະ ປະກາດເປີດງານກິລາໂອລິມປິກຄົນພິການຢ່າງເປັນທາງການ.ນັກກິລາຄົນພິການທີ່ມາແຕ່ 147 ປະເທດ ແລະ ເຂດແຄ້ວນພ້ອມກັບຜູ້ຊົມ 90 ກວ່າພັນຄົນໄດ້ແບ່ງປັນສະເຫວີຍງານມະຫາກຳກິລາທີ່ປາຖະໜາແຕ່ດົນແລ້ວ.

ຜູ້ນຳພັກແລະລັດຂອງຈີນເຊັ່ນ:ທ່ານຈຽງເຈີມິງ,ທ່ານອູປາງກົວ,ທ່ານເວີນເຈຍປາວ,ທ່ານເຈຍຊິນລິນ,ທ່ານລີຊາງຊູນ,ທ່ານສີຈິນຜິງ,ທ່ານລີເຄີຊຽງ,ທ່ານຫໍກົວຊຽງ,ທ່ານໂຈວຢົງຄັງແລະທ່ານອື່ນ ໆ, ທ່ານຟີລິບເຄເວີນປະທານຄະນະກຳມະການໂອລິມປິກຄົນພິການສາກົນ,ທ່ານອັນໂຕນີໂອຊາມານປະທານກິຕິມະສັກຊົ່ວຊີວິດງານກິລາໂອລິມປິກສາກົນແລະແຂກຜູ້ມີກຽດທີ່ມາຈາກເຂດຕ່າງໆໃນທົ່ວໂລກໄດ້ເຂົ້າຮ່ວມພິທີດັ່ງກ່າວນີ້.

ປະມານ 20ໂມງ,ທຸງຊາດ ສ ປ ຈີນຄ່ອຍ ໆ ຊັກທຸງຂຶ້ນເສົາທາມກາງເພງຊາດຈີນທີ່ສະຫງ່າຜ່າເຜີຍ.

ຕໍ່ມາ,ທ່ານຟີລິບເຄເວີນປະທານຄະນະກຳມະການໂອລິມປິກຄົນພິການສາກົນທີ່ນັ່ງຢູ່ໃນພິທີນັ້ນ,ໄດ້ອອກຄຳສັ່ງດ້ວຍພາສາຈີນວ່າ "ເຊີນເຂົ້າປະຈຳທີ່-ກຽມ-""ງົວວາສະໜາຊື່ໂລໂລ"ເຊິ່ງເປັນວັດຖຸມຸງຄຸນຂອງງານກິລາໂອລິມປິກຄົນພິການປັກກິ່ງຊູ"ປືນສັນຍານ"ຂຶ້ນ,ຜູ້ຊົມຕົບມືພ້ອມກັນ,ນັກສະແດງທີ່ນຸ່ງຊຸດກາຕູນ 959 ຄົນເຕັ້ນຂຶ້ນແລ່ນເຂົ້າສູ່ສະໜາມ,ປູເປັນທາງແລ່ນ 7 ສີທີ່ສວຍງາມເສັ້ນໜຶ່ງ,ນັກສະແດງກະຕູນ ຈັດເປັນ "ວົ"ສີແດງ,ສີຂຽວ,ສີມຸ່ຍ 3 ໃບໃນໃຈກາງສະໜາມກິລາ,ກາຍເປັນແຜນຮູບກາງານກິລາໂອລິມປິກຄົນພິການສາກົນ.

ພິທີນັກກິລາເລີ່ມຕົ້ນເຂົ້າສູ່ສະໜາມຢ່າງເປັນທາງການ.ນັກກິລາທີ່ມາຈາກ 147 ປະເທດ ແລະ ເຂດແຄ້ວນເຂົ້າສູ່ສະໜາມກິລາໂດຍມີກຳລັງວັງຊາ, ໂບກມືສະແດງຄວາມນັບຖືຕໍ່ຜູ້ຊົມດ້ວຍຄວາມເບີກບານມ່ວນຊື່ນ.ນັກກິລາທີ່ມາຈາກແຫ່ງຕ່າງໃນໂລກເປັນຈຳນວນ 4000 ກວ່າຄົນຈະເຂົ້າຮ່ວມການແຂ່ງຂັນເປັນຈຳນວນ 20 ກວ່າລາຍການໃຫຍ່ຢູ່ໃນເວລາ 11 ວັນທີ່ຈະມາເຖິງນີ້.ຜູ້ຊົມໃນພາກສະໜາມຕົບມືຢ່າງຟົດຟື້ນເພື່ອສະແດງຄວາມຊົມເຊີຍຕໍ່ນັກກິລາຄົນພິການ.

ແສງໄຟຄ່ອຍໆມືດຂຶ້ນ,ສຽງດົນຕີດັງຂຶ້ນ.ນົກຕາເວັນທີ່ເປັນສັນຍາລັກແຈ້ງສະຫວ່າງແລະຄວາມອົບອຸ່ນໂຕໜຶ່ງບິນມາຈາກກາງຫາວຮັງນົກ,ເລີ່ມເປີດການສະແດງສິລະປະວັນນະຄະດີຢ່າງ




ທ່ານຟີລິບເຄເວິນປະທານງານກິລາໂອລິມປິກຄົນພິການສາກົນເຂົ້າຮ່ວມ ພິທີເປີດງານກິລາໂອລິມປິກຄົນພິການປັກກິ່ງປີ2008ທີ່ສະໜາມກິລາແຫ່ງຊາດ.

国际残奥委会主席克雷文在国家体育场出席北京 2008 年残奥会开幕式 新华社 图



ທ່ານລິວຊີປະທານຄະນະຈັດຕັ້ງງານກິລາໂອລິມປິກປັກກິ່ງກ່າວຄຳປາໄສໃນພິທີເປີດສາກ

北京奥组委主席刘淇在开幕式上致辞 新华社 图

ຂະໜາດໃຫຍ່.

ຫລັງຈາກການສະແດງສິລະປະສິ້ນສຸດລົງແລ້ວ, ທ່ານລິວຊີປະທານງານກິລາໂອລິມປິກປັກກິ່ງກ່າວຄຳປາໄສ. ທ່ານຕ່າງໜ້າຄະນະຈັດຕັ້ງງານກິລາໂອລິມປິກປັກກິ່ງຂໍສະແດງຄວາມ



ຊັກທຸງຂຶ້ນເສົາຂອງທຸງງານກິລາໂອລິມປິກຄົນພິການສາກົນ

升国际残奥委会会旗 新华社 图



ທ່ານຫາວກໍຮົວ(ຂວາ)ກຳມະການຕັດສິນຄົນຕາບອດບານປະຕູຕາງໜ້າກຳມະການຕັດສິນທັງໝົດປະຕິຍານຕົວ

中国盲人门球裁判员郝国华（右）代表全体裁判员宣誓 新华社 图




ຕອນຄ່ຳ8 ໂມງໃນວັນທີ6ກັນຍາ, ພິທີເປີດງານກິລາໂອລິມປິກຄົນພິການປັກກິ່ງປີ 2008ຈັດຂຶ້ນຢ່າງຄຶກຄື້ນທີ່ສະໜາມກິລາແຫ່ງຊາດ. ພິທີຊັກທຸງຂຶ້ນເສົາໃນພິທີເປີດສາກ

9 月 6 日晚 8 时，北京 2008 年残奥会开幕式在国家体育场“ 鸟巢 ”隆重举行。图为开幕式上的升国旗仪式 新华社 图



ນັກກິລາຈີນເຂົ້າສູ່ສະໜາມ.
中国运动员入场　新华社 图



ຄະນະຜູ້ແທນກິລາອາເມລິກາເຂົ້າສູ່ສະໜາມ
美国代表团在开幕式上入场　新华社 图



ຄະນະຜູ້ແທນກິລາອົດສະຕຣາລີເຂົ້າສູ່ສະໜາມ
澳大利亚代表团在开幕式上入场　新华社 图




ຄະນະຜູ້ແທນກິລາປະເທດລາວ ເຂົ້າສູ່ ສະໜາມກິລາ
老挝代表团在开幕式上入场　新华社 图

ຊົມເຊີຍຢ່າງສຸດອົກສຸດໃຈມາຍັງນັກກິລາ, ຄູຝຶກແລະແຂກຜູ້ມີກຽດທີ່ມາຈາກບັນດາປະເທດແລະເຂດແຄ້ວນຕ່າງໆໃນທົ່ວໂລກ. ຂໍສະແດງຄວາມຂອບອົກຂອບໃຈຢ່າງສຸດອົກສຸດໃຈມາຍັງຄະນະກຳມະການງານກິລາໂອລິມປິກຄົນພິການສາກົນ, ຜູ້ສ້າງສາ, ຜູ້ຮ່ວມງານແລະບັນດາເພື່ອນມິດທີ່ເອົາໃຈໃສ່ສະໜັບສະໜູນໃນການກະກຽມຈັດງານກິລາໂອລິມປິກຄົນພິການປັກກິ່ງໝົດທຸກຄົນ. ທ່ານລິວຊີເວົ້າວ່າ, ພວກເຮົາມີຄວາມປາຖະໜາຢ່າງຈິງໃຈໃຫ້ງານກິລາໂອລິມປິກຄົນພິການປັກກິ່ງກາຍເປັນງານມະຫາກຳແຫ່ງຄວາມເບີກບານມ່ວນຊື່ນ, ມິດຕະພາບ, ຄວາມຝັນເປັນຈິງ ແລະ ໄດ້ຮັບຜົນສຳເລັດ. ພວກເຮົາຈະເອົາຄວາມອົບອຸ່ນຂອງປະຊາຊົນຈີນທີ່ອີ່ມຖະໜອມໂລກແດ່ທົ່ວໂລກ.

ທ່ານຟີລິບເຄເວີນງານກິລາໂອລິມປິກຄົນພິການສາກົນ ກ່າວຄຳປາໄສວ່າ, ງານກິລາໂອລິມປິກຄົນພິການປັກກິ່ງມີຂະໜາດໃຫຍ່ໂຕມະໂຫລານທີ່ບໍ່ເຄີຍມີມາກ່ອນ, ບໍ່ວ່າຈຳນວນນັກກິລາ, ຈຳນວນປະເທດ ແລະ ເຂດແຄ້ວນທີ່ເຂົ້າຮ່ວມ, ຈຳນວນລາຍການແຂ່ງຂັນກິລາລ້ວນແຕ່ລື່ນກາຍງານກິລາໂອລິມປິກຄົນພິການທີ່ຜ່ານມາທຸກເທື່ອ, ອັນນີ້ແມ່ນສິລາຈາລຶກແຫ່ງໜຶ່ງໃນປະຫວັດສາດງານກິລາໂອລິມປິກຄົນພິການ. ງານກິລາໂອລິມປິກຄົນພິການ



ປັກກິ່ງເປັນຍອດຍິ່ງ, ພວກເຮົາເຊື່ອແນ່ວ່າ, ງານກິລາໂອລິມປິກຄົນພິການປັກກິ່ງຈະໄດ້ຮັບຜົນສຳເລັດອັນຈົບງາມຢ່າງແນ່ນອນ.

ເວລາ 22 ໂມງ 36 ນາທີເຊິ່ງເປັນຂະນະເວລາກະຕຸ້ນໃຈຄົນມາເຖິງແລ້ວ. ທ່ານຫູຈິນທາວປະທານປະເທດຈີນປະກາດດ້ວຍ



ນັກກິລາຄະນະຜູ້ແທນເບຼຊີນເຕັ້ນຟ້ອນໃນເວລາເຂົ້າສູ່ສະໜາມ
巴西代表团成员在入场时跳舞欢庆　新华社 图




ນັກກິລາເຢຍລະມັນມືຖືທຸງຊາດເຢຍລະມັນຜືນໜຶ່ງທີ່ຂຽນດ້ວຍພາສາຈີນວ່າ "ສະບາຍດີ, ປັກກິ່ງ" ໃນເວລາເຂົ້າສູ່ສະໜາມ
德国代表团成员入场时手举一面写有中文"北京，你好！"的德国国旗
新华社 图

ສຽງດັງດັງວ່າ: "ງານກິລາໂອລິມປິກຄົນພິການປັກກິ່ງເປີດສາກ!"

ຊົ່ວກະພິບຕາ, ໄຟດອກທີ່ແວວວາວໄດ້ເບັ່ງບານຢູ່ກາງ




ຄະນະຜູ້ແທນປະເທດຕ່າງໆເຂົ້າສູ່ສະໜາມໃນພິທີເປີດສາກ
各代表团在开幕式上入场　新华社 图




ທຸງງານກິລາໂອລິມປິກຄົນພິການສາກົນເຂົ້າສູ່ສະໜາມ
国际残奥委会会旗入场 新华社 图

ເວທາ, ປະດັບປະດາສວນງານກິລາໂອລິມປິກໃນຄໍ່າຄືນນັ້ນສຸດທີ່ງາມຕາ.

ເວລາ 22ໂມງ 41 ນາທີຜູ້ຖືຄັນທຸງ 8 ທ່ານມືຖືຄັນທຸງງານກິລາໂອລິມປິກຄົນພິການສາກົນເຂົ້າສູ່ສະໜາມ, ທຸງງານກິລາໂອລິມປິກຄົນພິການສາກົນຄ່ອຍໆຊັກທຸງຂຶ້ນເສົາທາມກາງສຽງເພງງານກິລາໂອລິມປິກຄົນພິການສາກົນ, ປິວສະບັດຢູ່ໃນກາງເວທາສະໜາມກິລາພ້ອມກັບທຸງແດງ 5 ດາວສ ປ ຈີນ.

ຕໍ່ມາ, ນາງອູຊູນແມວນັກກິລາຄົນພິການຈີນຕ່າງໜ້ານັກກິລາເຂົ້າຮ່ວມການແຂ່ງຂັນໝົດທຸກຄົນ, ທ່ານຫໍກົວຮວາກໍາມະການຕັດສິນບານຕູຄົນຕາບອດຈີນຕ່າງໜ້າບັນດາກໍາມະການ, ເຈົ້າໜ້າທີ່ແລະຊ່າງແບ່ງຊັ້ນຕ່າງກໍ່ປະຕິຍານຕົວ.

ເວລາ 22 ໂມງ 51 ນາທີ, ທອນໄຟງານກິລາໂອລິມປິກຄົນພິການປັກກິ່ງເຂົ້າສູ່ສະໜາມກິລາ. ໃນໄລຍະເວລາ 9 ວັນທີ່ຜ່ານມານັ້ນ, ທອນໄຟງານກິລາໂອລິມປິກຄົນພິການປັກກິ່ງທີ່ເກັບເອົາມາຈາກຫໍຟ້າທຽນຖານປັກກິ່ງສົ່ງຕໍ່ຢູ່ໃນ 11ໂຕເມືອງແຜ່ນດິນໃຫຍ່ຈີນລຽບຕາມສາຍທາງ "ອະລິຍະທໍາປະຊາຊາດຈີນ ", "ຍຸກນິຍົມ "ທ່ານຈີນຊິນນັກກິລາຟັນດາບລົດລໍ້, ທ່ານວູຢູນຫູຜູ້ທີ່ໄດ້ຮັບຫຼຽນຄໍາລອຍນໍ້າ, ທ່ານຈາງຫົງເວີຍຜູ້ທີ່ໄດ້ຮັບຫຼຽນຄໍາເຕັ້ນຍາວທ່ານຈາງໄຫຕົງຜູ້ທີ່ໄດ້ຮັບຫຼຽນຄໍາຍົກນໍ້າໜັກ, ທ່ານຊູນຊາງທິນຜູ້ທີ່ໄດ້ຮັບຫຼຽນຄໍາຄວ່າງລໍາແຫຼມ, ນາງພິງປາລີຜູ້ໄດ້ຮັບຫຼຽນຄໍາຫຼຽນທໍາອິດໃນປະຫວັດສາດງານກິລາໂອລິມປິກຄົນພິການຈີນເປັນຕົ້ນ6ຄົນທີ່ເປັນຜູ້ຖືທອນໄຟຊູທອນໄຟສົ່ງຕໍ່ມືຕໍ່ມືຄ່ອຍໆກ້າວເດີນໄປໜ້າ, ໄດ້ຮັບຄວາມຊົມເຊີຍຢ່າງສຸດອົກສຸດໃຈຈາກຜູ້ຊົມທົ່ວສະໜາມກິລາ.

ເວລາ 22ໂມງ 59 ນາທີ, ທ່ານເຫີປີນຜູ້ຖືທອນໄຟຜູ້ທີ 7 ທີ່ເຄີຍໄດ້ຮັບຫຼຽນຄໍາເຕັ້ນສູງລຽນຕິດ 3 ເທື່ອງານກິລາໂອລິມປິກຄົນພິການຮັບເອົາທອນໄຟທີ່ແທ່ນເມກເຝື້ອມຸງຄຸນໃຕ້ລວມສຸມສາຍຕາຂອງຜູ້ຊົມພາກສະໜາມນັ້ນ, ນັ່ງລົດລໍ້ດຶງເຊືອກປີນຂຶ້ນສູງດ້ວຍສອງມືຂອງຕົນ, ຈົນເຖິງທາດທອນໄຟໃຫຍ່ທີ່ສູງ 39 ແມັດ, ແລ້ວຈູດທາດທອນໄຟງານກິລາໂອລິມປິກຄົນພິການປັກ



ພາກສະໜາມພິທີນັກກິລາເຂົ້າສູ່ສະໜາມ
运动员入场式现场　新华社 图

ກົ່ງ.ແປວໄຟຂອງທອນໄຟງານກິລາໂອລິມປິກຄົນພິການທີ່ໄໝ້ພາງໆກັບໄຟດອກທີ່ພຸ່ງຂຶ້ນນັ້ນສົ່ງແສງເຊື່ອມເຂົ້າກັນ,ໄດ້ຈູດໄຟອາລົມຈິດໃນດວງໃຈຂອງຄົນທັງຫຼາຍຂຶ້ນ,ຢູ່ໃນສະໜາມກິລາມີຄວາມເບີກບານມ່ວນຊື່ນຝົດສະໜັ່ນຫວັ່ນໄຫວ.

ພິທີຈູດທອນໄຟທີ່ມີປະດິດຄິດສ້າງພິເສດນັ້ນ,ໄດ້ສະແດງເຖິງນ້ຳໃຈສ້າງຄວາມເຂັ້ມແຂງ ໂດຍຕົນເອງ,ລື່ນກາຍຂີດຈຳກັດຂອງຕົນ,ໄຕ່ຫາຄວາມຝັນ ແລະ ຢ່າງບໍ່ທໍ້ຖອຍໃຈຊົ່ວນິລັນດອນຂອງຄົນພິການ.




ທ່ານເຫີປິນນັກຖືທອນໄຟຈູດໄຟສັກສິດທອນໄຟຫຼັກແລ້ວຮ້ອງໂຮໄຊໂຍ
火炬手侯斌点燃主火炬后欢呼　新华社 图



## 生命和希望的赞歌

### ——北京残奥会开幕式感动世界

北京奥运会落幕两周之后，中国国家体育场“鸟巢”9月6日晚再度沸腾——北京2008年残奥会盛装开幕。这是奥林匹克精神的延续，是对生命自强不息的礼赞。世界各地收看残奥会开幕式演出的观众为之动容，为之感叹。

# ບົດເພງສັນລະເສີນແຫ່ງ ຄວາມຫວັງແລະຊີວິດ

### ———ພິທີເປີດງານກິລາໂອລິມປິກຄົນພິການປັກກິ່ງສະເທືອນໂລກ



3.ນັກສະແດງໄດ້ສະແດງລາຍການໃນພິທີເປີດງານກິລາໂອລິມປິກຄົນພິການ
演员在开幕式上表演　新华社 图

ພາຍຫລັງງານກິລາໂອລິມປິກປັກກິ່ງປິດສາກລົງສອງອາທິດ, "ຮັງນົກ" ສະໜາມກິລາແຫ່ງ ຊາດ ສປຈີນ ໄດ້ຟົດຟື້ນຂຶ້ນອີກເທື່ອໜຶ່ງໃນຄ່ຳຄືນຂອງວັນທີ 6 ກັນຍາ 2008--ນັ້ນຄືພິທີໄຂງານອັນຄຶກຄື້ນຂອງງານກິລາໂອລິມປິກຄົນພິການປີ 2008 ທີ່ປັກກິ່ງ. ນີ້ແມ່ນການສືບຕໍ່ຈິດໃຈແຫ່ງງານກິລາໂອລິມປິກ, ເຊິ່ງແມ່ນພອນປະເສີດຕໍ່ຊີວິດທີ່ເພີ້ມພູນຂື້ນບໍ່ມີຍາມດັບມອດ. ບັນດາຜູ້ຊົມທີ່ຊົມການສະແດງໃນພິທີເປີດງານກິລາໂອລິມປິກຄົນພິການຢູ່ທົ່ວທຸກມູມໂລກຕ່າງກໍມີຄວາມປະທັບໃຈ ແລະ ຊື່ນຊົມດ້ວຍຄວາມຍິນດີ.

"ຕື່ນເຕັ້ນ ແລະ ຕື້ນຕັນໃຈ"

"ຖ້າຫາກວ່າໃຫ້ຂ້ອຍໃຊ້ຄວາມເວົ້າປະໂຫຍກໜຶ່ງຕີລາຄາພິທີເປີດງານໂອລິມປິກຄົນພິການທີ່ປັກກິ່ງ, ນັ້ນກໍ່ແມ່ນະຍອດຢ້ຽມ, ຟົດຟື້ນ ແລະຕື່ນເຕັ້ນ", ນັ້ນແມ່ນຄຳເວົ້າຂອງໂບກເກີທີ່ເປັນຄົນອາຟຼິກກາໃຕ້ເວົ້າອອກມາໃນເວລາຊົມການຖ່າຍທອດພິທີເປີດງານກິລາໂອລິມປິກຄົນພິການທີ່ປັກກິ່ງຢ່າງຈິງຈັງມາໂດຍຕະຫລອດ.

ໂບກເກີທີ່ມີອາຍຸ 19 ປີໂຊກບໍ່ດີທີ່ເສຍຂາໄປທັງສອງຂ້າງຢູ່ໃນອຸປະຕິເຫດລົດຕຳກັນໃນປີກ່ອນ, ແຕ່ລາວຍັງປະເຊີນໜ້າກັບຊີວິດດ້ວຍທັດສະນະທີ່ເບິ່ງໂລກໃນແງ່ດີທີ່ສຸດ. ລາວເປັນຄົນມັກກິລາ ແລະ ຍຶດໝັ້ນໃນການຝຶກແອບມາໂດຍຕະຫລອດ, ມາເຖິງມື້ນີ້ຄວາມຫວັງອັນຍິ່ງໃຫຍ່ກໍ່ແມ່ນວ່າມື້ໜຶ່ງສາມາດຕາງໜ້າໃຫ້ອາຟຼິກກາໃຕ້ໄປເຂົ້າຮ່ວມກິລາໂອລິມປິກຄົນພິການ. ລາວເວົ້າວ່າ, ການສະແດງທີ່ຍອດຢ້ຽມແລະເວທີອັນຍິ່ງໃຫຍ່ມະໂຫລານຂອງພິທີເປີດແລະປິດງານກິລາໂອລິມປິກຄົນພິການທີ່ປັກກິ່ງນັ້ນໄດ້ຝາກຄວາມປະທັບໃຈອັນເລິກເຊິ່ງທີ່ສຸດໃຫ້ແກ່ລາວ. ສິ່ງທີ່ເຮັດໃຫ້ລາວຄຶດບໍ່ເຖິງເລີຍນັ້ນແມ່ນພິທີເປີດງານກິລາໂອລິມປິກຄົນພິການທີ່ປັກກິ່ງຈັ່ງໃດຈຶ່ງເຮັດໄດ້ຍອດຢ້ຽມຄືຈັ່ງຊີ້; ການອອກແບບພິທີເປີດງານ, ການສະແດງຢູ່ເທິງເວທີ ແລະ ຄວາມຟົດຟື້ນຂອງທ່ານຜູ້ຊົມໄດ້ເຮັດໃຫ້ເກີດຄວາມຕື່ນເຕັ້ນຕື້ນ


ການສະແດງສິລະປະໃນພິທີເປີດງານກິລາໂອລິມປິກຄົນພິການ
残奥会开幕式上的表演　新华社 图



ການສະແດງສິລະປະໃນພິທີເປີດງານກິລາໂອລິມປິກຄົນພິການ
开幕式上的文艺表演　新华社 图



ວັນທີ6ກັນຍາ,ບັນດາເພື່ອນເດັກນ້ອຍທີ່ມາຈາກຈີນ,ກາເມີລຸນ,ອິດສະລາແອນ,ປາແລັດສະຕິນ,ອຽກລັງ(ແຕ່ຊ້າຍຫາຂວາ)ຊູຮູບພາບນົກກາງແກຂຶ້ນຮອງຮັບຮູບຈຳລອງນົກກາງແກດ້ວຍໄຟດອກໃນອາກາດທຽນອານເໝີນ
9 月 6 日，来自中国、喀麦隆、以色列、巴基斯坦和爱尔兰（从左到右）的小朋友举起和平鸽图片与天安门上空的和平鸽造型焰火遥相呼应　新华社 图





ການສະແດງສິລະປະໃນພິທີເປີດງານກິລາໂອລິມປິກຄົນພິການ
开幕式上的文艺表演
新华社 图



ການສະແດງສິລະປະໃນພິທີເປີດງານກິລາໂອລິມປິກຄົນພິການ
开幕式上的文艺表演
新华社 图

ຕັນໃຈທີ່ສຸດ.

ເມື່ອເວລາແນມເຫັນຄົນພິການຈຳນວນຫລວງຫລາຍເຂົ້າຮ່ວມການສະແດງໃນພິທີເປີດງານ, ໂດຍສະເພາະແມ່ນໃນເວລາເບິ່ງການສະແດງຟ້ອນ "ສະບາຍດີ,ໝູ່ດາວ "ທີ່ສະແດງ ໂດຍນາງສາວຫູໜວກຈຳນວນ 300 ຄົນນັ້ນ,ບັນດາຜູ້ຊົມຢູ່ຕໍ່ໜ້າໂທລະທັດຈໍໃຫຍ່ໄດ້ຕອບຮັບດ້ວຍການຕົບມືຊົມເຊີຍຢ່າງບໍ່ຂາດສາຍ.

ອາເລັກຊັນເດີ,ຮອງປະທານຜູ້ທີສອງຂອງຄະນະກຳມະການກິລາໂອລິມປິກອາຟຼິກກາໃຕ້ໄດ້ເວົ້າຕໍ່ນັກຂ່າວໃນເວລາຖືກສຳພາດວ່າ,ເພິ່ນກໍເບິ່ງການສະແດງໃນພິທີເປີດງານກິລາໂອລິມປິກຄົນພິການປັກກິ່ງ,ຄວາມຮູ້ສຶກອັນສຸດຊຶ້ງຂອງເພິ່ນກໍແມ່ນ "ຕື່ນເຕັ້ນ ແລະ ຕື້ນຕັນໃຈ",ເພິ່ນມີເຫດຜົນຢ່າງພຽງພໍທີ່ເຊື່ອໝັ້ນວ່າງານກິລາໂອລິມປິກຄົນພິການປັກກິ່ງກໍ່ເຊັ່ນດຽວກັນກັບງານກິລາໂອລິມປິກປັກກິ່ງທີ່ຫາກໍ່ສິ້ນສຸດລົງໄປນັ້ນຈະໃຫ້ຄວາມມະຫັດສະຈັນແກ່ໂລກມະນຸດ,ລັດຖະບານຈີນແນ່ນອນກໍ່ສາມາດບັນລຸໄດ້ຕາມຄຳໝັ້ນສັນຍາໃນການທີ່ຈະເຮັດໃຫ້ "ງານກິລາໂອລິມປິກທັງສອງນັ້ນມີຄວາມຍອດຢ້ຽມເຊັ່ນດຽວກັນ".

"ສຽງແຫ່ງທຳມະຊາດ"

ນັກຂ່າວແລະບັນນາທິການໜັງສືພິມລາຍວັນພາສາຈີນ "ຊິງໂຈວຢືປາວ "ຂອງກຳປູເຈຍຕອນແລງມື້ນັ້ນໄດ້ພາກັນເຕົ້າໂຮມຢ່າງມ່ວນຊື່ນເພື່ອຊົມລາຍການພິທີເປີດງານກິລາໂອລິມປິກຄົນພິການ.ການຍິງສະແດງໄຟດອກທີ່ໂດດເດັ່ນງົດງາມ ແລະ






ທ່ານຈິນຢວນຫ້ວຍນັກເສບປີອາໂນຄົນຕາບອດໄດ້ຫຼິ້ນປີອາໂນໃນພິທີເປີດສາກ
盲人钢琴家金元辉在开幕式上演奏　新华社 图



ນາງຈຽງອີເມີຍ,ນາງລີເຢຍ,ນາງລີມົງນັກຟ້ອນຄົນພິການເປັນຕົ້ນສະແດງລາຍການ "ວາດຟ້ອນທີ່ບໍ່ມີຍາມຢຸດເຊົາ" ໃນພິທີເປີດສາກ
残疾人舞蹈演员汪伊美、李月、吕蒙等在开幕式上表演节目《永不停跳的舞步》 新华社 图





ການສະແດງສິລະປະໃນພິທີເປີດງານກິລາໂອລິມປິກຄົນພິການ
开幕式上的文艺表演　新华社 图

ນັກຮ້ອງລິວເຕີຮົວ(ຂວາ),ນາງຫານຫົງຮ້ອງເພງຫົວເລື່ອງງານກິລາໂອລິມປິກຄົນພິການໃນພິທີເປີດສາກ
歌手刘德华（右）、韩红在开幕式上演唱残奥会主题歌
新华社 图

ແປກໃໝ່ນັ້ນໄດ້ດຶງດູດສາຍຕາຂອງພວກເຂົາ. ພາຍຫລັງທີ່ນັກກິລາກ້າວເຂົ້າສູ່ສະໜາມກິລາແລ້ວ, ການສະແດງສິລະປະກຳທີ່ໂດດເດັ່ນຍອດຢ້ຽມຢ່າງຫລວງຫລາຍຈົນລາຍຫູລາຍຕາໄປໝົດ. ຈັນ ໂກສີ, ນັກຂ່າວຂອງໜັງສືພິມດັ່ງກ່າວເວົ້າວ່າ, ສິ່ງທີ່ປະທັບໃຈຢ່າງເລິກເຊິ່ງທີ່ສຸດສຳລັບລາວແມ່ນການຮ້ອງເພງ "ຈັກກະວານ" ທີ່ຮ້ອງໂດຍນັກຮ້ອງຕາບອດຢາງຣາຍຖາວ. ລາວຊຸເວົ້າວ່າ, ນັກຮ້ອງຜູ້ນີ້ໃນເດືອນມັງກອນປີນີ້ໄດ້ມາສະແດງຢູ່ກຳປູເຈຍກັບຄະນະນັກສິລະປິນຄົນພິການຂອງຈີນ, ການສະແດງຂອງລາວໃນເວລານັ້ນກໍ່ໄດ້ຮັບການຕ້ອນຮັບຢ່າງອົບອຸ່ນທີ່ສຸດຈາກຜູ້ຊົມຢູ່ກຳປູເຈຍ, ໃນເທື່ອນີ້ອີກເທື່ອໜຶ່ງໄດ້ເຫັນລາວຢູ່ໃນງານພິທີເປີດກິລາໂອລິມປິກຄົນພິການ, ຄົນທ້ອງຖິ່ນແຫ່ງນີ້ລ້ວນແຕ່ມີຄວາມຮູ້ສຶກລຶ້ງເຄີຍເປັນພິເສດ, "ບົດເພງຂອງລາວກໍ່ຄ້າຍຄືກັບສຽງແຫ່ງທຳມະຊາດທີ່ສະເທືອນໃຈຄົນ".

ໃນເວລານາທີແຫ່ງການຈູດທອນໄຟຫລັກຂອງງານກິລາໂອລິມປິກ, ບັນດານັກຂ່າວ ແລະ ບັນນາທິການຂອງໜັງສືພິມດັ່ງກ່າວພາກັນຄອງຄອຍຄຳຕອບຂອງປິດສະໜາທີ່ວ່າຜູ້ຖືທອນໄຟຈະຈູດໄຟນັ້ນຄືແນວໃດ. ພວກເຂົາເວົ້າວ່າ, ຖ້າທຽບໃສ່ກັບ "ການບິນຢູ່ເທິງອາກາດ" ຂອງຫລີນິງໃນພິທີເປີດງານກິລາໂອລິມປິກປັກກິ່ງນັ້ນ, ອັນນີ້ກໍ່ແມ່ນ "ການບິນຢູ່ເທິງອາກາດ" ອີກແນວໜຶ່ງ.







ນັກສະແດງໄດ້ສະແດງລາຍການຟ້ອນ "ບິນເຈີດ" ໃນພິທີເປີດງານກິລາໂອລິມປິກຄົນພິການ
演员在开幕式上表演舞蹈《飞翔》
新华社 图



ຈັນ ໂກສີເວົ້າວ່າ, "ຜູ້ຖືທອນໄຟທີ່ເປັນຄົນພິການຜູ້ນີ້ໄດ້ອາໃສສອງມືຂອງຕົນຄ່ອຍໆກ້າວເຂົ້າໄປຫາເປົ້າໝາຍເທື່ອລະໜ້ອຍ, ເຊິ່ງນັ້ນມັນໄດ້ສະແດງອອກເຖິງຄວາມມຸ້ງມາດປາດຖະໜາທີ່ໝັ້ນໜຽວບໍ່ຍອມທໍ້ຖອຍຢ່າງໜຶ່ງ".

"ປຸກລະດົມໃຈ ແລະ ໃຫ້ກຳລັງໃຈ"

ບໍລິສັດກະຈາຍສຽງອອກອາກາດຂອງອັງກິດໄດ້ດຳເນີນການຖ່າຍທອດສົດພິທີເປີດງານກິລາ ໂອລິມປິກຄົນພິການ. ຜູ້ຈັດລາຍການແຊູບາວຕົງ ແລະ ສະຕີບຊູານໄດ້ໃຊ້ບັນດາຄຳສັບເຊັ່ນ: "ມະຫັດສະຈັນ", "ເຮັດໃຫ້ຄົນປະທັບໃຈຢ່າງເລິກເຊິ່ງ" ເພື່ອຕີລາຄາຢ່າງສູງຕໍ່ການສະແດງທີ່ ຍອດຢ້ຽມຂອງພິທີເປີດງານ. ຊູານຍ້ອງຍໍຢ່າງບໍ່ຂາດປາກຕໍ່ນັກສະແດງໜຸ່ມໜ້ອຍທັງຫລາຍ, ເຊິ່ງເວົ້າວ່າພວກເຂົາແມ່ນ "ຜູ້ຕາງໜ້າທີ່ດີເລີດຂອງເດັກນ້ອຍຈີນ, ແນ່ນອນຈະເຮັດໃຫ້ຣຸ່ນຄົນເຢົາວະຊົນຈີນໄດ້ຮັບການປຸກລະດົມໃຈ ແລະ ໃຫ້ກຳລັງໃຈ".

ເງູທອມສັນອະດີດນັກກິລາພິການອັງກິດທີ່ເຂົ້າຮ່ວມລາຍການຖ່າຍທອດສົດເວົ້າວ່າ, ແຕ່ກ່ອນພາຍຫລັງການສິ້ນສຸດຂອງພິທີເປີດງານກິລາ ໂອລິມປິກຄົນພິການ, ຜູ້ຊົມຢູ່ສະໜາມມັກຈະອອກຈາກສະໜາມຢ່າງທັນທີ, ແຕ່ຫລັງຈາກພິທີເປີດງານກິລາ ໂອລິມປິກຄົນພິການຢູ່ປັກກິ່ງສິ້ນສຸດລົງຜູ້ຊົມທັງຫລາຍແມ່ນຍັງບໍ່ຍອມປາກອອກຈາກສະໜາມ, ອັນນີ້ແມ່ນຍ້ອນວ່າມີຄົນພິການ




ບັນດານັກສະແດງໄດ້ສະແດງລາຍການຟ້ອນ “ທາງແລ່ນຂອງຂ້ອຍ”
ໃນພິທີຕ້ອນຮັບຊົມເຊີຍເປີດງານກິລາໂອລິມປິກຄົນພິການ
演员们在开幕式欢迎仪式上表演《我的跑道》 新华社 图



ນາງພິທີການໃນພິທີເປີດງານກິລາໂອລິມປິກຄົນພິການ
开幕式上的礼仪小姐　新华社 图

ເປັນຈຳນວນຫລວງຫລາຍ ເຊັ່ນນີ້ເຂົ້າຮ່ວມການສະແດງຈຶ່ງເຮັດໃຫ້ຜູ້ຊົມມີຄວາມຕື່ນເຕັ້ນເປັນພິເສດ.

"ເຄົາລົບນັບຖື ແລະ ເປັນຫ່ວງເປັນໃຍ"

ນັກຈັດລາຍການຂອງໂທລະພາບແຫ່ງຊາດ ແລະ ຊ່ອງໂທລະພາບກິລາຂອງອີຕາລີໄດ້ເວົ້າໃນເວລາຖ່າຍທອດສົດພິທີເປີດງານກິລາໂອລິມປິກຄົນພິການປັກກິ່ງວ່າ, ພາຍຫລັງປັກກິ່ງຈັດງານກິລາໂອລິມປິກສຳເລັດ, ພິທີເປີດງານກິລາໂອລິມປິກຄົນພິການໄດ້ເຮັດໃຫ້ປັກກິ່ງກາຍເປັນຈຸດສຸມແຫ່ງຄວາມສົນໃຈຂອງໂລກອີກເທື່ອໜຶ່ງ, ນັກກິລາຄົນພິການໄດ້ຊື່ນຊົມຄ່ຳຄືນແຫ່ງຄວາມມ່ວນຊື່ນທີ່ເປັນປາງບູນໜຶ່ງອີກຢູ່ສະໜາມກິລາ "ຮັງນົກ".

ເວບໄຊ "ໜັງສືພິມກິລາມິລານ" ທີ່ເປັນໜັງສືພິມກິລາໃຫຍ່ທີ່ສຸດຂອງອີຕາລີໃນວັນທີ 6 ໄດ້ອອກບົດຂຽນຂອງປີແອເຈໂລໂມລີນາໂລທີ່ເປັນນັກຂ່າວຖືສິ່ງໄປພິເສດ, ໄດ້ຂຽນບົດຂຽນວ່າຫລັງຈາກທີ່ ສປ ຈີນໄດ້ສຳເລັດການຈັດງານກິລາໂອລິມປິກປັກກິ່ງແລ້ວ, ຈະສືບຕໍ່ເປີດກ້ວາງພາບພົດຂອງຈີນສູ່ໂລກພາຍນອກທັງນຳເອົາຄວາມຊື່ນຊົມຍິນດີໄປສູ່ປະຊາຄົມໂລກໂດຍຜ່ານງານກິລາໂອລິມປິກຄົນພິການ.

ປວງຊົນຈຳນວນບໍ່ໜ້ອຍຂອງອີຕາລີໄດ້ຊົມການຖ່າຍທອດສົດທາງໂທລະພາບກ່ຽວກັບພິທີເປີດງານກິລາໂອລິມປິກຄົນພິການຢູ່ເຮືອນຂອງຕົນເອງ. ໃນເວລາຕອບສຳພາດທາງໂທລະສັບຕໍ່ນັກຂ່າວຊິນຮວານັ້ນທ່ານມານຊີນີປະທານສະມາຄົມມິດຕະພາບອີຕາລີ-ຈີນໄດ້ເວົ້າວ່າ, ເພິ່ນ ແລະ ຄົນໃນເຮືອນເພິ່ນໄດ້ເບິ່ງແລ້ວແມ່ນມີຄວາມຮູ້ສຶກຕື້ນຕັນໃຈຫລາຍເວທີສະແດງແມ່ນຍິ່ງໃຫຍ່ມະໂຫລານ, ການຈັດຕັ້ງວຽກງານແມ່ນມີຄວາມພົ້ນເດັ່ນຫລາຍ. ເພິ່ນຍັງເວົ້າຕື່ມວ່າ, ໃນພິທີເປີດງານທັງໝົດແມ່ນການສະແດງທີ່ໂດດເດັ່ນຄັ້ງໜຶ່ງທີ່ຊີ້ໃຫ້ເຫັນການປ່ຽນແປງຂອງປະເທດຈີນ, ເຊິ່ງມັນໄດ້ສ່ອງແສງໃຫ້ເຫັນເຖິງຄວາມເຄົາລົບນັບຖື ແລະ ຄວາມເປັນຫ່ວງເປັນໃຍຕໍ່ຄົນພິການ, ແມ່ນມີຄວາມຍອດຢ້ຽມເຊັ່ນດຽວກັນກັບການສະແດງໃນງານກິລາໂອລິມປິກ.

"ຍອດຢ້ຽມເຊັ່ນດຽວກັນ"

ຢູ່ຍີ່ປຸ່ນ, ຜູ້ຊົມຈຳນວນບໍ່ໜ້ອຍເມື່ອໄດ້ຊົມພິທີເປີດງານຜ່ານການຖ່າຍທອດຂອງສະຖານີໂທລະພາບ NHK ແລ້ວຕ່າງກໍຊົມເຊີຍວ່າພິທີເປີດງານແມ່ນຄຶກຄື້ນຍອດຢ້ຽມເຮັດໃຫ້ຄົນມີຄວາມຕື່ນເຕັ້ນ.



ເຈົ້າໜ້າທີ່ຂອງພະແນກໂຄສະນາວິສາຫະກິດຂອງບໍລິສັດແຫ່ງໜຶ່ງຂອງຍີ່ປຸ່ນໄດ້ຕອບການສໍາພາດຂອງນັກຂ່າວຊິນຮວາວ່າ, ນີ້ແມ່ນເທື່ອທໍາອິດຂອງລາວທີ່ເບິ່ງການສະແດງພິທີເປີດງານກິລາໂອລິມປິກຄົນພິການ, ມີຄວາມຮູ້ສຶກວ່າລະດັບຄວາມຍອດຢ້ຽມຂອງມັນແມ່ນບໍ່ໜ້ອຍໜ້າງານກິລາໂອລິມປິກ, ເຊິ່ງເຮັດໃຫ້ຄົນຕື້ນຕັນໃຈຫລາຍ.

ຄູຝຶກຂອງໂຮງຮຽນບານເຕະແຫ່ງໜຶ່ງຂອງຍີ່ປຸ່ນແມ່ນມີຄວາມມັກຮັກເປັນພິເສດຕໍ່ກິລາ. ເມື່ອເວລາລາວ ແລະ ຄົນໃນຄອບຄົວລາວພ້ອມກັນເບິ່ງພິທີເປີດງານກິລາໂອລິມປິກຄົນພິການແລ້ວເວົ້າວ່າ, ການສະແດງຕ່າງໆເປັນຕົ້ນແມ່ນການສະແດງ "ນົກດວງຕາເວັນ" ແລະ "ວາດຟ້ອນທີ່ບໍ່ມີຍາມຢຸດເຊົາ" ນັ້ນໄດ້ເຮັດໃຫ້ລາວຮູ້ສຶກໃຈຂວ້າມໃຈຫວາຍ. ລາວເວົ້າວ່າ, "ຂ້ອຍໄດ້



ນັກຖືທອນໄຟເຫົາປິນຈູດໄຟສັກສິດທອນໄຟຫຼັກ
火炬手侯斌点燃主火炬　新华社 图



ການສະແດງໄຟດອກໃນອາກາດທຽນອານເໝິນ
北京天安门广场上空的焰火表演　新华社 图

ເບິ່ງການສະແດງທີ່ຮູ້ສຶກມີຄວາມທັນສະໄໝຢ່າງເຕັມປ່ຽມ ແລະລວມມີທັງເອກກະລັກຈໍາເພາະຂອງຈີນ, ໂດຍສະເພາະແມ່ນນັກສະແດງຄົນພິການທີ່ຜ່ານຜ່າອຸປະສັກຂອງການພິການທາງແຂນຂາແລະອະໄວຍະວະຕ່າງໆ, ເຊິ່ງໄດ້ສະແດງອອກເຖິງລະດັບຂອງສິລະປະວັນນະຄະດີທີ່ເລີດລໍ້າເໜືອລະດັບ ແລະ ໄດ້ຮັບການຊົມຊົມຍິນດີຈາກຄົນທົ່ວໄປ".

ຄູຝຶກກິລາຜູ້ນີ້ຊື່ອອກວ່າ, ລາວຈະຢູ່ຕໍ່ໜ້າໂທລະທັດເພື່ອເປັນກໍາລັງໃຈໃຫ້ແກ່ນັກກິລາຄົນພິການຂອງຍີ່ປຸ່ນ, ມີຄວາມຫວັງວ່າຈະໄດ້ເຫັນພວກເຂົາໄດ້ຮັບຜົນສໍາເລັດຢູ່ໃນລາຍການແຂ່ງຂັນຕ່າງໆເປັນຕົ້ນແມ່ນຢູໂດ ແລະ ແລ່ນມາລາທອນ. ລາວໄດ້ກ່າວອວຍພອນວ່າ: "ປັກກິ່ງໄດ້ເຮັດສໍາເລັດການຈັດງານກິລາໂອລິມປິກແລ້ວ, ເຊື່ອໝັ້ນວ່າງານກິລາໂອລິມປິກຄົນພິການກໍ່ຈະມີຄວາມຍອດຢ້ຽມເຊັ່ນດຽວກັນ. ປັກກິ່ງສູ້ສູ້!"

# ຈີນໃຫ້ຄົນພິການຂອງປະເທດຕ່າງໆຮູ້ສຶກມີຄວາມອົບອຸ່ນ

## 中国让各国残疾人感到温暖

从“鸟巢”的无障碍设施到长城的残疾人电梯，从志愿者的微笑到全聚德烤鸭店的盲人菜单，中国社会处处体现出对残疾人的关爱。在残奥会期间来到中国的各国残疾人运动员、教练员、官员及游客时时刻刻感受着这种关爱，许多人由衷地表达了自己的心声——感谢中国！



ທ່ານຟີລິບເຄເວີນປະທານງານກິລາໂອລິມປິກຄົນພິການສາກົນສຳຜັດໂຄງປະກອບທີ່ບໍ່ມີສິ່ງກີດຂວາງ
国际残奥委会主席菲利普 · 克雷文在体验无障碍设施　新华社 图




ຜູ້ຊົມຄົນພິການເຂົ້າສູ່ເວທີຊົມການແຂ່ງຂັນຍິງປືນທີ່ສວນໂອລິມປິກປັກກິ່ງຈາກຊ່ອງທາງທີ່ບໍ່ມີສິ່ງກີດຂວາງໃຕ້ການຊ່ວຍເຫຼືອຂອງຜູ້ອາສາສະໝັກ
残疾观众在志愿者帮助下从无障碍通道进入北京奥林匹克公园射箭场看台　新华社 图

Beijing 2008
Paralympic Games

ແຕ່ໂຄງປະກອບທີ່ບໍ່ມີສິ່ງກີດຂວາງຂອງຮັງນົກເຖິງອູ່ໄຟຟ້າຄົນພິການຂອງກຳແພງຍັກ, ແຕ່ຄວາມຍິ້ມແຍ້ມຂອງຜູ້ອາສາສະໝັກເຖິງລາຍການອາຫານຄົນຕາບອດຂອງຮ້ານຂາຍເປັດປັກກິ່ງຈວນຈີເຕີ, ສັງຄົມຂອງຈີນເຕັມໄປດ້ວຍຄວາມເອົາໃຈໃສ່ ແລະ ຄວາມຮັກແພງຕໍ່ຄົນພິການຢູ່ທຸກໆແຫ່ງຫົນ. ນັກກິລາຄົນພິການ, ຄູຝຶກ, ເຈົ້າໜ້າທີ່ແລະແຂກທ່ອງທ່ຽວຕ່າງປະເທດທີ່ມາເຖິງປະເທດຈີນໄລຍະງານກິລາໂອລິມປິກຄົນພິການນັ້ນກໍ່ໄດ້ຮັບຄວາມເອົາໃຈໃສ່ແລະຄວາມຮັກແພງດັ່ງກ່າວນີ້ຄືກັນ, ມີຫຼາຍຕໍ່ຫຼາຍຄົນໄດ້ເວົ້າຄວາມຈິງໃຈຄວາມດ່ຽວ--ຂອບອົກຂອບໃຈປະເທດຈີນ !

"ໝົດທຸກຄົນກໍ່ມີຄວາມອົບອຸ່ນຄືກັນ"

"ສິ່ງທີ່ພວກເຂົາເຈົ້າເຮັດອອກມານັ້ນ, ຂ້ອຍຊອກບໍ່ເຫັນບ່ອນທີ່ບໍ່ຖືກໃຈ". ນາງຜາທີຄານັກກິລາຄົນພິການປີງປອງໂປໂລຍທີ່ໄດ້ເຂົ້າຮ່ວມງານກິລາໂອລິມປິກປັກກິ່ງແລະງານກິລາໂອລິມປິກຄົນພິການປັກກິ່ງພ້ອມກັນສະແດງວ່າ, ຂ້ອຍຢູ່ຈີນຮູ້ສຶກດີຫຼາຍ, ຄົນຈີນຖືຂ້ອຍເໝືອນດັ່ງລູກສາວຂອງລາວເອງ.

ທ່ານຊີເກສນັກກິລາລອຍນ້ຳຄົນພິການຂອງເຢຍລະມັນທີ່



ຜູ້ອາສາສະໝັກສອງຄົນພັນບາດໃຫ້ນັກກິລາທີ່ຖືກບາດເຈັບທີ່ສະໜາມກິລາແຫ່ງຊາດ--ຮັງນົກ
两名志愿者在国家体育场（“鸟巢”）为一位摔倒的运动员包扎　新华社 图



ວັນທີ6ກັນຍາ, "ງົວວາສະໜາໂລໂລ" ໄດ້ຟ້ອນທີ່ສະໜາມແຂ່ງຂັນງານກິລາໂອລິມປິກຄົນພິການປັກກິ່ງ, ພາໃຫ້ບັນດານັກກິລາເປີດໃຈຫົວຂື້ນ
9 月 8 日，“福牛乐乐”在北京残奥会硬地滚球比赛现场翩翩起舞，引得运动员开怀大笑　新华社 图



ຜູ້ປະຕິບັດງານແລະນັກທ່ຽວຊົມທີ່ຄິວລົດໄຟໃຕ້ດິນອາວງຟູຈິງປັກກິ່ງພ້ອມກັນຍົກນັກກິລາຄົນພິການນັ່ງລົດລໍ້ຮົງກົງຜູ້ໜຶ່ງຂຶ້ນສູ່ເທິງໜ້າດິນ
北京地铁王府井站工作人员与游客一起把一名坐轮椅的香港选手抬送到地面上 新华社 图



ພະລາຊະວັງກຸກົງປັກກິ່ງໄດ້ເປີດປະຕູທີ່ບໍ່ມີສິ່ງກີດຂວາງສູ່ນັກທ່ອງທ່ຽວທົ່ວໂລກ
北京故宫向世界游人打开无障碍之门 新华社 图

ເຄີຍເຂົ້າຮ່ວມງານກິລາໂອລິມປິກຄົນພິການ 4 ຄັ້ງເວົ້າວ່າ, "ໂຄງປະກອບທີ່ບໍ່ມີສິ່ງກີດຂວາງບ່ອນນີ້ດີຫຼາຍ, ຂ້ອຍສາມາດລົງລົດຢູ່ບ່ອນທີ່ຫ່າງຈາກຮັ້ວນົກໃກ້ກັນ, ເຂົ້າສູ່ປະຕູກອດກາຄວາມປອດໄພ, ກໍ່ມີຜູ້ອາສາສະໝັກຊ່ວຍຊຸກລົດລໍ້ໃຫ້ຂ້ອຍ, ຂ້ອຍຮູ້ສຶກເປີດອົກເປີດໃຈຫຼາຍ."



ປ້າຍບອກທາງທີ່ບໍ່ມີສິ່ງກີດຂວາງພາຍໃນຄິວລົດໄຟໃຕ້ດິນຕາເວັນຕົກທຽນອານເໝີນ
地铁天安门西站内的无障碍标识牌 新华社 图

ປ້າຍບອກທາງດ້ວຍໂຕໜັງສືຄົນຕາບອດທີ່ພະນັກແຂນພາຍໃນຄິວລົດໄຟໃຕ້ດິນຕາເວັນຕົກທຽນອານເໝີນ
地铁天安门西站内扶手上的盲文指示 新华社 图





ປ້າຍບອກທາງທີ່ບໍ່ມີສິ່ງກີດຂວາງພາຍໃນຄິວລົດໄຟໃຕ້ດິນຊີຕັນ
地铁西单站内的无障碍标识 新华社 图





ຊາວບ້ານຕົງສີປັກກິ່ງເອົາສາຍສ້ອຍມຸງຄຸນທີ່ເຮັດເອງ
ມັດໃສ່ນັກກິລາຄົນພິການເຢຍລະມັນທີ່ມາຢ້ຽມຊົມ
北京东四社区的居民为前来参观的德国残奥会运动员戴上自己编织的吉祥手链 新华社 图



ວັນທີ15ກັນຍາ, ອາວີນັກກິລາໂປໂລຍທີ່ໄດ້ຮັບຜູ້ຊະນະເລີດລາຍການແລ່ນ໘໐໐ແມັດຊັ້ນT46ໃນງານກິລາໂອລິມປິກຄົນພິການປັກກິ່ງເຄີຍຄຸເຂົ່າໄຫ້ພາຍຫລັງເປີກລາງວັນແລ້ວ
9 月 15 日，获得北京残奥会男子 800 米 T46 级决赛冠军的波兰选手阿维曾在颁奖仪式后跪地哭泣 新华社 图

ນັກກິລາໂຮນລັງຍ້ອງຍໍສັນລະເສີນຄວາມອົບອຸ່ນຂອງຜູ້ອາສາສະໝັກງານກິລາໂອລິມປິກຄົນພິການຈີນຢ່າງບໍ່ສຸດຄວາມ. ທ່ານເຊຍຟູສນັກກິລາເຕັນນິດລົດລໍ້ເວົ້າວ່າ, ຢູ່ສະໜາມບິນປັກກິ່ງ, ເມື່ອເວລາຂ້ອຍກົ້ມຫົວເອົາເຄື່ອງຂອງຂ້ອຍ, ກໍ່ໄດ້ມີຜູ້ອາສາສະໝັກຊ່ວຍຂ້ອຍເອົາເຄື່ອງໄວ້ຢູ່ໃນລົດຊຸກແລ້ວ, ຢູ່ໃນບ້ານໂອລິມປິກ, ສະໜາມເຕັນນິດ ແລະ ໂຮງແຮມຂອງພວກເຮົາ, ຜູ້ອາສາສະໝັກໝົດທຸກຄົນກໍ່ຄັກແທ້ ໆ.

ນາງເຟດຊິດນັກກິລາເຕັນນິດລົດລໍ້ອີກຜູ້ໜຶ່ງເຫັນວ່າ, ຈີນໄດ້ປະກອບສ່ວນຄວາມພະຍາຍາມທຸກດ້ານຂອງຕົນເຂົ້າການຊ່ວຍເຫຼືອນັກກິລາຄົນພິການແລ້ວ, ລາວເວົ້າວ່າ, "ໝົດທຸກຄົນກໍ່ມີອາລົມຈິດທີ່ອົບອຸ່ນຄືກັນ, ລາວຢ່າງມາທາບທາມຖາມຂ່າວກັບເຈົ້າ, ຢາກເຂົ້າໃຈເຈົ້າ, ຢາກຖ່າຍຮູບກັບເຈົ້າ, ຖືເຈົ້າຄືດາລາໂອລິມປິກ".

ທ່ານເຈຍ ອັນເຕີອຸເຕີຫົວໜ້າຄະນະງານກິລາໂອລິມປິກຄົນພິການອາເມລິກາເວົ້າວ່າ, ເມື່ອເວລາຄະນະຜູ້ແທນອາເມລິກາລົງຍົນທີ່ສະໜາມບິນສາກົນນະຄອນຫຼວງປັກກິ່ງກໍ່ໄດ້ຮັບ



ຜູ້ອາສາສະໝັກຊ່ວຍນັກກິລາລິຕູອານີຜູ້ໜຶ່ງຈຳກັດລົດລໍ້ໃນລົດບັດ
志愿者在大巴上帮助一名立陶宛运动员固定轮椅 新华社 图

ອາລົມຈິດທີ່ອົບອຸ່ນຈາກເຈົ້າພາບ, ໂດຍສະເພາະດ້ານຈັດສັນເຄື່ອງອຸປະກອນຂອງຄົນພິການ ແລະ ການຕ້ອນຮັບຂອງຜູ້ອາສາສະໝັກ, ເຮັດໃຫ້ພວກເຮົາຮູ້ສຶກສະໜິດສະໜອມ.

## ປັກກິ່ງເຮັດໃຫ້ຄົນຮູ້ສຶກກະຕຸ້ນໃຈ

ຄວາມຮັກຄວາມແພງ ຂອງສັງຄົມຈີນແລະຄວາມຂອບອົກຂອບໃຈຂອງຄົນພິການຈາກປະເທດຕ່າງໆກໍ່ໄດ້ສະເທືອນສິ່ມວນຊົນຂອງໂລກ, ບັນດາປະເທດແລະເຂດແຄວ້ນຕ່າງໆໃນທົ່ວໂລກຢ່າງເລິກເຊິ່ງ, <<ໜັງສືພິມລົດໄຟໃຕ້ດິນລາຍວັນ>>ໂຮນລັງຊີ້




ວັນທີ11ກັນຍາ,ເສຍລິບ ອໍມັນນັກກິລາເອຢິບທີ່ໄດ້ຮັບຜູ້ຊະນະເລີດລາຍການຍົກນໍ້າໜັກຂັ້ນ56ກິໂລໃນງານກິລາໂອລິມປິກຄົນພິການປັກກິ່ງເຄີຍດີໃຈຈົນໄຫ້ໃນພິທີເບີກລາງວັນ
9 月 11 日，获得北京残奥会男子举重 56 公斤级比赛冠军的埃及选手谢里夫 · 奥斯曼在领奖台上喜极而泣　新华社 图



ນັກກິລາຝະລັ່ງຜູ້ໜຶ່ງກຽມຂີ່ລົດຕັກຊີທີ່ບໍ່ມີສິ່ງກີດຂວາງ
一位法国运动员准备乘坐无障碍出租车　新华社 图



ເພື່ອເປັນການເບິ່ງແຍງນັກຂ່າວຄົນພິການ, ໂຕະບໍລິການໃນຫ້ອງການສື່ມວນຊົນໄດ້ຫລຸດຄວາມສູງຂອງໂຕະໃຫ້ຕໍ່າລົງ
为照顾残疾人记者，媒体工作间的服务台降低了工作台面的高度　新华社 图



ອອກວ່າ,ວິທີ ແລະ ໂຄງປະກອບເຮັດໃຫ້ນັກກິລາຄົນພິການອອກເດີນມີຄວາມສະດວກດີ,ເຮັດໃຫ້ຄົນທັງຫຼາຍຮູ້ສຶກມີຄວາມອົບອຸ່ນທີ່ສຸດ,ໄດ້ເຜີຍແຜ່ຂ່າວສານຂອງຊີວິດທຸກຄົນລ້ວນແຕ່ມີຄວາມໝາຍ ແລະ ມີຄຸນຄ່າຄືກັນ.

ຜູ້ບໍລິການຮ້ານເປັດປັກກິ່ງຈວຽນຈີເຕີປັກກິ່ງພວມຮຽນພາສາມືແລະເພີ່ມຕື່ມລາຍການອາຫານຄົນຕາບອດ,ຖະໜົນຊຽວຊູຍໄດ້ເພີ່ມຕື່ມບ່ອນຈອດລົດສະເພາະຄົນພິການ,ສິ່ງເຫຼົ່ານີ້ເຮັດໃຫ້ນັກຂ່າວຂອງ<<ໜັງສືພິມອິນເດຍສະຖານ>>ກະຕືລືລົ້ນທີ່ສຸດ.

ທ່ານອາເບ ອາເອີວາລູຍນັກຂ່າວແອດສະປາຍເລົ່າຄວາມຮູ້ສຶກຂອງຕົນໃນຮັງນົກຕໍ່ສື່ມວນຊົນ, ໂຄງປະກອບທີ່ບໍ່ມີສິ່ງກີດຂວາງດີຫຼາຍ,ຜູ້ອາສາສະໝັກໃນພາກສະໜາມເປັນເຈົ້າການທາບທາມຖາມຂ່າວກັບລາວ ແລະ ເອົາກາເຟໃຫ້ລາວດື່ມ.ສິ່ງທີ່ເຮັດໃຫ້ລາວປະທັບໃຈເລິກທີ່ສຸດນັ້ນແມ່ນຜູ້ຈັດຕັ້ງຈີນຍັງກະກຽມໄວ້ສາຍດ່ວນໂທລະສັບເອີ້ນລົດໃຫ້ນັກຂ່າວຄົນພິການ ແລະ ແຂກທ່ອງທ່ຽວເປັນສະເພາະ,ມີເທື່ອໜຶ່ງລາວກັບມາຈາກສວນຢີຫໍຢວນ,ລາວໂທສາຍດ່ວນບໍ່ຮອດ 10 ນາທີ,ລົດຕັກຊີສະເພາະຄົນພິການຄັນໜຶ່ງກໍ່ໄດ້ປະກົດເຫັນຢູ່ໜ້າຂ້ອຍ.

ບົດຄວາມຂອງ<<ໜັງສືພິມຮ່ວມສຳພັນ>>ສິງກາໂປ



ຄົນພິການຢ້ຽມຢາມຖະໜົນຊຽນເໝີນປັກກິ່ງທີ່ປະຕິສັງຂອນໃໝ່ໃຕ້ການຊ່ວຍເຫຼືອຂອງຜູ້ອາສາສະໝັກ

残疾人在志愿者的帮助下参观修缮一新的北京前门大街　新华社 图

ຊີ້ອອກວ່າ,ປັກກິ່ງອຳນວຍຄວາມສະດວກທຸກໆດ້ານສະເພາະໃຫ້ແກ່ນັກກິລາຄົນພິການ ແລະ ປະທັບໃຈຢ່າງເລິກເຊິ່ງແກ່ຄົນທັງຫຼາຍ.ເຮັດໃຫ້ນັກກິລາຄົນພິການຮູ້ສຶກເປັນໜ້າງຶດແລະເບີກບານໃຈ.ບົດຄວາມ ຊີ້ອອກວ່າ,ແຕ່ບ້ານໂອລິມປິກ ແລະ ການອອກແບບທີ່ບໍ່ມີສິ່ງກີດຂວາງໃນສະໜາມແຂ່ງຂັນທັງໝົດເຖິງຖັນແຖວຜູ້ອາສາສະໝັກທີ່ເປັນວິຊາຊີບຢ່າງມີຄວາມອົບອຸ່ນ ແລະ ການຈັດສັນທຸກປະການຢ່າງເປັນລະບຽບໃນງານກິລາໂອລິມປິກຄົນພິການ,ຄົນທັງຫຼາຍກໍ່ໄດ້ຮັບຮູ້ທ່າທີສົມຈິດສົມໃຈຂອງຝ່າຍເປັນເຈົ້າພາບ,ບໍ່ພຽງແຕ່ເຕັມໄປດ້ວຍຄວາມໃກ້ຊິດຕິດແທດ ແລະ ອາລົມຈິດທີ່ອົບອຸ່ນເທົ່ານັ້ນ,ຍັງສະແດງເຖິງການຮັກສາຫວງແຫນກຽດສັກສີ ແລະ ຄຸນຄ່າຂອງຊີວິດອີກດ້ວຍ.



ຜູ້ອາສາສະໝັກຄົນພິການອາຍຸ25ປີ(ຊາຍໜ້າ)ຕອບບັນຫາໃຫ້ຜູ້ຊົມໃນສາລາບໍລິການຂໍ້ມູນຂ່າວສານພາຍນອກຮັງນົກ

25 岁的残疾人志愿者赵玉明（前左）在国家体育场（“ 鸟巢 ”）外的观众信息服务亭里为观众解答问题　新华社 图




ຄະນະຜູ້ແທນອັງກິດຊູປ້າຍຄຳຂວັນ "ຂອບໃຈປະເທດຈີນ" ເຂົ້າສູ່ສະໜາມ
英国代表团举着"谢谢中国"的横幅进场　新华社 图



ວັນທີ17ກັນຍາ,ງານກິລາໂອລິມປິກຄົນພິການປັກກິ່ງປີ2008ຈັດພິທີປິດສາກຢ່າງຄຶກຄື້ນທີ່ສະໜາມກິລາແຫ່ງຊາດ
9 月 17 日晚，北京 2008 年残奥会闭幕式在国家体育场隆重举行，胡锦涛等党和国家领导人出席闭幕式

# ເກມກິລາໂອລິມປິກຄົນພິການປັກກິ່ງປີ2008 ໄດ້ຈັດພິທີປິດແລ້ວ

## 北京 2008 年残奥会圆满闭幕

北京 2008 年残奥会闭幕式 9 月 17 日晚在国家体育场隆重举行。胡锦涛等党和国家领导人，国际残奥委会主席克雷文，国际奥委会主席罗格，来自世界各国各地区的数千名残疾人运动员、教练员和贵宾，同现场 9 万多名观众一起，热烈庆祝北京残奥会取得圆满成功。

ຕອນຄ່ຳວັນທີ 17 ກັນຍາ,ພິທີອັດງານກິລາໂອລິມປິກຄົນພິການປັກກິ່ງປີ 2008 ໄດ້ຈັດຂຶ້ນທີ່ສະໜາມກິລາແຫ່ງຊາດຢ່າງຄຶກຄື້ນ.ຜູ້ນຳຂອງພັກ ແລະ ລັດທ່ານຫູຈິນທາວປະທານປະເທດຈີນເປັນຕົ້ນ,ທ່ານຟິລິບເຄເວີນປະທານງານກິລາໂອລິມປິກຄົນພິການສາກົນ,ທ່ານຊາກ ຣົກເກປະທານງານກິລາໂອລິມປິກສາກົນ ແລະ ບັນດານັກກິລາ,ຄູຝຶກ ແລະ ແຂກຜູ້ມີກຽດເປັນຈຳນວນຫຼາຍພັນຄົນທີ່ມາຈາກບັນດາປະເທດແລະເຂດແຄ້ວນຕ່າງໆໃນໂລກພ້ອມພຽງກັນກັບຜູ້ຊົມໃນພາກສະໜາມ 90 ກວ່າພັນຄົນສະເຫຼີມສະຫລອງງານກິລາໂອລິມປິກຄົນພິການປັກກິ່ງໄດ້ຮັບຜົນສຳເລັດຢ່າງງົດງາມ.

ການຈັດສັນງານກິລາໂອລິມປິກສອງຄັ້ງນີ້ລ້ວນແຕ່ແມ່ນສວຍສົດງົດງາມຄືກັນ,ແມ່ນຄຳໝັ້ນສັນຍາຂອງຈີນທີ່ມີຕໍ່ທົ່ວໂລກ.ການຈັດຕັ້ງການແຂ່ງຂັນທີ່ດີເດັ່ນ, ໂຄງປະກອບພື້ນຖານບໍ່ມີສິ່ງກີດຂວາງທີ່ຄົບຖ້ວນສົມບູນ, ການບໍລິການແບບບຸກຄະເລີກຂອງງານກິລາໂອລິມປິກຄົນພິການປັກກິ່ງໄດ້ຮັບການຍ້ອງຍໍສັນລະເສີນຢ່າງກວ້າງຂວາງຈາກບັນດານັກກິລາ,ຄູຝຶກ ແລະ



ການສະແດງສິລະປະໃນພິທີປິດງານກິລາໂອລິມປິກຄົນພິການ(ໃບແດງພູຊຽງຊານ)
闭幕式上的文艺表演《香山红叶》　新华社 图






ຄັນທຸງຂອງບັນດາຄະນະຜູ້ແທນເຂົ້າສູ່ສະໜາມ
各代表团旗帜入场　新华社 图




②



ການສະແດງໄຟດອກໃນພິທີປິດງານກິລາໂອລິມປິກຄົນພິການ
闭幕式上的焰火表演　新华社 图



ທ່ານລິວຊີປະທານຄະນະຈັດຕັ້ງງານກິລາໂອລິມປິກປັກກິ່ງກ່າວຄຳປາໄສໃນພິທີປິດສາກ
北京奥组委主席刘淇在闭幕式上致辞　新华社 图



ທ່ານຟີລິບເຄເວີນປະທານງານກິລາໂອລິມປິກຄົນພິການສາກົນແກ່ວງທຸງງານກິລາໂອລິມປິກຄົນພິການສາກົນໃນພິທີມອບຮັບລັບທຸງ
国际残奥委会主席克雷文在交接旗仪式上挥舞国际残奥委会会旗　新华社 图

ປະຊາຄົມໂລກ. ຢູ່ໃນສະໜາມແຂ່ງຂັນກິລາໂອລິມປິກ,ນັກກິລາຄົນພິການ 4000 ກວ່າຄົນທີ່ມາຈາກ 147 ປະເທດແລະເຂດແຄວ້ນ ສູ້ຊົນຢ່າງກ້າແກ່ນ,ບຸກເບີກບືນໜ້າ,ໄດ້ສ້າງສະຖິຕິໃໝ່ໂລກຂອງຄົນພິການ 279 ລາຍແລະສະຖິຕິໃໝ່ໂອລິມປິກຄົນພິການ 339 ລາຍ.ຄະນະຜູ້ແທນຈີນໄດ້ຮັບຫຼຽນຄຳ 89 ຫຼຽນ,ຫຼຽນລາງວັນ 211 ຫຼຽນເປັນອັນດັບທີ 1 ຂອງຫຼຽນຄຳແລະຫຼຽນລາງວັນ,ໄດ້ປະດິດສ້າງຜົນງານດີທີ່ສຸດຂອງຄະນະຜູ້ແທນກິລາຈີນເຊິ່ງເຂົ້າຮ່ວມງານກິລາໂອລິມປິກຄົນພິການທີ່ຜ່ານມາ.



ຜູ້ແທນອາສາສະໝັກສະແດງຄວາມນັບຖືແກ່ຜູ້ຊົມພາຍຫລັງໄດ້ຮັບຊໍ່ດອກໄມ້
志愿者代表接受鲜花后向观众致意　新华社 图







ທ່ານຫູຈິນທາວປະທານປະເທດຈີນແລະທ່ານຟີລິບເຄເວີນປະທານງານກິລາໂອລິມປິກຄົນພິການສາກົນໂບກມືສະແດງຄວາມນັບຖືຕໍ່ບັນດາຜູ້ຊົມໃນພິທີປິດສາກ
国家主席胡锦涛同国际残奥委会主席克雷文在闭幕式上向大家热情挥手致意
新华社 图

ປະມານ 19 ໂມງ, ບັນດາຄະນະຜູ້ແທນແລະນັກກິລາຕ່າງປະເທດພ້ອມກັນເຂົ້າສູ່ສະໜາມຈາກຊ່ອງທາງ 4 ເສັ້ນ, ຜູ້ຊົມໃນພາກສະໜາມຕົບມືຊົມເຊີຍສະແດງຄວາມນັບຖືມາຍັງນັກກິລາຢ່າງຈິງໃຈ.

19ໂມງ 56 ນາທີ, ທ່ານຫູຈິນທາວ, ທ່ານຈຽງເຈີມິງ, ທ່ານຟີລິບເຄເວີນ, ທ່ານຊາກຣົກເກມາສູ່ເວທີປະທານໃນທາມກາງສຽງດົນຕີທີ່ມ່ວນໆ. ໂບກມືສະແດງຄວາມນັບຖືຕໍ່ຜູ້ຊົມທັງຫຼາຍ. ທົ່ວທັງສະໜາມເກີດມີສຽງຕົບມືຊົມເຊີຍຢ່າງຟົດຟື້ນ !

ໃນພາບຈໍເອເລັກຕຼົງທັງສອງແຫ່ງໃນສະໜາມກິລາໄດ້ສະແດງພາບຮູບທີ່ລືມຍາກຂອງງານກິລາໂອລິມປິກຄົນພິການປັກກິ່ງເປັນພາບເປັນພາບອອກມາ, ໄຟດອກເປັນຊໍ່ພຸ່ງຂຶ້ນຈາກແຕ່ລະທິດເບື້ອງບານຢູ່ກາງເວຫາຮັງນົກ. ງານກິລາໂອລິມປິກຄົນພິການປັກກິ່ງເລີ່ມຕົ້ນປິດສາກເປັນທາງການ.



ຜູ້ໄດ້ຮັບລາງວັນ "ສູ້ຊົນຢ່າງກ້າແກ່ນ" ໄດ້ສະແດງຄວາມນັບຖືແກ່ຜູ້ຊົມໃນພິທີເບີກລາງວັນ
顽强拼搏奖获得者在颁奖台上向观众致意 新华社 图






ຄັນທຸງຂອງບັນດາຄະນະຜູ້ແທນເຂົ້າສູ່ສະໜາມ
各代表团旗帜入场 新华社 图



ການສະແດງສິລະປະໃນພິທີປິດງານກິລາໂອລິມປິກຄົນພິການ(ຈົດໝາຍຝາກໃຫ້ອະນາຄົດ)
闭幕式上的文艺表演《给未来的信》 新华社 图

ກອງດຸລິຍາງບັນເລງເພງຊາດຈີນ, ທຸງຊາດ 5 ດາວຈີນທີ່ແດງສົດຄ່ອຍໆຊັກທຸງຂຶ້ນເສົາໃນທາມກາງເພງຊາດທີ່ດັງກ້ອງກັງວານ. ນັກຖືທຸງ 147 ຄົນໄດ້ຖືທຸງຂອງບັນດາຄະນະຜູ້ແທນທີ່ເຂົ້າຮ່ວມງານກິລາໂອລິມປິກປັກກິ່ງເຂົ້າສູ່ສະໜາມໃນສຽງຮ້ອງໂຮໄຊໂຍຂອງຜູ້ຊົມທົ່ວພາກສະໜາມຢ່າງຟົດຟື້ນ.

ຕໍ່ມາ, ໄດ້ຈັດພິທີເບີກລາງວັນ "ສູ້ຊົນຢ່າງກ້າແກ່ນ", ທ່ານໄສອິເຕີ ກໍໄໜມນັກກິລາແລ່ນລານຂອງປານາມາ ແລະ ທ່ານ



ການສະແດງສິລະປະໃນພິທີປິດງານກິລາໂອລິມປິກຄົນພິການ(ຝາກໄວ້ໃຫ້ອະນາຄົດ)
闭幕式上的文艺表演《寄往未来》 新华社 图






ການສະແດງສິລະປະໃນພິທີປິດງານກິລາໂອລິມປິກຄົນພິການ
闭幕式上的文艺表演　新华社 图



ການສະແດງສິລະປະໃນພິທີປິດງານກິລາໂອລິມປິກຄົນພິການ
闭幕式上的文艺表演　新华社 图



ການສະແດງສິລະປະໃນພິທີປິດງານກິລາໂອລິມປິກຄົນພິການ
闭幕式上的文艺表演　新华社 图

ນາທະລິຕຸທໍອິນັກກິລາລອຍນ້ຳຂອງອາຟຼິກກາໃຕ້ໄດ້ຮັບ "ຫຼຽນສູ້ຊົນຢ່າງກ້າແກ່ນ" ຂອງງານກິລາໂອລິມປິກປັກກິ່ງ.

ເສັ້ນໃບໄມ້ໄຜປິວສະບັດ, ແສງສະຫວ່າງສ່ອງໄປໃຈກາງສະໜາມກິລາກາຍເປັນເດີ່ນຫຍ້າສີຂຽວແຜ່ນໜຶ່ງ......ການສະແດງສິລະປະວັນນະຄະດີຂະໜາດໃຫຍ່ເລີ່ມຕົ້ນ. ການສະແດງທີ່ວທັງຮອບຖືເອົາ "ຈົດໝາຍຝາກໃຫ້ອະນາຄົດ" ສະບັບໜຶ່ງເປັນສາຍແດງສົ່ງຄຳອວຍພອນຢ່າງຈິງໃຈທີ່ສຸດຂອງປະຊາຊົນ



ການສະແດງສິລະປະໃນພິທີປິດງານກິລາໂອລິມປິກຄົນພິການ
(ເກັບກ່ຽວ)
闭幕式上的文艺表演《收获》 新华社 图



ການສະແດງສິລະປະໃນພິທີປິດງານກິລາໂອລິມປິກຄົນພິການ
(ລະບາຍນ້ຳ)
闭幕式上的文艺表演《灌溉》 新华社 图



ການສະແດງສິລະປະໃນພິທີປິດງານກິລາໂອລິມປິກຄົນພິການ
闭幕式上的文艺表演 新华社 图



ວັນທີ17ກັນຍາ,ງານກິລາໂອລິມປິກຄົນພິການປັກກິ່ງປີ2008ຈັດພິທີປິດສາກຢ່າງຄຶກຄື້ນທີ່ສະໜາມກິລາແຫ່ງຊາ
9 月 17 日，北京 2008 年残奥会闭幕式在国家体育场举行。图为闭幕式现场 新华社 图

ຈີນມາຍັງເພື່ອນມິດຄົນພິການທົ່ວໂລກະ ສ້າງຄວາມເຂັ້ມແຂງໂດຍຕົນເອງ,ໄດ້ຮັບຄວາມສຸກສຳຣານ.

ການສະແດງສິລະປະວັນນະຄະດີ<<ຫົດລະບາຍນ້ຳ>>, <<ເກັບກ່ຽວ>>,<<ສະເຫຼີມສະຫຼອງ>>,ມີສີສັນແວວວາວ,ອຸ່ນອຽນກະຕຸ້ນໃຈ,ເຮັດໃຫ້ຜູ້ຊົມທົ່ວສະໜາມໄດ້ຮັບຄວາມກະຕຸ້ນຕັນໃຈຢ່າງເລິກເຊິ່ງ.

ໃນສຽງດົນຕີທີ່ກະຕືລືລົ້ນ,ບຸລຸດໄປສານີເປັນຈຳນວນຫຼາຍຮ້ອຍຄົນຄ່ອຍໆບິນຂຶ້ນກາງເວຫາ,ເຫມືອນດັ່ງນົກທັງສິ່ງຈິດໝາຍທີ່ບິນຢູ່ໃນກາງຫາວ.ພ້ອມພຽງກັນນັ້ນ,ບຸລຸດໄປສານີແບບກະຕູບເອົາບັດອວຍພອນທີ່ຜູ້ຊົມຂຽນໃຫ້ນັ້ນປ້ອນເຂົ້າສູ່ຕູ້ໄປສານີໃນສະໜາມກິລາ,ບັດອວຍພອນນຳເອົາຄຳອວຍພອນຂອງປັກກິ່ງຝາກໄປສູ່ທາງໄກ....ໜ້າສະໜາມ<<ຝາກໄວ້ໃຫ້ອະນາຄົດ>>ໃນການສະແດງສິລະປະວັນນະຄະດີມີທ່າສະຫງ່າອົງອາດ ແລະ ມະໂຫລານ,ເລັ່ງໃຫ້ການສະແດງໄປສູ່ກະແສສູງ.

ຫລັງຈາກການສະແດງສິ້ນສຸດລົງແລ້ວທ່ານລິວຊີປະທານງານກິລາໂອລິມປິກປັກກິ່ງກ່າວຄຳປາໄສກ່ອນ,ຕໍ່ມາແມ່ນທ່ານຟີລິບເຄເວີນປະທານງານກິລາໂອລິມຄົນພິການສາກົນກ່າວຄຳປາໄສ.ທ່ານຍ້ອງຍໍສັນລະເສີນງານກິລາໂອລິມປິກຄົນພິການປັກກິ່ງແມ່ນງານກິລາໂອລິມປິກຄົນພິການທີ່ຍິ່ງໃຫຍ່ທີ່ສຸດໃນປະຫວັດສາດຄັ້ງໜຶ່ງ,ທ່ານຫວັງວ່າ,ນັກກິລາ,ຄູຝຶກແລະເຈົ້າໜ້າທີ່ທັງໝົດນຳເອົານ້ຳໃຈການກິລາຂອງງານກິລາໂອລິມປິກຄົນພິການປັກກິ່ງທີ່ມີ 1 ບໍ່ມີ 2 ເຜີຍແຜ່ໄປທົ່ວທຸກແຫ່ງຫົນເພື່ອປຸກລະດົມຄົນຍິ່ງຫຼາຍກວ່າເຂົ້າຮ່ວມການເຄື່ອນໄຫວກິລາ,ຜູກພັນຊູເພື່ອນມິດ,ຈູດໄຟໃນດວງໃຈໃຫ້ລຸກຂຶ້ນ.ທ່ານຟີລິບເຄເວີນປະກາດວ່າ,ງານກິລາໂອລິມປິກຄົນພິການປັກກິ່ງປີ 2008 ປິດສາກ.ທັງຮຽກຮ້ອງບັນດານັກກິລາຄົນພິການແຫ່ງຕ່າງໆໃນທົ່ວໂລກ,ພາຍຫລັງ 4 ປີຈະລວມສູນພົບກັນໃຫມ່ຢູ່ລອນດອນ.ສຸດທ້າຍ,ທ່ານຟີລິບເຄເວີນເວົ້າສຽງດັງດັງໂດຍຄວາມຮັກແພງຢ່າງເລິກເຊິ່ງໃຊ້ພາສາຈີນວ່າ: "ຂອບໃຈຣົງກົງ,ຂອບໃຈຊີນຕາວ,ຂອບໃຈປັກກິ່ງ,ຂອບໃຈປະເທດຈີນ !"

ຕໍ່ມາ,ຈັດພິທີມອບຮັບທຸງງານກິລາໂອລິມຄົນພິການສາກົນແລະຈັດການສະແດງຮັບທຸງຂອງລອນດອນ....



.ການສະແດງຮັບທຸງຂອງລອນດອນໃນພິທີປິດງານກິລາໂອລິມປິກຄົນພິການ
闭幕式上的伦敦接旗表演　新华社 图





ການສະແດງສິລະປະໃນພິທີປິດງານກິລາໂອລິມປິກຄົນພິການ (ລະບາຍນ້ຳ)
闭幕式上的文艺表演《灌溉》　新华社 图



ການສະແດງສິລະປະໃນພິທີປິດງານກິລາໂອລິມປິກຄົນພິການ
闭幕式上的文艺表演　新华社 图

ຂະນະນີ້, ແສງໄຟທົ່ວສະໜາມຄ່ອຍໆປ່ຽນມືດ, ທອນໄຟງານກິລາໂອລິມປິກຄົນພິການສາກົນແຈ້ງສະຫວ່າງພິເສດ, ເດັກຍິງຫູໜວກປາກກືກຜູ້ໜຶ່ງສົນທະນາກັນກັບທອນໄຟຢູ່ໃນເດີ່ນຫຍ້າດ້ວຍພາສາມື: "ທອນໄຟອ້າຍ, ເບິ່ງເຫັນແລ້ວຫວະ? ເຈົ້າໄໝ້ຢູ່ໃນດວງໃຈຂ້ອຍ, ທອນໄຟອ້າຍ, ໄດ້ຍິນແລ້ວຫວະ? ຂ້ອຍຮ້ອງເພງດ້ວຍໃຈເພື່ອເຈົ້າ!", ໄຟສັກສິດຂອງທອນໄຟງານກິລາໂອລິມປິກຄົນພິການປັກກິ່ງທີ່ໄໝ້ຜ່າງໆຄ່ອຍໆມອດລົງໃນທ່າມກາງເລົ່າເລື່ອງດ້ວຍຄວາມຮັກຄວາມແພງ....

ຄຽງຄູ່ກັບສຽງເພງລວມໝູ່ເດັກ<<ບິນເຈີດກັບຄວາມຝັນ>>, ນັກສະແດງຫູໜວກປາກກືກ 126 ຄົນແບ່ງອອກເປັນ 6 ຈຸ, ສະແດງບົດຟ້ອນ<<ພະກອນອິນພັນແຂນ>>, ອ້າແຂນແຕ່ລະແຂນທີ່ມີຈັງຫວະແລະຟ້ອນສ່ອງແສງຄໍາຍິບຍັບເປັນສັນຍາລັກທອນໄຟງານກິລາໂອລິມປິກຄົນພິການໄໝ້ຂຶ້ນໃນດວງໃຈຂອງຄົນທັງຫຼາຍຊົ່ວນິລັນດອນ.

ໄຟດອກທີ່ແວວວາວສ່ອງແສງສະຫວ່າງເຮັດໃຫ້ກາງເວຫາກາງຄືນແຈ້ງສະຫວ່າງ, ປ່ຽນເປັນຮູບຈໍາລອງແບບຕົ້ນຫລິວສະແດງຄວາມຮັກແພງອາໄລອາວອນແລະຄວາມອວຍພອນທີ່ສວຍງາມແລະຈິງໃຈຂອງປະຊາຊົນຈີນທີ່ມີຕໍ່ນັກກິລາຄົນພິການ, ແຂກຜູ້ມີກຽດແລະເພື່ອນມິດໃນທົ່ວໂລກ.

ມື້ຄືນ "ເດືອນແຈ້ງ" ດວງໜຶ່ງຄ່ອຍໆຂຶ້ນມາ, ນັກສະແດງໃນພາກສະໜາມກັບຜູ້ອາສາສະໝັກຈັບມືກັນ, ຟ້ອນລໍາທໍາເພງເບີກບານມ່ວນຊື່ນ, ຜູ້ຊົມພາກັນຢືນຂຶ້ນ, ຮ້ອງໂຮໄຊໂຍຢ່າງຟົດຟື້ນ, ພາຍໃນສະໜາມກິລາເຕັມໄປດ້ວຍບັນຍາກາດອັນຟົດເດືອດ.


ໄຟສັກສິດທອນໄຟງານກິລາໂອລິມປິກຄົນພິການປັກກິ່ງຄ່ອຍໆມອດລົງ
残奥会圣火逐渐熄灭　新华社 图


ການສະແດງໄຟດອກໃນພິທີປິດງານກິລາໂອລິມປິກຄົນພິການ
闭幕式上的焰火表演　新华社 图


ງານກິລາໂອລິມປິກ !
ກໍ່ຢູ່ຄຽງຂ້າງຂອງທ່ານ !
奥运！
就在你身边！
ຕ້ອນຮັບງານກິລາໂອລິມປິກ ພິຖິພິຕັນມາລະຍາດ ສ້າງແບບແຜນທຳນອງໃໝ່
迎奥运 讲文明 树新风
Beijing 2008










ຕ້ອງການຂໍ້ມູນລະອຽດ ເຊີນຕິດຕໍ່: ບໍລິສັດທ່ອງທ່ຽວ ຈຳປາລາວ

For more information, Please contact CHAMPA LAO TRAVEL

TEL:(856.21).216616. FAX:(++856.21)215260.

# ຈຳປາລາວ





ເຊີນທ່ານ ທ່ອງທ່ຽວ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.
ດິນແດນທີ່ສວຍງາມ ດ້ວຍທຳມະຊາດ,ອຸດົມຮັ່ງມີທາງ ດ້ານປະຫວັດສາດ,
ວັດທະນະທຳ ແລະຫລາຍຊົນຊາດ ຊົນເຜົ່າ,
ເປັນຕົ້ນ: ນະຄອນຫລວງວຽງຈັນ-ເມືອງມໍລະດົກໂລກຫລວງພະບາງ-
ວັດພູຈຳປາສັກ-ທົ່ງໄຫຫີນ-ນ້ຳຕົກຄອນພະເພັງ-ຫລີ່ຜີ ແລະອື່ນໆ.



主要有:
首都万象市
世界文化遗产——
- 琅勃拉邦
- 占芭色瓦普寺
- 查尔平原（石缸平原）
- 宽帕盆大瀑布
- 里皮等名胜古迹

*Visit Laos P,D,R, one of the premier holiday destination, with its sunny, the beautiful nature, the rivers and the warm smiles of the local people, Rich tradition and culture and many ethnic groups. Visit Vientiane, the capitale, LuangPrabang, wat Phou temple, the plain of Jars: The world heritage sites and the big water falls KhonPhaPheng, LiPhi etc... Contact us today and you will be welcome.*

## 中国经济变革的三个历史阶段

文 / 雪　原

中国改革开放 30 年，最令世界瞩目的是经济实力的崛起。正如中国经济专家茅于轼所言 :30 年最成功的是财富的增加，人们的自由度和对外开放的扩大。

# 3 ຂັ້ນຕອນປະຫວັດສາດໃນການປະຕິຮູບເສດຖະກິດຂອງຈີນ

ການປະຕິຮູບແລະເປີດປະຕູສູ່ພາຍນອກຂອງຈີນເປັນເວລາ 30 ປີແລ້ວ, ສິ່ງທີ່ເປັນໜ້າທົ່ວໂລກຈັບຕາມອງນັ້ນແມ່ນກຳລັງເສດຖະກິດເພີ່ມຂຶ້ນ. ກໍ່ຄືທ່ານເໝົາຢີຊື່ນັກຊຽວຊານເສດຖະສາດຈີນເວົ້າວ່າ, ສິ່ງທີ່ສຳເລັດຜົນໃຫຍ່ຫຼວງທີ່ສຸດເປັນເວລາ 30 ປີນັ້ນແມ່ນຊັບສົມບັດເພີ່ມຂຶ້ນແລະແຜ່ຂະຫຍາຍຄວາມເສລີພາບແລະເປີດປະຕູສູ່ພາຍນອກໃຫ້ກ້ວາງຂວາງ.

ກ່ອນປີ 1978, ປະເທດຈີນເປັນກຸ່ມເສດຖະກິດທີ່ປິດປະຕູຮັກສາເກົ່າປະເທດໜຶ່ງ, ເກືອບຈະຕັດສາຍພົວພັນກັບລະບົບເສດຖະກິດໂລກ. ຂະບວນລົດເສດຖະກິດລວມສູນລະດັບສູງໄດ້ດຳເນີນງານ 20 ກວ່າປີ, ສຸດທ້າຍ, ເຖິງທ້າຍຊຸມປີ 70 ສະຕະວັດທີ່ 20 ຕົກເຫວເລິກທີ່ບໍ່ເຄີຍມີມາກ່ອນ, ແຕ່ປີ 1958-1978 ໄລຍະ 20 ປີທີ່ຜ່ານມານັ້ນ, ລາຍຮັບຂອງປະຊາກອນຕົວເມືອງຂອງຈີນເພີ່ມຂຶ້ນສະເລຍບໍ່ເຖິງ 4 ຢວນຈີນຕໍ່ຄົນ(ຕໍ່ໄປຄືກັນ), ຊາວກະສິກອນບໍ່ເຖິງ 2,6 ຢວນຈີນຕໍ່ຄົນ, ທົ່ວທັງສັງຄົມຂາດເຂີນວັດຖຸສິ່ງຂອງຢ່າງຮອບດ້ານ, ກຳລັງວັງຊາຂອງວິສາຫະກິດເກືອບບໍ່ມີ.

ໃນປີ 1978ປະຕິບັດແນວທາງນະໂຍບາຍປະຕິຮູບເປີດປະຕູສູ່ພາຍນອກ, ເຮັດໃຫ້ເສດຖະກິດຂອງຈີນເຂົ້າສູ່ຖາງລົດໄວທີ່ທັນສະໄໝ. ໃນໄລຍະ 30 ປີທີ່ຜ່ານມາ, GDP ຂອງຄົນຈີນສະເລຍຫົວຄົນບໍ່ເຖິງ 10 ປີກໍ່ເພີ່ມຂຶ້ນ 1 ເທົ່າຕົວ, ເຖິງປີ 2007, GDP ຂອງຄົນຈີນສະເລຍຫົວຄົນບັນລຸເຖິງ 2500 ໂດລາສະຫະລັດຕໍ່ຄົນ. ຍອດປະລິມານເສດຖະກິດຂອງຈີນລຽນລາຍຊື່ໃນໂລກເປັນອັນດັບທີ 13 ໃນປີ 1978 ເພີ່ມຂຶ້ນກາຍເປັນອັນດັບທີ 4ໃນປີ 2007 ;ການຄ້າຂາອອກຂາເຂົ້າຂອງຈີນກວມມາດຕາສ່ວນຂອງການຄ້າໂລກເປັນອັນດັບທີ 23 ໃນປີ 1978 ເພີ່ມຂຶ້ນເປັນອັນດັບທີ 3 ໃນປີ 2007.



ແຕ່ "ເຊີນເຈີນທີ່ມີຄວາມໄວ " ເຂົ້າສູ່ "ເຊີນເຈີນທີ່ມີຄວາມກົມກຽວ " ແລະ "ເຊີນເຈີນທີ່ມີປະສິດທິພາບ "
从 " 速度深圳 " 迈向 " 和谐深圳 "" 效益深圳 "　新华社 图



ເນື້ອທີ່ເຮືອນຢູ່ຂອງປະຊາກອນແຂວງຊານຕົງສະເລ່ຍ25ຕາແມັດ/ຄົນ.ພາບນີ້ແມ່ນອາຄານສູງໃນເຂດໃຕ້ນະຄອນຊິນຕາວ
山东省人均住宅面积达 25 平方米，图为青岛市市南区楼宇耸立　新华社 图



ຫວ່າງມໍ່ໆປີມານີ້, ໂຄງປະກອບຄົບຊຸດກັນຕ່າງໆໃນເຂດເຮືອນຮັບປະກັນໃນນະຄອນຝູໂຈວນັບມື້ນັບຄົບຖ້ວນສົມບູນ
福州市近年实施的保障房小区各项配套设施建设正在逐步完善　新华社 图

ການປະຕິຮູບເສດຖະກິດຂອງຈີນແບ່ງອອກເປັນ 3 ຂັ້ນຕອນປະຫວັດສາດ.

ຖ້າຫາກວາ,ທວນຄືນປະຫວັດສາດໃນການປະຕິຮູບເສດຖະກິດຂອງຈີນເປັນເວລາ 30 ປີ,ນັ້ນຈະແມ່ນປຶ້ມຫນາຫົວຫນຶ່ງ, ສັງເກດເບິ່ງການປະຕິຮູບ ໂດຍທົ່ວໄປແລ້ວ,ຈະສາມາດແບ່ງອອກເປັນ 3 ຂັ້ນຕອນ:

ຂັ້ນຕອນທີ 1 ແມ່ນນັບແຕ່ປີ 1978 ຫາທ້າຍຊຸມປີ 80ສະຕະວັດທີ່ແລ້ວ,ໄລຍະນີ້ເປັນໄລຍະລິເລີ່ມ,ທົດລອງ,ສືບຄົ້ນໃນການປະຕິຮູບຂອງຈີນ.ເດືອນ 12 ປີ 1978ເປີດກອງປະຊຸມໃຫຍ່ທົ່ວປະເທດພັກຄອມມູນິດຈີນຄັ້ງທີ 3 ສະໄຫມທີ 11,ນີ້ເປັນສັນຍາລັກແຫ່ງການລິເລີ່ມປະຕິຮູບເສດຖະກິດຈີນເປັນລະບົບການຕະຫຼາດ,ບັນລຸເຖິງການຫັນປ່ຽນອັນຍິ່ງໃຫຍ່ທາງປະຫວັດສາດຄັ້ງຫນຶ່ງປະກົດເປັນຈິງ. ພັກຄອມມູນິດຈີນເລີ່ມຕົ້ນຫັນຈຸດສຸມວຽກງານເຂົ້າສູ່ການສ້າງສາເສດຖະກິດທັນສະໄຫມແລ້ວ,ໃນໄລຍະນີ້,ນະໂຍບາຍເສດຖະກິດຂອງລັດຖະບານຍັງຄົງຖືເອົາເສດຖະກິດຕາມແຜນການເປັນຫຼັກ,ແຕ່ວ່າ,ໄດ້ເລີ່ມຕົ້ນດໍາເນີນການປັບປຸງຫັນທິດໄປເສດຖະກິດຕະຫຼາດຢ່າງບໍ່ຂາດສາຍ.ໄລຍະຜ່ານດັ່ງກ່າວນີ້ກໍ່ມີການລັ່ງເລແລະຟື້ນຄືນ.ສິ່ງທີ່ມີຜົນສະທ້ອນແຮງທີ່ສຸດໃນໄລຍະນີ້ແມ່ນເດືອນ 7 ປີ 1979 ໄດ້ເຮັດການທົດລອງເຂດພິເສດເສດຖະກິດຕາມເຂດແຄມທະເລຂອງຈີນເຊັ່ນ:ເສີ້ນເຈີນ,ຈູໄຫ,ຊວນເທົ່,ເຊຍເມີນ,ເປີດປະຕູສູ່ຕະຫຼາດສາກົນນໍາຫນ້າກວ່າຫມູ່.ຢູ່ໃນຊົນນະບົດຂອງຈີນໄດ້ເລີ່ມປະຕິບັດລະບອບຮັບຜິດຊອບ "ຮັບເຫມົາການຜະລິດເຖິງຄົວເຮືອນ",ຄວາມມານະພະຍາຍາມປູກສະບຽງອາຫານຂອງຊາວກະສິກອນຈີນໄດ້ເລີ່ມຕົ້ນຖືກຊຸກຈູງຂຶ້ນແລ້ວ.

ຂັ້ນຕອນທີ 2 ແມ່ນເລີ່ມແຕ່ຕົ້ນຊຸມປີ 90 ສະຕະວັດທີ່ແລ້ວຫາຕົ້ນສະຕະວັດນີ້,ແມ່ນຂັ້ນຕອນທີ່ກໍານົດຮູບການເປົ້າຫມາຍປະຕິຮູບເສດຖະກິດແລະຂອບພື້ນຖານ.ຕົ້ນປີ 1992,ທ່ານເຕັ້ງແຊວຜີງກ່າວຄໍາໂອ້ລົມກັນລົງພື້ນຖານພາກໃຕ້,ທ່ານຈຽງເຈີມິງກ່າວຄໍາລາຍງານການເມືອງຂອງກອງປະຊຸມພັກຄອມມູນິດຈີນທົ່ວປະເທດ ຄັ້ງທີ 14 ຊີ້ອອກວ່າ "ເປົ້າຫມາຍແຫ່ງການປະຕິຮູບລະບອບເສດຖະກິດຂອງປະເທດຈີນແມ່ນສ້າງຕັ້ງລະບອບເສດຖະກິດຕະຫຼາດສັງຄົມນິຍົມ".ໃນປີ 1993,ກອງປະຊຸມໃຫຍ່ທົ່ວປະເທດຂອງພັກຄອມມູນິດຈີນຄັ້ງທີ 3 ສະໄຫມທີ 14ໄດ້ລົງຄະແນນສຽງຜ່ານ "ມະຕິຕົກລົງກ່ຽວກັບບັນຫາຕ່າງໆສ້າງຕັ້ງລະບອບເສດຖະກິດຕະຫຼາດສັງຄົມນິຍົມ".ມະຕິຕົກລົງດັ່ງກ່າວນີ້ໄດ້ແຕ້ມແຜນງານແລະຂອບພື້ນຖານຂອງລະບອບເສດຖະກິດຕະຫຼາດສັງຄົມນິຍົມຈີນອອກມາ,ການອອກແບບຂອບແຜນງານນີ້ແມ່ນ: "ຈໍາຕ້ອງຍຶດຫມັ້ນທິດທາງລະບອບສ່ວນຫຼວງເປັນຫຼັກ,ພາກສ່ວນເສດຖະກິດຫຼາຍປະເພດພັດທະນາພ້ອມກັນ,ຫັນປ່ຽນກົນໄກທຸລະກິດຂອງລັດວິສາຫະກິດຕື່ມອີກ,ສ້າງຕັ້ງລະບອບວິສາຫະກິດທັນສະໄຫມແຫ່ງການເຫມາະສົມກັບຄວາມຮຽກຮ້ອງຕ້ອງການຂອງເສດຖະກິດຕະຫຼາດ, ກໍາມະສິດຊັດແຈ້ງ,ສິດແລະຄວາມຮັບຜິດຊອບຄັກແນ່,ການປົກຄອງກັບ

ວິສາຫະກິດແຍກອອກກັນ,ການຄຸ້ມຄອງໂດຍວິທະຍາສາດ.ສ້າງຕັ້ງລະບົບຕະຫຼາດທີ່ເປີດກວ້າງໃນທົ່ວປະເທດເປັນເອກະພາບ, ບັນລຸເຖິງຕະຫຼາດຕົວເມືອງກັບຕະຫຼາດຊົນນະບົດປະສານສົມທົບຢ່າງແໜ້ນ,ຕະຫຼາດພາຍໃນປະເທດເຊື່ອມໂຍງກັນກັບຕະຫຼາດສາກົນ,ຊຸກຍູ້ການປະກອບຈັດສັນຊັບພະຍາກອນໂດຍດີເລີດ;ຫັນປ່ຽນບົດບາດໜ້າທີ່ຄຸ້ມຄອງເສດຖະກິດຂອງລັດຖະບານ,ສ້າງຕັ້ງລະບົບຄວບຄຸມມະຫາພາກທີ່ຄົບຖ້ວນສົມບູນໂດຍວິທີການທາງອ້ອມເປັນຫຼັກ,ເພື່ອຮັບປະກັນເສດຖະກິດແຫ່ງຊາດດຳເນີນງານຢ່າງແຂງແຮງ; ສ້າງຕັ້ງລະບອບປັນຜົນໄດ້ຮັບທີ່ທ່ຽງທຳຖືການປັນຜົນຕາມແຮງງານເປັນຫຼັກ,ປະສິດທິພາບນຳໜ້າ,ສົ່ງເສີມຄົນສ່ວນໜຶ່ງໃນຂົງເຂດສ່ວນໜຶ່ງອຸດົມຮັ່ງມີຂຶ້ນກ່ອນໝູ່,ເດີນທາງຮັ່ງມີລວມກັນ.ສ້າງຕັ້ງລະບອບຮັບປະກັນດ້ານສັງຄົມຫຼາຍຊັ້ນລະດັບ,ເພື່ອສະໜອງໃຫ້ການຮັບປະກັນດ້ານສັງຄົມທີ່ເໝາະສົມກັບສະພາບການຂອງບ້ານເມືອງເຮົາແກ່ ປະຊາກອນຕົວເມືອງແລະຊົນນະບົດ.ຊຸກຍູ້ເສດຖະກິດພັດທະນາແລະສັງຄົມມີສະຖຽນລະພາບ".

ອີງຕາມການອອກແບບດັ່ງກ່າວນີ້,ປະເທດຈີນດຳເນີນການປະຕິຮູບແລະເປີດປະຕູສູ່ພາຍນອກໂດຍສາລະທິດໃນຂົງເຂດຕ່າງໆແລະທຸກຊັ້ນລະດັບ.ສ້າງຕັ້ງລະບອບວິສາຫະກິດທັນສະໄໝ,ຫັນປ່ຽນກົນໄກທຸລະກິດລັດວິສາຫະກິດ,ຊັກນຳແລະອອກແຮງພັດທະນາເສດຖະກິດ ທີ່ບໍ່ແມ່ນລະບອບສ່ວນຫຼວງຢ່າງຕັ້ງໜ້າ,ຊຸກຍູ້ການປະຕິຮູບລະບົບການເງິນ,ການທະນາຄານຢ່າງແຂງແຮງ, ເປີດປະຕູສູ່ພາຍນອກໂດຍສາລະທິດ, ຫຼາຍຊັ້ນລະດັບແລະຂົງເຂດຍິ່ງກວ້າງຂວາງກວ່າ.

ການປະຕິຮູບເສດຖະກິດຂັ້ນຕອນທີ 3 ເລີ່ມຕົ້ນແຕ່"ອຳນາດຊຸການປົກຄອງໃໝ່ຫູ-ເວີນ"ທີ່ນັກປະຫວັດສາດເອີ້ນນັ້ນ,ຈົນເຖິງປະຈຸບັນນີ້ຍັງບໍ່ທັນສິ້ນສຸດລົງ.ໜ້າທີ່ສຳຄັນຂອງມັນແມ່ນດຳເນີນການປະຕິຮູບແລະເປີດປະຕູສູ່ພາຍນອກໄປສູ່ລວງເລິກໃຫ້ຕື່ມອີກກ້າວໜຶ່ງ,ຫັນປ່ຽນຮູບການພັດທະນາເສດຖະກິດ,ແກ້ໄຂຫຼືໄກ່ເກຍບັນຫາຕ່າງໆທີ່ຕົກຄ້າງມາຈາກໄລຍະຜ່ານການເປັນແບບຕະຫຼາດ.ເຊັ່ນ: ບັນຫາລັດຖະບານເສຍບົດບາດຫຼືສັບຊ້ອນສິດອຳນາດທີ່ຜິດພາດແລະບັນຫາປັນຜົນທາງສັງຄົມບໍ່ທ່ຽງທຳເປັນຕົ້ນ.ບັນຫາຄວາມຜິດດ່ຽງລະຫວ່າງຄວາມຮັ່ງມີແລະຄວາມທຸກຍາກຫຼາຍໂພດ,ບັນຫາການສະໜອງຜະລິດຕະພັນສາທາລະນະບໍ່ພຽງພໍແລະຂາດດຸນ,ການຂາດເຂີນພື້ນຖານປົກຄອງໂດຍກົດໝາຍແລະພື້ນຖານສິນເຊື່ອເຊິ່ງເສດຖະກິດຕະຫຼາດສາມາດດຳລົງຢູ່ລອດແລະອື່ນໆ.ກ້າວເດີນຕົກລົງສຸດທ້າຍສ້າງຕັ້ງລະບົບເສດຖະກິດຕະຫຼາດທີ່ຄຸ້ມຄອງໂດຍກົດໝາຍແລະສ້າງຕັ້ງສັງຄົມ"ປະຊາທິປະໄຕປົກຄອງໂດຍກົດໝາຍ,ສະເໝີພາບແລະທ່ຽງທຳ,ຮັກແພງກັນຢ່າງຈິງໃຈ,ເຕັມໄປດ້ວຍຊີວິດຊີວະ,ສະຖຽນລະພາບທີ່ເປັນລະບຽບຮຽບຮ້ອຍ,ມະນຸດກັບທຳມະຊາດຢູ່ຮ່ວມກັນຢ່າງກົມກ່ຽວກັນ".ມາດຕາການທີ່ເປັນຈຸດສຸມຄືະເລັ່ງລັດກໍ່ສ້າງລະບົບຮັບປະກັນທາງສັງຄົມໃຫ້ຄົບຖ້ວນສົມບູນ,ດຳເນີນການປະຕິຮູບຕະຫຼາດທາດມູນໄປທາງລວງເລິກ,ເລັ່ງລັດການປະຕິຮູບສັງລວມຄົບວົງຈອນໃນຂົງເຂດເຊັ່ນ: ເສດຖະກິດ, ສັງຄົມແລະການເມືອງທີ່ຕົວເມືອງກັບຊົນນະບົດເປັນອັນໜຶ່ງອັນດຽວກັນ,ຫັນປ່ຽນບົດບາດໜ້າທີ່ຂອງອຳນາດການປົກຄອງ,ຂະຫຍາຍລວງກວ້າງແລະລວງເລິກແຫ່ງການເປີດປະຕູສູ່ພາຍນອກເປັນຕົ້ນ.

**ລະດັບຊີວິດການເປັນຢູ່ຂອງປະຊາຊົນຈີນໄດ້ຍົກສູງຂຶ້ນຢ່າງບໍ່ຢຸດຢັ້ງ.**

ຜ່ານການປະຕິຮູບເປັນເວລາ 30 ປີ,ເສດຖະກິດຂອງຈີນໄດ້ຮັບຜົນສຳເລັດຢ່າງເດັ່ນຊັດ,ບໍ່ພຽງແຕ່ກຳລັງເສດຖະກິດລວມເຂົ້າສູ່ແຖວໜ້າຂອງເສດຖະກິດໂລກເທົ່ານັ້ນ,ແລະລະດັບຊີວິດການເປັນຢູ່ຂອງປະຊາຊົນຈີນກໍ່ໄດ້ຍົກສູງຂຶ້ນຢ່າງ




ຊາວເມືອງສືບຖາມນະໂຍບາຍປະກັນໄພປິ່ນປົວພະຍາດ
市民咨询医疗保险政策　新华社 图



ງານແລກປ່ຽນການຮ່ວມມືດ້ານເສດຖະກິດການຄ້າແລະເຕັກນິກລະຫວ່າງກວາງໂຈວແລະຮົງກົງປີ2007 ;ຜູ້ແທນກວາງໂຈວແລະຮົງກົງຢູ່ໃນພິທີລົງເຊັນສັນຍາ
“ 2007 粤港经济技术贸易合作交流会 ”，粤港企业代表在签约仪式上　新华社 图


ຊາວຕີເບັດໃນເຂດອາລີລົມກັນກັບພີ່ນ້ອງດ້ວຍມືຖື
西藏阿里地区藏民用手机与亲友通话　新华社 图


ພະນັກງານຂອງສະຖານີປ່ອນບັດໃນເຂດຊາວບ້ານພວມສະຖິຕິບັດເລືອກຕັ້ງພະນັກງານຄຸ້ມຄອງເຂດຊາວບ້ານ
居民小区投票站的工作人员在统计小区居委会干部选举的选票　新华社 图



ເຂດປົກຄອງຕົນເອງນິງເຊຍເປີດສາຍທາງໃໝ່ຂົນສົ່ງຜູ້ໂດຍສານຊົນນະບົດ,ເຮັດໃຫ້ຊາວກະສິກອນຍິ່ງຫລາຍໄດ້ຮັບການບໍລິການຄົມນາຄົມທີ່ສະດວກ
宁夏新开通的农村客运线路，让更多的农民群众享受到便利的交通服务　新华社 图



ລົດບັນທຸກເຄື່ອງເຕັມລົດຈຳນວນຫນຶ່ງຈອດຢູ່ໃນເຂດສວນຈໍລະຈອນສິນຄ້າຜິງຊຽງເຂດການຄ້າເສລີຈີນ-ອາຊຽນລໍຖ້າແລ່ນເອກະສານເຂົ້າອອກແດນ
一些满载货物的卡车停在中国—东盟自由贸易区凭祥物流园内等待办理出入境手续　新华社 图




ແມ່ເຖົ້າອາຍຸ100ປີພວມປ່ອນບັດເລືອກຕັ້ງຜູ້ແທນສະພາປະຊາຊົນທົ່ວປະເທດ
百岁老人投票选举人大代表　新华社 图

ບໍ່ຢຸດຢັ້ງ. ໃນໄລຍະປະຕິຮູບແລະເປີດປະຕູສູ່ພາຍນອກເປັນເວລາ 30ປີນັ້ນ, ລາຍຮັບຂອງປະຊາຊົນຕົວເມືອງຄຸ້ມບ້ານທີ່ສາມາດຄອບງຳໄດ້ສະເລຍຫົວຄົນ 343 ຢວນຈີນໃນປີ 1978 ເພີ່ມຂຶ້ນເຖິງ11759 ຢວນຈີນໃນປີ 2006, ໄດ້ເພີ່ມຂຶ້ນ 34,3 ເທົ່າຕົວ; ລາຍຮັບສຸດທິຂອງຊາວກະສິກອນສະເລຍຫົວຄົນ 135,8



ຢູ່ໃນສະຖານທີ່ຂົນສົ່ງທາງລົດໄຟແຫ່ງຫນຶ່ງຂອງເຄີເອີມູກອງໄວ້ສິນຄ້າເຕັມທີ່ຂົນສົ່ງໄປຕິເບດ
在格尔木一个铁路货运场上堆满了发往西藏的货物　新华社 图

ປອນຈີນໃນປີ 1978ເພີ່ມຂຶ້ນເຖິງ 3587 ປອນຈີນໃນປີ 2006,ໄດ້ເພີ່ມຂຶ້ນ 26,4 ເທົ່າຕົວ;ເງິນຝາກທະນາຄານຂອງປະຊາກອນຕົວເມືອງແລະຊົນນະບົດ 21 ຕື້ປອນຈີນໃນທ້າຍປີ 1978 ໄດ້ເພີ່ມຂຶ້ນເຖິງ 16662,7 ຕື້ປອນຈີນໃນທ້າຍປີ 2006.ລະດັບລາຍຮັບເພີ່ມຂຶ້ນເປັນການຍົກສູງລະດັບການຊົມໃຊ້ຂອງປະຊາຊົນ.

ສ່ວນປະກອບການຊົມໃຊ້ຂອງປະຊາຊົນກໍ່ມີການປ່ຽນແປງຢ່າງເດັ່ນຊັດ.ໄລຍະຕົ້ນປະຕິຮູບເປີດປະຕູສູ່ພາຍນອກ,ດັດຊະນີເອີນເກຂອງປຊາກອນໃນຕົວເມືອງແມ່ນ 57% ຂຶ້ນໄປ,ປະຊາຊົນຊົນນະບົດສູງກວ່າ 60%,ໃນປີ 2006 ,ດັດຊະນີເອີນເກຂອງປະຊາກອນໃນຕົວເມືອງແມ່ນ 35,8% ໃກ້ກັນກັບລະດັບປະເທດລາຍຮັບປານກາງ.ຄອບຄົວປະຊາຊົນຊົນນະບົດແມ່ນ 43%,ປະຊາຊົນຕົວເມືອງສະເລຍ 100 ຄົວເຮືອນມີລົດ 3,4 ຄັນ,ປະຊາຊົນຊົນນະບົດສະເລຍ 100 ຄົວເຮືອນມີລົດຈັກ 41 ຄັນ, ໂທລະພາບສີ 84ເຄື່ອງ, ປະຊາຊົນຕົວເມືອງສະເລຍ 100 ຄົວເຮືອນມີໂທລະສັບມືຖື 137ໜ່ວຍ,ປະຊາຊົນຕົວເມືອງສະເລຍ 100 ຄົວເຮືອນມີຄອມພິວເຕີທີ່ເຊື່ອມຕໍ່ອິນເຕີເນັດເຖິງ32,2ເຄື່ອງ, ປະຊາຊົນຊົນນະບົດສະເລຍ 100 ຄົວເຮືອນມີໂທລະສັບຕັ້ງໂຕະ 58,3 ໜ່ວຍ, ໂທລະສັບມືຖື 50,2 ໜ່ວຍ.

ເບິ່ງຕາມເງື່ອນໄຂແລະສະພາບແວດລ້ອມພັກເຊົາ,ເນື້ອທີ່ນຳໃຊ້ເຮືອນພັກຂອງປະຊາຊົນຕົວເມືອງສະເລຍຫົວຄົນ 8,8 ຕາແມັດໃນທ້າຍປີ 1986 ເພີ່ມຂຶ້ນເຖິງ 21,3 ຕາແມັດໃນທ້າຍປີ 2005.ໃນປີ 2005 ,ຄອບຄົວປະຊາຊົນຕົວເມືອງມີ2,9% ແມ່ນຢູ່ເຮືອນແຖວ,ມີຄອບຄົວ 33,1%ມີເຮືອນພັກເປັນຊຸດ 3-4 ຫ້ອງ, ເຄື່ອງປະກອບໃນເຮືອນໄດ້ຮັບການປ່ຽນແປງດີຂຶ້ນຢ່າງຊັດແຈ້ງ. ເນື້ອທີ່ນຳໃຊ້ເຮືອນພັກຂອງປະຊາຊົນຊົນນະບົດສະເລຍຫົວຄົນ 8,1 ຕາແມັດໃນປີ 1978 ເພີ່ມຂຶ້ນເຖິງ29,7 ຕາແມັດ,ໃນນັ້ນ,ເນື້ອທີ່ເຮືອນພັກຂອງຄອບຄົວຊາວກະສິກອນ 55,9% ໃຫຍ່ກວ່າ 25 ຕາແມັດ.

**ເສັ້ນທາງພັດທະນາເສດຖະກິດຍັງຄົງມີຄວາມຫຍຸ້ງຍາກ.**

ເບິ່ງຕາມການປະຕິຮູບເສດຖະກິດຂອງຈີນໃນປະຈຸບັນນີ້,ສາມາດເວົ້າໄດ້ວ່າສຳເລັດຜົນທຽບຖານກວ່າ.ແຕ່ຕ້ອງມອງເຫັນຍັງມີຄວາມຫຍຸ້ງຍາກບໍ່ໜ້ອຍໃນການພັດທະນາເສດຖະກິດໃນ



ຄົນຫຸ່ນຍົນໃນພື້ນຖານການຜະລິດໂດຍໄອຄິວ6ຂັ້ນຂອງກຸ່ມມົງນີວມົງໂກນໃນພວມຂົນສົ່ງນ້ຳນົມງົວ

内蒙古蒙牛集团六期智能生产基地机器人正在搬运液态奶　CFP 图

ອະນາຄົດຂອງຈີນ.ຈີນມີພົນລະເມືອງຫລາຍ,ພື້ນທີ່ບອບບາງ,ພັດທະນາບໍ່ສະໝ່ຳສະເໝີກັນ,ຍອດປະລິມານເສດຖະກິດເຖິງວ່າລຽນຢູ່ແຖວໜ້າຂອງໂລກ,ແຕ່ວ່າ,GDPສະເລຍຫົວຄົນຂອງຈີນຍັງຢູ່ຫລັງອັນດັບທີ 100 ຂອງໂລກ,ໂຄງປະກອບຜະລິດຕະກຳຂອງຈີນຍັງບໍ່ສົມເຫດສົມຜົນ,ລະດັບເຕັກນິກເຕັກໂນໂລຊີບໍ່ສູງ,ຄວາມກົດດັນດ້ານສະພາບແວດລ້ອມຊັບພະຍາກອນຍັງໜັກ,ການພັດທະນາເສດຖະກິດແລະພັດທະນາສັງຄົມບໍ່ກົມກຽວກັນ,ທ່າງ່ຽງຄວາມຜິດດ່ຽງໃນການປັ່ນລາຍຮັບລະຫວ່າງຕົວເມືອງແລະຊົນນະບົດແລະຂົງເຂດຍັງບໍ່ທັນດີຂຶ້ນ.ຢູ່ໃນປະເທດຈີນທີ່ມີພົນລະເມືອງ 1 ພັນກວ່າລ້ານຄົນຈະຕ້ອງສ້າງສາສັງຄົມຢູ່ດີກິນດີ,ບັນລຸເຖິງເປັນແບບທັນສະໄໝ,ຍັງຈະຕ້ອງຜ່ານການບາກບັ່ນຕໍ່ສູ້ຢ່າງທໍລະຫົດອົດທົນເປັນເວລາຍາວນານ.

# ກວາງໂຈວພວມກະກຽມງານກິລາເອຊຽນເກມ ທີ່ມີຂະໜາດໃຫຍ່ທີ່ສຸດໃນປະຫວັດສາດຜ່ານມາ

ວັນທີ 24 ສິງຫາ 2008, ໄຟສັກສິດຂອງງານມະຫາກຳກິລາໂອລິມປິກຄ່ອຍໆຖືກມອດລົງ, ແຕ່ວ່າງານກິລາລວມຂອງສາກົນຢູ່ປະເທດຈີນບໍ່ໄດ້ຖືກຢຸດໄວ້ກັບການສິ້ນສຸດຂອງງານມະຫາກຳກິລາໂອລິມປິກນັ້ນ, ຫລັງຈາກນີ້ສອງປີນັບແຕ່ວັນທີ 12 ເຖິງວັນທີ 27 ເດືອນພະຈິກປີ 2010 , ງານກິລາເອຊຽນເກມຄັ້ງທີ 16 ຈະໄດ້ຖືກຈັດຂຶ້ນຢູ່ເມືອງກວາງໂຈວ, ເມືອງທີ່ມີຊື່ສຽງທີ່ຕັ້ງຢູ່ທາງທິດໃຕ້ຂອງປະເທດຈີນ.

ອີງຕາມການແນະນຳ, ງານກິລາເອຊຽນເກມທີ່ກວາງໂຈວຈະແມ່ນງານກິລາເອຊຽນເກມທີ່ມີຂະໜາດໃຫຍ່ທີ່ສຸດໃນປະຫວັດສາດ, ເຊິ່ງຈະມີການເຂົ້າຮ່ວມຂອງນັກກິລາ 14.000 ຄົນ, ກຳມະການຜູ້ຕັດສິນແລະວິຊາການເຕັກນິກຫລາຍກ່ວາ 6.500 ຄົນນັກຂ່າວສື່ມວນຊົນເກືອບ 10.000ຄົນລວມທັງຄະນະແຂກຜູ້ມີກຽດ, ຄະນະຕິດຕາມແລະຄະນະກຳມະການກິລາໂອລິມປິກອາຊີຫລາຍກ່ວາ 2.000ຄົນຈາກ 45 ປະເທດແລະເຂດແຄ້ວນຂອງທະວີບອາຊີ. ໃນງານກິລາເອຊຽນເກມຈະມີການແຂ່ງຂັນກິລາ 42 ປະເພດ, ເຊິ່ງມີລາຍການແຂ່ງຂັນທີ່ຫລາຍທີ່ສຸດຄັ້ງໜຶ່ງໃນ




ກາໝາຍງານກິລາເອຊຽນເກມກວາງໂຈວ
广州亚运会会徽

## 广州筹备史上规模最大亚运会

文 / 钟　健

2008年8月24日，北京奥运会圣火缓缓熄灭，不过国际综合运动会在中国并未随着北京奥运会的结束而划上句号，两年后的2010年11月12日至27日，第16届亚运会将在岭南名城广州举行。据介绍，广州亚运会是历史上规模最大的亚运会，将有亚洲45个国家和地区的1万4千名选手、6千5百多名技术官员和裁判员、约1万名媒体记者以及两千多名亚奥理事会贵宾和随员参与。广州亚运会共设42个比赛项目，是亚运会历史上比赛项目最多的一届。



ກວາງໂຈວ-ຕົວເມືອງທັນສະໄໝທີ່ມີປະຫວັດສາດຍາວນານ
广州—历史悠久的现代化城市

ປະຫວັດສາດຂອງງານກິລາເອຊຽນເກມ.

ຜູ້ຮັບຜິດຊອບຂອງຂະແໜງການແຂ່ງຂັນໃນຄະນະກຳມະການຈັດງານກິລາເອຊຽນເກມກວາງໂຈວໄດ້ຊີ້ອອກວ່າ, ຈຸດເນັ້ນໜັກໃນເນື້ອແທ້ຂອງການແຂ່ງຂັນແມ່ນບໍ່ຄືກັນກັບງານມະຫາກຳກິລາໂອລິມປິກ, ງານກິລາເອຊຽນເກມແມ່ນເນັ້ນໜັກໃສ່ການດຶງດູດເອົາບັນດາລາຍການກິລາທີ່ມີລັກສະນະປະເພນີຂອງທຸກພາກຂອງທະວີບອາຊີ, ເພື່ອໃຫ້ໄດ້ຈັດຕັ້ງການແຂ່ງຂັນນຳກັນເປັນຕົ້ນວ່າການຊ່ວງເຮືອຍາວ(ເຮືອມັງກອນ)ທີ່ໄດ້ຮັບຄວາມນິຍົມຢູ່ເມືອງພາກໃຕ້ເມືອງກວາງໂຈວຂອງ ສ ປ ຈີນ, ກາຣາເຕ (Karate) ຂອງຍີ່ປຸ່ນ, ຄາບາດີຂອງອາຊີໃຕ້, ກະຕໍ້ຫວາຍຂອງອາຊີອາຄະເນແລະການຂີ່ມ້າຂອງອາຊີຕາເວັນຕົກ. ໃນການແຂ່ງຂັນທັງໝົດ 42 ປະເພດຂອງງານກິລາເອຊຽນເກມກວາງໂຈວນັ້ນມີ 14 ລາຍ ການແຂ່ງຂັນບໍ່ແມ່ນລາຍການແຂ່ງຂັນຂອງກິລາໂອລິມປິກ.

ເວລານັບຖອຍຫລັງ 800 ມື້

ວັນທີ 3 ເດືອນກັນຍາ 2008, ການນັບຫລັງຕ້ອນຮັບງານກິລາເອຊຽນເກມກວາງໂຈວແມ່ນ 800 ມື້. ວັນທີ 2 ກັນຍາ, ຄະນະກຳມະການຈັດງານໄດ້ແຈ້ງການກ່ຽວກັບບົດເພງເອຊຽນເກມທີ່ສົ່ງເຂົ້າປະກວດຊຸດທຳອິດ, ທັງປະກາດວ່າວັນທີ 12 ພະຈິກປີນີ້ໃນໂອກາດກ່ອນຄົບຮອບ 2 ປີຂອງການນັບຖອຍຫລັງງານກິລາເອຊຽນເກມນັ້ນຈະຈັດກິດຈະກຳສະເຫລີມສະຫລອງທີ່ຍິ່ງໃຫຍ່, ເຊິ່ງໃນເວລາດັ່ງກ່າວພາຍໃນຕົວເມືອງກວາງໂຈວຈະຈັດໃຫ້ມີການຍິງສະແດງໄຟດອກ, ປ້າຍເວລານັບຖອຍຫລັງອັນຍິ່ງໃຫຍ່ຈະຖືກຕັ້ງຂຶ້ນ, ທັງຈະມີກຳປັ່ນສອງລຳອອກເດີນທາງໄປຕາມສາຍນ້ຳເພື່ອໄປຍັງເມືອງກູເວດທີ່ເປັນບ່ອນຕັ້ງຂອງສູນກາງຄະນະກຳມະການງານກິລາເອຊຽນເກມ.

ເດືອນມີນາ 2007, ຄະນະກຳມະການຈັດງານເອຊຽນກວາງໂຈວໄດ້ປະກາດຄຳຂັວນຂອງການແຂ່ງຂັນຄັ້ງນີ້ອອກ, ເຊິ່ງຄຳຂັວນດັ່ງກ່າວແມ່ນ "ງານມະຫາກຳແຂ່ງຂັນທີ່ຕື່ນເຕັ້ນ, ທະວີບອາຊີທີ່ກົມກຽວກັນ" (Thrilling Games, Harmonious Asia), ເພື່ອຫວັງວ່າຈະຖືເອົາໂອກາດນີ້ຖ່າຍທອດຄວາມຝັນອັນເກົ່າແກ່ຂອງມວນມະນຸດທີ່ມີມາເຊັ່ນ: "ເອົາຮ່ວມຢ່າງກວ້າງຂວາງ, ບືນຂ້າມຂີດຈຳກັດຂອງຕົນເອງ, ທ້າທາຍຕໍ່ຂີດຈຳກັດ". ເດືອນພະຈິກປີດຽວກັນໄດ້ເລີ່ມຕົ້ນການກໍ່ສ້າງເມືອງເອຊຽນເກມກວາງໂຈວ - ທີ່ແມ່ນໂຄງການກໍ່ສ້າງທີ່ມີຂະໜາດໃຫຍ່ທີ່ສຸດຂອງງານກິລາເອຊຽນເກມກວາງໂຈວ, ກິດຈະກຳດັ່ງກ່າວໄດ້ສະແດງໃຫ້ເຫັນວ່າການກໍ່ສ້າງສະໜາມແລະຫໍກິລາເອຊຽນເກມກວາງໂຈວທັງໝົດໄດ້ເລີ່ມຂຶ້ນແລ້ວ.

乐羊羊 Le Yangyang



ສັດມຸງຄຸນງານກິລາເອຊຽນເກມກວາງໂຈວ
广州亚运会吉祥物


ສູນກິລາໂອລິມປິກແຂວງກວາງຕຸ້ງ
广东省奥林匹克体育中心

ອີງຕາມແຜນການ, ເນື້ອທີ່ຂອງເມືອງກິລາເອຊຽນເກມກວາງໂຈວກວມເອົາປະມານ 2.7 ກິໂລແມັດມົນທົນ, ເຊິ່ງປະກອບດ້ວຍບັນດາພາກສ່ວນຄື: ບ້ານນັກກິລາ, ບ້ານພະນັກງານວິຊາການ, ບ້ານສື່ມວນຊົນ, ສູນກາງຂ່າວສານລວມ, ສູນກາງອອກອາກາດສາກົນ ແລະ ສວນສາທາລະນະເອຊຽນເກມ, ເຊິ່ງສາມາດຮອງຮັບນັກກິລາ14.000 ຄົນ ແລະ ນັກຂ່າວສື່ມວນ

ຊົນ 10.000 ຄົນ.ນອກຈາກເມືອງເອຊຽນເກມແລ້ວ,ງານກິລາເອຊຽນເກມກວາງໂຈວຄາດວ່າຈະນຳໃຊ້ສະໜາມແລະຫໍກິລາ 82ແຫ່ງ,ລວມທັງສະໜາມກິລາສຳຫລັບພິທີເປີດແລະປິດ 1 ແຫ່ງ,ສະໜາມແລະຫໍກິລາໃຊ້ສຳຫລັບການແຂ່ງຂັນ 56 ແຫ່ງແລະ ໃຊ້ສຳຫລັບການຝຶກຊ້ອມ 25 ແຫ່ງ,ໃນນັ້ນ,ສະໜາມແລະຫໍກິລາສ້າງໃໝ່ມີ 12 ແຫ່ງ,ປັບປຸງຕົບແຕ່ງໃໝ່ມີ 70 ແຫ່ງ.

ເດືອນເມສາປີ 2008,ສັນຍາລັກເຊິ່ງເປັນສັດສິລິມົງຄຸນຂອງງານກິລາເອຊຽນເກມກວາງໂຈວໄດ້ຖືກເປີດອອກ,ເປັນຮູບແບ້ 5 ໂຕ,ມີຊື່ແຕ່ລະໂຕຄື:ອາຊຽງ,ອາເຣີ,ອາຢູ,ອາອີ້ ແລະເລີຢັງຢັງທີ່ແຝງດ້ວຍຄວາມໝາຍວ່າ:"ສິລິມົງຄຸນແຫ່ງຄວາມກົມກຽວດັ່ງສົມປາດຖະໜາມີຄວາມສຸກທົ່ວໜ້າ"(ໃນພາສາຈີນແມ່ນ:"ຊຽງເຣີຢູອີ້ເລີຢັງຢັງ").ອີງຕາມການແນະນຳໃຫ້ຮູ້ວ່າ,ແນວຄິດການສ້າງສັດສິລິມົງຄຸນນີ້ແມ່ນມາຈາກນິທານແຕ່ພັນປີກ່ອນທີ່ມີເທວະດາ 5 ອົງຜັດປ່ຽນກັນຂີ່ແບ້ທີ່ບປາກຄາບຮວງເຂົ້າລົງມາສູ່ເມືອງກວາງໂຈວ,ອັນນີ້ມັນຖືກກັບເມືອງກວາງໂຈວທີ່ມີ"ແບ້ 5 ໂຕ"ເປັນສັນຍາລັກຂອງເມືອງທີ່ມີຊື່ສຽງ ແລະ ພ້ອມນັ້ນຫລາຍປະເທດຂອງທະວີບອາຊີກໍຖືວ່າແບ້ສາມາດນຳເອົາຄວາມໂຊກດີມາໃຫ້,ການເອົາແບ້ມາເປັນສັດສິລິມົງຄຸນຈຶ່ງສາມາດໄດ້ຮັບການຍອມຮັບຢ່າງຫລວງຫລາຍຂອງປວງຊົນໃນທະວີບອາຊີ.

"ສະແຫວງຫາປະສົບການ"ຈາກງານມະຫາກຳກິລາໂອລິມປິກປັກກິ່ງ

ໃນໄລຍະງານມະຫາກຳກິລາໂອລິມປິກປັກກິ່ງ,ຜູ້ຮັບຜິດຊອບຂອງທຸກພາກສ່ວນຂອງຄະນະກຳມະການຈັດງານກິລາເອຊຽນເກມກວາງໂຈວໄດ້ເດີນທາງໄປປັກກິ່ງ,ຜ່ານການສັງເກດແລະສຶກສາການດຳເນີນການແຂ່ງຂັນໃນງານກິລາໂອລິມປິກປັກກິ່ງເພື່ອ"ຊອກຫາປະສົບການ"ໃຫ້ແກ່ງານກິລາເອຊຽນເກມກວາງໂຈວ.

ການເອົາໃຈໃສ່ຕໍ່"ຄວາມລະອຽດ"ຂອງງານກິລາໂອລິມປິກປັກກິ່ງໄດ້ດຶງດູດຄວາມສົນໃຈຂອງຄະນະກຳມະການຈັດງານກິລາເອຊຽນເກມກວາງໂຈວ.ຕົວຢ່າງ,ຜູ້ຮັບຜິດຊອບຂະແໜງ



ສູນກິລາທຽນເຫີກວາງໂຈວ
广州天河体育中心

ການຜູ້ໜຶ່ງພາຍຫລັງໄດ້ສັງເກດຂະບວນການແຂ່ງຂັນຢູ່ໃນ"ສະໜາມກິລາກ້ອນນ້ຳ"ແລ້ວໄດ້ເວົ້າອອກມາວ່າ,ທຸກຄວາມລະອຽດຂອງ"ສະໜາມກິລາກ້ອນນ້ຳ"ນັ້ນແມ່ນລ້ວນແຕ່ໄດ້ຄຳນຶງເຖິງຢ່າງຄົບຖ້ວນຮອບຄອບ,ການອອກແບບ"ໂຄງສ້າງຂອງເປືອກແຜ່ນໃຍແສງ"ຂອງສະໜາມກິລາກ້ອນນ້ຳນັ້ນໄດ້ເຮັດໃຫ້ພາຍໃນສະໜາມຮັບເອົາແສງໄດ້ດີ,ເຊິ່ງຄຳນຶງເຖິງປະສິດທິພາບໃນການຮັກສາອຸນນະພູມ,ການຈັດວາງສີສັນ ແລະ ລວດລາຍຮູບພາບພາຍໃນສະໜາມແມ່ນມີຄວາມລະອຽດປານີດຫລາຍ,ຮູບພາບການຖ່າຍທອດອອກອາກາດຂອງໂທລະພາບຈະຢູ່ແຈມູມໃດກໍລ້ວນແຕ່ສາມາດເບິ່ງເຫັນຮູບສັນຍາລັກຂອງກິລາໂອລິມປິກ;ລາຍລະອຽດຕ່າງໆເຫລົ່ານັ້ນໄດ້ໃຫ້ບົດຮຽນອັນລ້ຳຄ່າຢ່າງຫລວງຫລາຍໃຫ້ແກ່ການອອກແບບສະໜາມກິລາເອຊຽນເກມກວາງໂຈວ.

ນັບແຕ່ປີ 2007 ເປັນຕົ້ນມາ,ຄະນະກຳມະການຈັດງານກິລາເອຊຽນເກມກວາງໂຈວໄດ້ຜັດປ່ຽນກັນສົ່ງຄະນະສຶກສາສອງຄະນະໄປຮ່ຳຮຽນນຳຄະນະກຳມະການຈັດງານໂອກລິມປິກປັກກິ່ງ,ເພື່ອຍົກສູງລະດັບວິຊາການຂອງພະນັກງານກະກຽມງານກິລາເອຊຽນເກມກວາງໂຈວ;ມື້ກ່ອນພິທີເປີດງານໂອລິມປິກປັກກິ່ງ,ຄະນະກຳມະການຈັດງານເອຊຽນເກມກວາງໂຈວ ແລະ ຄະນະກຳມະການຈັດງານໂອລິມປິກປັກກິ່ງໄດ້ເຊັ່ນສັນຍາ"ການນຳເຂົ້າບຸກຄະລາກອນ"ນຳກັນ.ພາຍຫລັງງານໂອລິມປິກປັກກິ່ງ,ບຸກຄະລາກອນວິຊາການຈຳນວນໜຶ່ງທີ່ເຂົ້າຮ່ວມການກະກຽມງານກິລາໂອລິມປິກປັກກິ່ງຈະເຂົ້າສູ່ຄະນະກຳມະການຈັດຕັ້ງງານກິລາເອຊຽນເກມກວາງໂຈວ,ເພື່ອເປັນກຳລັງແຮງຄຽງບ່າຄຽງໄຫລ່ຊ່ວຍກັນກະກຽມງານກິລາເອຊຽນເກມກວາງໂຈວ.


ແສງດາວຂາຍປຶ້ມ
老挝万象向导书屋








ຮ້ານ ແສງດາວ ຂາຍປຶ້ມ
SENGDAO Book-store

# ຄະນະຜູ້ແທນກົມສື່ມວນຊົນກະຊວງຖະແຫຼງຂ່າວວັດທະນະທຳສ ປປ ລາວຢ້ຽມຢາມສຳນັກພິມວາລະສານ<<ຈຳປາ>>ສ ປ ຈີນ

## 老挝新闻文化部大众媒体司代表团访问中国《占芭》杂志社

文 / 苏雯雯　图 / 张守义

为了贯彻“与邻为善，以邻为伴，睦邻友好，合作共赢”的外交方针，感谢老挝人民民主共和国新闻文化部大众媒体司长期以来对《占芭》杂志的关心和支持，加强双方友好往来，增进相互了解，以及进一步办好发好《占芭》杂志，应中共云南省委外宣办、云南省人民政府新闻办、《占芭》杂志社邀请，老挝新闻文化部大众媒体司司长万通 · 蓬乍亨，媒体产品管理处处长平马松 · 温达拉，媒体司技术干部派奔 · 皮拉通及贡汶 · 苏里翁一行四人，于 8 月 28 日—9 月 2 日前来昆明对中国《占芭》杂志社进行了友好访问，并举行座谈会，相互交流了经验，提出了好的办刊意见。

ເພື່ອຜັນຂະຫຍາຍທິດທາງການຕ່າງປະເທດທີ່ວ່າ "ເປັນເພື່ອນມິດທີ່ດີກັບເພື່ອນບ້ານໃກ້ຄຽງ, ເປັນໝູ່ຄູ່ທີ່ດີກັບເພື່ອນບ້ານໃກ້ຄຽງ, ຢູ່ຮ່ວມກັນໂດຍຄວາມຖືກຕ້ອງປອງດອງແລະສັນຖະອະໄມຕີກັບເພື່ອນບ້ານໃກ້ຄຽງ, ຮ່ວມມືກັນໄດ້ຮັບຜົນປະໂຫຍດພ້ອມກັນ "ແລະສະແດງຄວາມຂອບອົກຂອບໃຈນຳກົມສື່ມວນຊົນກະຊວງຖະແຫຼງຂ່າວວັດທະນະທຳສປປ ລາວອຳນວຍຄວາມເອົາໃຈໃສ່ແລະການສະໜັບສະໜູນຕໍ່ວາລະສານ<<ຈຳປາ>>ເປັນເວລາຍາວນານ, ເພີ່ມທະວີການໄປມາຫາສູ່ກັນສັນຖະອະໄມຕີທັງສອງຝ່າຍ, ເພີ່ມທະວີຄວາມເຂົ້າໃຈເຊິ່ງ




ພະນັກງານສຳນັກພິມວາລາສານ《ຈຳປາ》ຕ້ອນຮັບຄະນະຜູ້ແທນກົມສື່ມວນຊົນກະຊວງຖະແຫຼງຂ່າວວັດທະນະທຳ ສ ປປ ລາວທີ່ສະໜາມບິນ
《占芭》杂志社工作人员在机场迎接老挝新闻文化部大众媒体司代表团一行




ພາຍຫລັງສົນທະນາກັນແລ້ວ,ພະນັກງານສອງຝ່າຍຖ່າຍຮູບລວມ
国务院新闻办六局副局长葛广智（右四），云南省委宣传部副部长、云南省人民政府新闻办主任、《湄公河》《吉祥》《占芭》杂志社总编辑蔡春生（右五），云南省文化厅副厅长范建华（左三），云南省新闻出版局副局长艾罕丙（右二），云南省委宣传部副巡视员段汇成（左一）与老挝新闻文化部大众媒体司代表团一行合影

ກັນແລະກັນ,ແລະຈັດທຳວາລະສານ<<ຈຳປາ>>ໃຫ້ດີກວ່າເກົ່າ, ເພື່ອເປັນການຕອບສະໜອງຕາມຄຳເຊື້ອເຊີນຂອງຫ້ອງການໂຄສະນາຕໍ່ຕ່າງປະເທດຄະນະພັກແຂວງຢູນນານ,ຫ້ອງການການຂ່າວອຳນາດການປົກຄອງແຂວງຢູນນານແລະສຳນັກພິມວາລະສານ<<ຈຳປາ>>,ຄະນະຜູ້ແທນກົມສື່ມວນຊົນກະຊວງຖະແຫຼງຂ່າວວັດທະນະທຳສປປລາວນຳໂດຍທ່ານວັນທອງພົມຈັນເຮືອງຫົວໜ້າກົມສື່ມວນຊົນເປັນຫົວໜ້າ,ທ່ານພົມມະສອນອຸ່ນດາລາຫົວໜ້າພະແນກເປັນຮອງຫົວໜ້າຄະນະພ້ອມດ້ວຍທ່ານໄພບຸນ ພິລາທອງ,ນາງກອງບຸນສຸລິວົງພະນັກງານວິຊາການເປັນຈຳນວນ 4 ທ່ານໄດ້ມາຢ້ຽມຢາມສັນຖະວະໄມຕີສຳນັກພິມວາລະສາ<<ຈຳປາ>>ສ ປ ຈີນທີ່ຄຸນມິງແຕ່ວັນທີ 28 ສິງຫາ-ວັນທີ 2 ກັນຍາປີ 2008.ໄດ້ຈັດກອງປະຊຸມສົນທະນາກັນ, ແລກປ່ຽນບົດຮຽນເຊິ່ງກັນແລະກັນ,ແລະສະເໜີຄວາມຄິດຄວາມເຫັນໂດຍດີເພື່ອການຈັດທຳວາລາສານໃຫ້ດີກວ່າເກົ່າ.

ທ່ານໄຊຊູນແຊງຮອງກົມໂຄສະນາຄະນະພັກແຂວງຢູນນານ,ຫົວໜ້າໂຄສະນາຕໍ່ຕ່າງປະເທດ,ຫົວໜ້າຫ້ອງການຂ່າວອຳນາດການປົກຄອງແຂວງຢູນນານ,ຫົວໜ້າບັນນາທິການໃຫຍ່ວາລະສານ<<ແມ່ນ້ຳຂອງ>>,ວາລະສານ<<ມຸງຄຸນ>>,ວາລະສານ<<ຈຳປາ >>ໄດ້ສະແດງຄວາມຊົມເຊີຍ ແລະ ຍິນດີຕ້ອນຮັບຢ່າງສຸດອົກສຸດໃຈຕໍ່ການມາຢ້ຽມຢາມຂອງຄະນະຜູ້ແທນກົມສື່ມວນຊົນກະຊວງຖະແຫຼງຂ່າວວັດທະນະທຳສ ປປ ລາວ.ທ່ານເວົ້າວ່າ,ໃນວຽກງານພິມຈຳໜ່າຍແລະແຈກຢາຍວາລະສານ<<ຈຳປາ>>ນັ້ນ,ໄດ້ຮັບຄວາມເອົາໃຈໃສ່ ແລະ ການສະໜັບສະໜູນຈາກທ່ານຫົວໜ້າກົມວັນທອງພົມຈັນເຮືອງ ແລະ ທຸກຊັ້ນວັນນະຂອງລາວ,ເຮັດໃຫ້ວາລະສານ<<ຈຳປາ>>ໄດ້ຮັບຄວາມນິຍົມຊົມຊອບແລະຕີລາຄາສູງຈາກຜູ້ອ່ານອັນໄພສານຂອງລາວ, ດ້ວຍເຫດນີ້,ຂ້າພະເຈົ້າຂໍສະແດງຄວາມຂອບອົກຂອບໃຈຢ່າງສຸດອົກສຸດໃຈ !ຂ້າພະເຈົ້າຫວັງວ່າ,ໂດຍຜ່ານວາລະສານ<<ຈຳປາ>>ຈະເພີ່ມທະວີມິດຕະພາບ ແລະ ຄວາມເຂົ້າໃຈກັນທັງສອງຝ່າຍໃຫ້ເລິກເຊິ່ງຕື່ມອີກກ້າວໜຶ່ງ.ແລະ ຂໍອວຍພອນໃຫ້ການຢ້ຽມຢາມຄັ້ງນີ້ຂອງຄະນະຜູ້ແທນຈົ່ງໄດ້ຮັບຜົນສຳເລັດຢ່າງຈົບງາມ.

ກ່ອນອື່ນ,ທ່ານວັນທອງພົມຈັນເຮືອງຫົວໜ້າກົມສື່ມວນຊົນແນະນຳກົມສື່ມວນຊົນກະຊວງຖະແຫຼງຂ່າວວັດທະນະທຳໃນກອງປະຊຸມສົນທະນານັ້ນ,ທ່ານວ່າ,ກົມສື່ມວນຊົນເປັນຜູ້ຮັບຜິດຊອບວຽກງານສື່ມວນຊົນໃນທົ່ວປະເທດລາວ,ທັງຮັບຜິດຊອບການຄຸ້ມຄອງຂໍ້ມູນຂ່າວສານ ແລະ ວາລະສານໜັງສືພິມທຸກຊະນິດທີ່ມາຈາກຕ່າງປະເທດ.

ທ່ານວັນທອງເວົ້າວ່າ,ການທີ່ຄະນະຜູ້ແທນມາຢ້ຽມຢາມສຳນັກພິມວາລະສານ<<ຈຳປາ>>ນັ້ນ,ໄດ້ມີຄວາມໝາຍສຳຄັນ




ທັງສອງແລກປ່ຽນບົດຮຽນນຳກັນແລະຮ່ຳຮຽນເຊິ່ງກັນແລະກັນຢູ່ໃນກອງປະຊຸມສົນທະນາກັນ
座谈会上，双方交流经验，相互学习

ເຊິ່ງຊຸກຍູ້ການເພີ່ມທະວີຄວາມເຂົ້າໃຈກັນແລະມິດຕະພາບທັງສອງຝ່າຍໃຫ້ຕື່ມອີກ.ວາລະສານ<<ຈຳປາ>>ຈັດທຳສະບັບປະຖົມມະເລີກເປັນເວລາ 3 ປີທີ່ຜ່ານມາ,ໄດ້ປະທັບໃຈຢ່າງເລິກເຊິ່ງຢູ່ໃນດວງໃຈປະຊາຊົນລາວແລະລັດຖະບານລາວ.ຂ້າພະເຈົ້າຍ້ອງຍໍສັນລະເສີນຕໍ່ການຈັດທຳວາລະສານ<<ຈຳປາ>>ທີ່ໄດ້ສ້າງຄຸນງາມຄວາມດີແກ່ປະຊາຊົນລາວ,ລັດຖະບານລາວ ແລະປະຊາຊົນລາວສາມາດອ່ານໄດ້ວາລະສານ<<ຈຳປາ>>ທຸກສະບັບຕາມເວລາ,ວາລະສານນີ້ມີເນື້ອໃນອຸດົມສົມບູນ,ຮູບພາບທີ່ສວຍສົດງົດງາມ,ການອອກແບບທີ່ມີຄວາມດູດດຶ່ງສາຍຕາຄົນທັງຫຼາຍ.ປະຊາຊົນອັນໄພສານມັກອ່ານທີ່ສຸດ;ສິ່ງທີ່ສຳຄັນຍິ່ງຂອງວາລະສານ<<ຈຳປາ>>ແມ່ນເນື້ອໃນອຸດົມສົມບູນ,ເປັນຕົ້ນແມ່ນແນະນຳການໄປມາຫາສູ່ກັນແລະການຮ່ວມມືກັນສັນຖະອະໄມຕີລະຫວ່າງສອງຊາດລາວຈີນ,ຜູ້ນຳສອງຊາດດຳເນີນການຢ້ຽມຢາມເຊິ່ງກັນແລະກັນ,ຮີດຄອງປະເພນີທຸກຊົນເຜົ່າແລະທິວທັດທີ່ລືຊ່າຂອງຈີນ.ເຮັດໃຫ້ປະຊາຊົນລາວຍິ່ງສາມາດເຂົ້າໃຈຈີນ,ມີຫຼາຍເນື້ອໃນປະຊາຊົນລາວອ່ານແລ້ວກໍ່ຈະຈົດເອົາມາຮຽນ.ການພັດທະນາທາງສັງຄົມແລະວັດທະນະທຳຂອງຈີນລ້ວນແຕ່ເປັນບົດຮຽນທີ່ພວກເຮົາເປັນໜ້າຮຽນເອົາ;ນອກຈາກນັ້ນ,ປະຊາຊົນລາວທຸກຊັ້ນວັນນະໄດ້ເຫັນການເຄື່ອນໄຫວຂອງຜູ້ນຳທັງສອງຊາດຈີນຢ້ຽມຢາມເຊິ່ງກັນລະກັນທີ່ລົງພິມຢູ່ໃນວາລະສານ<<ຈຳປາ>>,ການສ້າງສາຂອງປະເທດຈີນ,ການປະຕິຮູບເປີດປະຕູສູ່ພາຍນອກຂອງຈີນລ້ວນແຕ່ເປັນແບບຢ່າງຂອງປະເທດລາວເຮົາເອົາມາເປັນແວ່ນແຍງ.ທາງດ້ານວຽກງານແປພາສານັ້ນ, ໂດຍຜ່ານການພະຍາຍາມຂອງສຳນັກພິມວາລະສານ<<ຈຳປາ >>,ປະຈຸບັນນີ້,ປະຊາຊົນລາວໄດ້ສ່ອງແສງສະທ້ອນດີຫຼາຍຕໍ່ວາລະສານ<<ຈຳປາ>>,ໃຜໃຜກໍ່ເວົ້າວ່າ,ການອອກແບບຂອງວາລະສານງາມຫຼາຍ,ການແປພາສາກໍ່ດີຫຼາຍ,ຫລັງຈາກປະຊາຊົນລາວອ່ານວາລະສານ<<ຈຳປາ>>ແລ້ວ,ຮູ້ສຶກໃກ້ຊິດກັບຄວາມຊິນເຄີຍອ່ານໜັງສືຂອງຕົນ,ການຈັດທຳໄດ້ດີ,ຈຸດປະສົງໃນການຢ້ຽມຢາມຂອງພວກເຮົາຄັ້ງນີ້ຄື: ໜຶ່ງແມ່ນເພື່ອສະແດງຄວາມຂອບອົກຂອບໃຈຕໍ່ສຳນັກພິມວາລະສານ<<ຈຳປາ>>ສ້າງຄຸນງາມຄວາມດີແກ່ລາວ;ສອງແມ່ນເພີ່ມທະວີການແລກປ່ຽນເຊິ່ງກັນແລະກັນລະຫວ່າງທັງສອງສື່ມວນຊົນໃຫ້ເລິກເຊິ່ງ,ເພີ່ມທະວີຄວາມເຂົ້າໃຈກັນໃຫ້ຕື່ມອີກກ້າວໜຶ່ງ.ປະຈຸບັນນີ້,ປະເທດເຮົາຍັງບໍ່ທັນມີຄວາມສາມາດຈັດທຳວາລະສານສະບັບໜຶ່ງມາໂຄສະນາມິດຕະພາບລະຫວ່າງຈີນ-ລາວ,ຕໍ່ນີ້ພາຍໜ້າ,ພວກເຮົາຈະຕ້ອງພະຍາຍາມແລະປຸກລະດົມຜູ້ອ່ານຂອງລາວຂຽນບົດຄວາມໃຫ້ວາລະສານ<<ຈຳປາ>>ເພື່ອປະກອບສ່ວນເຂົ້າໃນການພັດທະນາມິດຕະພາບລະຫວ່າງຈີນ-ລາວ. ໂດຍຜ່ານການຢ້ຽມຢາມເທື່ອນີ້,ພວກເຮົາແນ່ນອນຕ້ອງນຳເອົາຄວາມຍອດຢ້ຽມທີ່ເຫັນໄດ້ແລະ



ທ່ານວັນທອງ ພົນຈັນເຮືອງຫົວໜ້າກົມມອບຂອງຂວັນໃຫ້ທ່ານໄຊຊູນແຊງຮອງກົມຄະນະພັກແຂວງຢູນນານ,ຫົວໜ້າຫ້ອງການໂຄສະນາຕໍ່ຕ່າງປະເທດ,ຫົວໜ້າຫ້ອງການຂ່າວອຳນາດການປົກຄອງແຂວງຢູນນານແລະຫົວໜ້າບັນນາທິການວາລາສານ《ແມ່ນ້ຳໂຂງ》,ວາລາສານ《ມຸງຄຸນ》,ວາລາສານ《ຈຳປາ》
万通 · 蓬乍亨司长向云南省委宣传部副部长、云南省人民政府新闻办主任,《湄公河》《吉祥》《占芭》杂志社总编辑蔡春生赠送礼品



ທ່ານກົວກວາງຈືຮອງກົມກົມ6ຫ້ອງວ່າການຂ່າວຄະນະລັດຖະບານ ສ ປ ຈີນມອບຂອງຂວັນທອນໄຟເມກເຝືອໃຫ້ທ່ານວັນທອງ ພົນຈັນເຮືອງຫົວໜ້າກົມສື່ມວນຊົນ
国务院新闻办六局副局长葛广智向万通 · 蓬乍亨司长赠送祥云火炬

ຮຽນເອົານັ້ນກັບຄືນສູ່ລາວ, ໂຄສະນາຈີນ,ເພື່ອອຸທິດກຳລັງໃຫ້ແກ່ປະຊາຊົນລາວ.

ທີ່ນີ້,ຂ້າພະເຈົ້າກໍ່ສ່ອງແສງສະທ້ອນຂອງປະຊາຊົນລາວຕໍ່ງານກິລາໂອລິມປິກປັກກິ່ງໃຫ້ພວກທ່ານຊາບປະຊາຊົນລາວເຫັນວ່າ,ງານກິລາໂອລິມປິກປັກກິ່ງຄັ້ງນີ້ແມ່ນງານມະໂຫລານທີ່ບໍ່ເຄີຍມີມາກ່ອນ.ແຕ່ເປີດພິທີຫາອັດພິທີ,ປວງຊົນລາວຮັບຊົມເບິ່ງທຸກວັນ,ລວມທັງຂ້າພະເຈົ້າເອງ,ຄອບຄົວເຮົາໝົດທຸກຄົນແຕ່ເຊົ້າຮອດຄ່ຳຮັບເບິ່ງທຸກວັນ,ພວກເຮົາຮູ້ສຶກວ່າ,ງານກິລາໂອລິມປິກປັກກິ່ງຄັ້ງນີ້ທີ່ຈັດຂຶ້ນນັ້ນງາມຫຼາຍທີ່ສຸດ,ໄດ້ຮັບຜົນສຳເລັດດີຫຼາຍ,ງານມະຫາກຳມະໂຫລານຄືຈັ່ງຊີ້ແມ່ນບໍ່ເຄີຍຄິດເຖິງຈັກເທື່ອ!ຕາມທີ່ຂ້າພະເຈົ້າຮູ້ຈັກນັ້ນ,ປະເທດອັງກິດເປັນເຈົ້າພາບຈັດ ງານກິລາໂອລິມປິກຄັ້ງໜ້າສ່ອງແສງສະທ້ອນແຮງຫຼາຍທີ່ສຸດ,ເຂົາເຈົ້າສົມທຽບກັບຈີນ,ຄົ້ນຄວ້າເຮັດຈັ່ງໃດຈຶ່ງຈະຈັດສົນງານກິລາໂອລິມປິກຄັ້ງໜ້າໃຫ້ດີຂຶ້ນ. ງານກິລາໂອລິມປິກປັກກິ່ງໄດ້ສະແດງວັດທະນະທຳທີ່ມີປະຫວັດສາດ 5 ພັນປີຂອງຈີນໃຫ້ປະຊາຊົນທົ່ວໂລກຢ່າງສິ້ນເຊີງ,ສະນັ້ນ,ພວກເຮົາຂໍສະແດງຄວາມອວຍໄຊໃຫ້ພອນໃຫ້ເພິ່ນ.

ທ່ານຫົວໜ້າກົມວັນທອງສະແດງວ່າ,ທັນວາປີນີ້,ສຳນັກພິມວາລະສານ<<ຈຳປາ>>ແລະສະຖານທູດຈີນປະຈຳລາວຮ່ວມກັນຈັດຕັ້ງການເຄື່ອນໄຫວປະກວດຮ້ອງເພງຈີນທີ່ນະຄອນວຽງຈັນ,ກົມສື່ມວນຊົນຈະຕ້ອງພະຍາຍາມມີສ່ວນຮ່ວມແລະປະສານງານ,ໃຫ້ສື່ມວນຊົນທີ່ຂຶ້ນກັບກົມເຮົາດຳເນີນການໂຄສະນາແລະລາຍງານຂ່າວ.ທ່ານຝັນຈຽນຮວາຫົວໜ້າກົມວັດທະນະທຳແຂວງຢູນນານ,ທ່ານອ້າຍຫານປິນຮອງກົມຖະແຫຼງຂ່າວແລະພິມຈຳໜ່າຍແຂວງຢູນນານໄດ້ເຂົ້າຮ່ວມກອງປະຊຸມສົນທະນາ,ຕ່າງກໍ່ໄດ້ປະກອບຄຳຄິດຄຳເຫັນຢູ່ໃນກອງປະຊຸດດັ່ງກ່າວນີ້.ໄດ້ສະແດງຄວາມຊົມເຊີຍແລະຍິນດີຕ້ອນຮັບຕໍ່ຄະນະຜູ້ແທນກົມສື່ມວນຊົນລາວຢ່າງ



ພະນັກງານທັງສອງຝ່າຍຖ່າຍຮູບລວມກັບນັກສະແດງທີ່ບ້ານວັດທະນະທຳຝູປາວ
双方人员在福保文化村与演员合影



ຄະນະຜູ້ແທນລາວຖ່າຍຮູບລວມກັບນັກສະແດງທີ່ບ້ານວັດທະນະທຳຝູປາວ
代表团一行在福保文化村与演员合影









ສຸດອົກສຸດໃຈ.ພ້ອມກັນນັ້ນ,ແລະໄດ້ຮັຍຮອງຜົນງານທຸກປະການທີ່ວາລະສານ<<ຈຳປາ>>ຈັດທຳເປັນເວລາ 3 ປີທີ່ໄດ້ຮັບນັ້ນ,ຫວັງວ່າ,ຜ່ານການຈັດທຳວາລະສານ<<ຈຳປາ>>ຈະເພີ່ມທະວີມິດຕະພາບລະຫວ່າງຈີນກັບລາວ.ທ່ານຢາງຢູນຫົວໜ້າບັນນາທິການບໍລິຫານຂອງວາລະສານ<<ຈຳປາ>>ໄດ້ແນະນຳສະພາບການພັດທະນາວາລະສານ<<ຈຳປາ>>ໂດຍສັງເຂບ.ທ່ານກົວກວາງຈືຮອງກົມການຂ່າວຄະນະລັດຖະບານສ ປ ຈີນມາເຂົ້າຮ່ວມກອງປະຊຸມສົນທະນາຄັ້ງນີ້ຈາກປັກກິ່ງມາຄຸນມິງໂດຍບໍ່ຢ້ານໄກແສນໄກ.ທ່ານເວົ້າວ່າ, 4 ປີກ່ອນ,ຂ້າພະເຈົ້າມີຄວາມປິຕິຍິນດີໄປຢ້ຽມຢາມກະຊວງຖະແຫຼງຂ່າວວັດທະນະທຳ ສປປ ລາວ,ເທື່ອນີ້ໄດ້ພົບເຫັນຫົວໜ້າກົມພ້ອມດ້ວຍຄະນະຮູ້ສຶກດີອົກດີໃຈຫຼາຍທີ່ສຸດເໝືອນດັ່ງພົບກັນເພື່ອນເກົ່າເພື່ອນແກ່.ຫ້ອງການຂ່າວສ ປ ຈີນເອົາໃຈໃສ່ນຳການໄປມາຫາສູ່ກັນລະຫວ່າງຈີນ-ລາວແລະເອົາໃຈໃສ່ການມາຢ້ຽມຢາມຂອງທ່ານຫົວໜ້າກົມວັນທອງພ້ອມດ້ວຍຄະນະຄັ້ງນີ້,ຢືນຢັນຜົນງານທີ່ສຳນັກພິມວາລະສານ<<ຈຳປາ>>ທີ່ໄດ້ຮັບຢ່າງເຕັມທີ,ຖືໂອກາດນີ້,ຂໍສະແດງຄວາມຂອບອົກຂອບໃຈມາຍັງທ່ານຫົວໜ້າກົມວັນທອງທີ່ອຳນວຍຄວາມສະດວກແລະໃຫ້ການສະໜັບສະໜູນແກ່ວາລະສານ<<ຈຳປາ>>ເປັນເວລາຍາວນານ.3 ປີທີ່ຜ່ານມາ,ໃຕ້ການນຳພາແລະການສະໜັບສະໜູນຂອງລັດຖະບານລາວ,ຈັດທຳວາລະສານ<<ຈຳປາ>>ນັບມື້ນັບດີກວ່າເກົ່າ,ໄດ້ຮັບຄວາມນິຍົມຊົມຊອບຈາກຜູ້ອ່ານລາວນັບມື້ນັບຫຼາຍຂຶ້ນ.ຂ້າພະເຈົ້ານຳເອົາຂ່າວສອງຂໍ້ໃຫ້ພວກທ່ານຊາບ,ໜຶ່ງແມ່ນສອງອາທິດກ່ອນເປີດງານກິລາໂອລິມປິກ,ວາລະສານ<<ຈຳປາ>>ໄດ້ໄວ້ຢູ່ໃນສູນການຂ່າວສາກົນປັກກິ່ງໃນປີ 2008,ນັກຂ່າວທັງໝົດທີ່ມາຈາກທົ່ວໂລກສາມາດເບິ່ງເຫັນວາລະສານ<<ຈຳປາ>>ຢູ່ທີ່ນີ້ໄດ້,ອັນນີ້ສະແດງໃຫ້ເຫັນວ່າຜົນສະທ້ອນຂອງວາລະສານ<<ຈຳປາ>>ບໍ່ພຽງແຕ່ແມ່ນຢູ່ຈີນແລະລາວ.ສອງແມ່ນທັນວາປີ 2005,ສະບັບອິນເຕີເນັດຂອງວາລະສານ<<ຈຳປາ>>ລົງພິມຢູ່ໃນເວັບໄຊເຊື່ອມຕໍ່ສາກົນຂອງສະຖານີວິທະຍຸກະຈາຍສຽງສາກົນສ ປ ຈີນ,ເວັບໄຊເຊື່ອມຕໍ່ສາກົນມີ 43 ພາສາ,ພາສາລາວພຽງແຕ່ແມ່ນໜຶ່ງໃນ 43 ພາສາ;ຕາມທີ່ຂ້າພະເຈົ້າຮູ້ຈັກວ່າ,ຢູ່ໃນໜ້າສະບັບພາສາລາວນັ້ນອັດຕາເປີດເບິ່ງຂອງວາລະສານ<<ຈຳປາ>>ເປັນອັນດັບທີ 1.ອັນນີ້ສະແດງໃຫ້ເຫັນວ່າ,ພວກເຂົາເຈົ້າມີຄວາມສົນໃຈຫຼາຍທີ່ສຸດຕໍ່ສລະສານ<<ຈຳປາ>>ສະບັບພາສາລາວ.ແຕ່ວ່າ,ຜູ້ເປີດເບິ່ງເຫຼົ່ານີ້ມາຈາກປະເທດອາເມລິກາແລະປະເທດເອີລົບ,ອັນນີ້ກໍ່ສະແດງໃຫ້ເຫັນຕື່ມອີກວ່າ,ຜົນສະທ້ອນຂອງວາລະສານ<<ຈຳປາ>>ບໍ່ພຽງແຕ່ຈຳກັດຢູ່ຈີນແລະລາວເທົ່ານັ້ນ,ເລີຍແມ່ນລັກສະນະທົ່ວໂລກ.ເພື່ອສະແດງຄວາມຂອບອົກຂອບໃຈນຳກະຊວງຖະແຫຼງຂ່າວວັດທະນະທຳສ ປປ ລາວ,ທ່ານຮອງກົມກົວກວາງຈືມອບຂອງຂວັນຂອງງານກິລາໂອລິມປິກປັກກິ່ງປີ 2008 --ທອນໄຟເມກເພື່ອສິລິມຸງຄຸນໃຫ້ທ່ານຫົວໜ້າກົມວັນທອງ ພົນຈັນເຮືອງ.

ຫຼັງຈາກກອງປະຊຸມສົນທະນາສິ້ນສຸດລົງແລ້ວ,ຄະນະຜູ້ແທນກົມສື່ມວນຊົນລາວໄປທັດສະນະສຶກສາຕາລີ,ຫລີຈຽງ.ພວກ

ທ່ານສະແດງວ່າ,ສາມາດເຫັນທິວທັດຕາລີແລະຫລີຈຽງຮູ້ສຶກດີອົກດີໃຈຫຼາຍທີ່ສຸດ,ພາບວິວເຂດນີ້ສວຍສົດງົດງາມ, "ແຕ່ກ່ອນ,ພາບວິວເຫຼົ່ານີ້ມີແຕ່ເຫັນໄດ້ຢູ່ໃນຄວາມຝັນ,ປະຈຸບັນນີ້,ຄວາມຝັນກາຍເປັນຄວາມຈິງແລ້ວ",ພວກເຮົາກັບເມືອລາວແລ້ວ,ຈະຕ້ອງຂຽນບົດຄວາມຫຼາຍເພື່ອໂຄສະນາຕາລີແລະຫລີຈຽງ.ພາຍຫລັງຊົມເບິ່ງການສະແດງສິລະປະວັນນະຄະດີຂະໜາດໃຫຍ່ທີ່ວ່າ<<ຝູທຽນປາວຕີ>>, <<ຄວາມຝັນຂອງແມງກະເບື້ອ>>,<<ນ້ຳຈິນສາທີ່ສວຍງາມ>>,<<ພາບປະທັບໃຈຫລີຈຽງ>>ແລ້ວ,ຮູ້ສຶກກະຕຸ້ນໃຈວ່າ,ການສະແດງສວຍສົດງົດງາມ,ແລະສະຫງ່າຜ່າເຜີຍ.ຜ່ານການຢ້ຽມຢາມແລະທັດສະນະສຶກສາໄດ້ປະທັບໃຈຢ່າງເລິກເຊິ່ງຕໍ່ຊົນເຜົ່າສ່ວນໜ້ອຍຂອງແຂວງຢູນນານຄືະເຜົ່ານາຊີ,ເຜົ່າປາຍແລະເຜົ່າອື່ນໆ.ແລະມີຄວາມເຂົ້າໃຈຕໍ່ວັດທະນະທຳຊົນເຜົ່າຂອງຈີນຕື່ມອີກກ້າວໜຶ່ງ.ຢູ່ເທິງພູຫິມະຢືລອງ,ຄະນະຜູ້ແທນກົມສື່ມວນຊົນລາວທີ່ໄດ້ເຫັນຫິມະເທື່ອທຳອິດ,ຫຼິ້ມຈົນເບີກບານມ່ວນຊື່ນສຸດຂີດ,ເຖິງແມ່ນວ່າ,ເທິງພູຫິມະສິງຫາບໍ່ມີຫິມະຫຼາຍປານໃດກໍ່ຕາມແຕ່ວ່າ,ພວກເຮົາຮູ້ສຶກເພິ່ງພໍໃຈແລ້ວ.ທ່ານຫົວໜ້າກົມວັນທອງພົນຈັນເຮືອງເປົ່າເຄື່ອງດົນຕີເຮັດດ້ວຍນ້ຳໝາກເຕົ້າທີ່ສຳນັກພິມວາລະສານ<<ຈຳປາ>>ມອບເປັນຂອງຂວັນຢູ່ໃນງານລ້ຽງສົ່ງຄ່ຳທີ່ກ່ອນຈະກັບຄືນປະເທດນັ້ນ,ຮ້ອງເພງ "ຖຽນມີມີ" (ຫວານຊື່ນໃຈ)ຮ່ວມກັນກັບພະນັກງານສຳນັກພິມວາລະສານ<<ຈຳປາ>>,ນາງກອງບຸນ ສຸລີວົງພະນັກງານວິຊາການຂອງກົມສື່ມວນຊົນໄດ້ຟ້ອນລຳວົງລາວ,ສະແດງອາລົມຈິດທີ່ເບີກບານມ່ວນຊື່ນຂອງພວກເຂົາເຈົ້າ.









ຄະນະຜູ້ແທນລາວທ່ຽວຊົມຕາລີ,ຫລີຈຽງ
代表团一行游览大理、丽江

# ປະລິມານຂົນສົ່ງຜູ້ໂດຍສານດ້ວຍລົດເມສາກົນຄຸນມິງ–ວຽງຈັນໄດ້ເພີ່ມຂຶ້ນຫລາຍ



## 昆明—万象国际班车客流增大

图 / 蓝 天

随着云南省与周边国家合作与交往日益密切，昆明－老挝国际班车的客流量逐渐增多，班车由原来的三天对开一班，增加到现在的每天对开一班，在此基础上，昆明今后还有望开通到泰国、越南等邻近国家的班车。

ຄຽງຄູ່ກັບການຮ່ວມມືແລະໄປມາຫາສູ່ກັນລະຫວ່າງແຂວງຢູນນານກັບປະເທດໃກ້ຄຽງນັບມື້ນັບເພີ່ມຂຶ້ນ, ປະລິມານຂົນສົ່ງຜູ້ໂດຍສານຂອງລົດເມສາກົນຄຸນມິງ-ວຽງຈັນກໍໄດ້ເພີ່ມຂຶ້ນເປັນເທື່ອລະກ້າວ, ລົດເມຄຸນມິງ-ວຽງຈັນ 3 ມື້ອອກຖ້ຽວ 1 ພ້ອມກັນໃນເມື່ອກ່ອນໄດ້ເພີ່ມຂຶ້ນມື້ລະອອກຖ້ຽວ 1 ພ້ອມກັນໃນປັດຈຸບັນ. ບົນພື້ນຖານດັ່ງກ່າວນີ້, ຕໍ່ນີ້ເມື່ອໜ້າ, ຄຸນມິງຈະເປີດຖ້ຽວລົດໂດຍສານຈາກຄຸນມິງຫາໄທແລະຫວຽດນາມ.

ລົດໂດຍສານສາກົນຄຸນມິງຫາວຽງຈັນລາວລິເລີ່ມແຕ່ເດືອນ 5 ປີ 2002, ໄດ້ສ້າງປະຫວັດສາດໃໝ່ ແຫ່ງການຂົນສົ່ງ ຜູ້ໂດຍສານທາງບົກໂດຍກົງຈາກຈີນຫານະຄອນຫລວງຂອງປະເທດໃກ້ຄຽງ. ເນື່ອງຈາກວ່າ, ທຶນຮອນຂອງບໍລິສັດຂົນສົ່ງຝ່າຍລາວບໍ່ພຽງພໍ, ມີພຽງແຕ່ຝ່າຍຈີນປ່ອຍລົດໄປຫາວຽງຈັນແຕ່ຝ່າຍດຽວ, ຖ້ຽວລົດດໍາເນີນງານພຽງແຕ່ໄລຍະໜຶ່ງ, ຍ້ອນແຫຼ່ງແຂກບໍ່ຫລາຍ, ບໍ່ມີຄົນຈັດຫາຜູ້ໂດຍສານເລີຍໂຈະການຂົນສົ່ງ.



ພາຍຫລັງ3ປີ, ຖ້ຽວລົດສາກົນດັ່ງກ່າວນີ້ກໍ່ຟື້ນຟູແຕ່ສະຖານີລົດໂດຍສານຕາເວັນຕົກຄຸນມິງຫາວຽງຈັນອີກເພື່ອຂະຫຍາຍແຫຼ່ງແຂກໃຫ້ກວ້າງຂວາງໃນເດືອນ2 ປີ 2006, ໄດ້ຜ່ານການປັບປຸງຍົກຍ້າຍເຖິງສະຖານີລົດໂດຍສານຄຸນມິງ.

ສະຖານີລົດໂດຍສານຄຸນມິງມີທີ່ຕັ້ງຢູ່ທີ່ໃຈກາງທີ່ມີຄົນຫລາຍໃນນະຄອນຄຸນມິງ. ເຊື່ອມຕໍ່ກັນກັບສະຖານີລົດໄຟແລະສະໜາມບິນປັດຈຸບັນນີ້, ຈຳນວນປ່ອຍລົດທຸກມື້ເຖິງ 500 ກວ່າຖ້ຽວ, ປະລິມານຜູ້ໂດຍສານເຂົ້າອອກເຖິງ 10 ພັນກວ່າຄົນ, ໄລຍະມື້ບຸນພັກເຖິງຫລາຍສິບພັນຄົນ, ມີທ່າແຮງຂອງແຫຼ່ງແຂກໂດດເດັ່ນທີ່ສຸດ. ແຫຼ່ງແຂກຂອງລົດໂດຍສານສາກົນແຕ່ຄຸນມິງຫາວຽງຈັນເປັນຕົ້ນແມ່ນມາຈາກນັກທຸລະກິດແລະພໍ່ຄ້າຊາວຂາຍທີ່ໄປກັບວຽງຈັນຄຸນມິງ, ສະຖານີລົດໂດຍສານຄຸນມິງຕິດກັບຕະຫລາດ






ຂາຍຍົກລໍຊີທອັນທີ່ມີຊື່ດັງໃນທິດຕະເວັນຕົກຈີນແລະຕະຫລາດຂາຍຍົກນານຢາວ, ໄດ້ອຳນວຍຄວາມສະດວກແກ່ແຫຼ່ງແຂກທີ່ໝັ້ນທ່ຽງພາກສ່ວນນີ້. ນອກນັ້ນ, ຫລັງຈາກລົດໂດຍສານສາກົນແຕ່ຄຸນມິງຫາວຽງຈັນໂລ່ງຫາກັນແລ້ວ, ສະຖານີລົດໂດຍສານຄຸນມິງດຳເນີນການໂຄສະນາ ແລະ ຈັດຫາແຂກດ້ວຍຫລາຍຮູບຫລາຍແບບ, ເຮັດໃຫ້ນັກທຸລະກິດ, ພໍ່ຄ້າຊາວຂາຍ, ນັກທ່ອງທ່ຽວພາຍໃນແລະຕ່າງປະເທດຄົນງານ, ນັກຮຽນນັກສຶກສາເຊິ່ງຂີ່ລົດໂດຍສານສາກົນນີ້ນັບມື້ນັບຫລາຍຂຶ້ນຊຸກໄຊ. ລະດັບຄວາມຮອງຮັບຂອງຜູ້ໂດຍສານພາຍໃນ ແລະ ຕ່າງປະເທດຕໍ່ການຂີ່ລົດໂດຍສານສາກົນນີ້ນັບມື້ນັບສູງຂຶ້ນ, ຈຳນວນແຂກນັບມື້ນັບເພີ່ມຂຶ້ນ, ຕາມສະຖິຕິເດືອນ2-12 ປີ 2006, ຍອດຈຳນວນຜູ້ໂດຍສານມີ 9062 ເທື່ອຄົນ, ອັດຕາບັນຈຸຄົນຕົວຈິງເຖິງ 79,7%; ເດືອນ 1-12 ປີ 2007, ຍອດຈຳນວນຜູ້ໂດຍສານ 12672 ເທື່ອ



ຄົນ,ອັດຕາບັນຈຸຄົນຕົວຈິງເຖິງ 90%;ເດືອນ 1-3 ປີ 2008, ຍອດຈຳນວນຜູ້ໂດຍສານ 2992 ເທື່ອຄົນ,ອັດຕາບັນຈຸຄົນຕົວຈິງເຖິງ91%;ຖ້ຽວລົດ 3 ມື້ປ່ອຍຖ້ຽວໜຶ່ງໃນເມື່ອກ່ອນເຖິງມື້ລະຖ້ຽວໃນປັດຈຸບັນນີ້.

ເພື່ອອຳນວຍຄວາມສະດວກແກ່ຜູ້ໂດຍສານ,ກຸ່ມບໍລິສັດຈຳກັດຂົນສົ່ງຄົນນາຄົນຄຸນມິງໄດ້ວາງມາດຕາການອຳນວຍຄວາມສະດວກແລະບໍລິການເປັນລະບົບໜຶ່ງແກ່ຜູ້ໂດຍສານ,ໄດ້ສັບຊ້ອນພະນັກງານຈັດວາງແລະຜູ້ບໍລິການທີ່ຮູ້ພາສາລາວເພື່ອສະເພາະຮັບໃຊ້ຜູ້ໂດຍສານ. ໄດ້ນຳໃຊ້ກະຈາຍສຽງດ້ວຍພາສາອັງກິດແລະພາສາຈີນຢູ່ທີ່ສະຖານີຈອດລົດvip.ສູນບໍລິການລົດໂດຍສານທີ່ສ້າງຂຶ້ນໃໝ່ນັ້ນດຳເນີນງານທົດລອງແຕ່ວັນທີ 1 ເດືອນ 7 ປີນີ້,ບ່ອນຂາຍປີ້ລວມປະຕິບັດບໍລິການທີ່ປຶກສາດ້ວຍພາສາອັງກິດ,ພາສາຈີນແລະພາສາຕ່າງກາຍ;ສະໜອງບໍລິການຈ່ອງປີ້,ຮັບເອົາປີ້,ສົ່ງປີ້,ເໝົາລົດຕໍ່ພາຍນອກແລະບໍລິການທ່ອງທ່ຽວພາຍໃນແລະຕ່າງປະເທດເປັນຕົ້ນ.ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງຕະຫລາດຂົນສົ່ງຜູ້ໂດຍສານ.ລົດໂດຍສານສາກົນຄຸນມິງຫາວຽງຈັນໄດ້ດຳເນີນການຂົນສົ່ງເປັນເວລາ 2 ປີກວ່ານັ້ນ,ໄດ້ອຳນວຍຄວາມສະດວກດີໃຫ້ແກ່ຜູ້ໂດຍສານອອກເດີນ.

# ເມືອງລາວຈະອະນຸມັດສື່ມວນຊົນຕ່າງປະ ເທດສ້າງຕັ້ງສຳນັກງານສາຂາຢູ່ລາວ

## 老挝将允许外国媒体设分支机构

老挝国会《新闻法》起草委员会主任 Duangdy Outtachak 表示，老挝正在起草一项《新闻法》，允许外国新闻机构在老挝设立分支机构，并进行新闻采访活动，同时允许私营经济进入媒体产业。

ທ່ານ Duangdyouttachak ຫົວໜ້າກຳມະທິການກົດໝາຍສະພາແຫ່ງຊາດ ສ ປປ ລາວສະແດງວ່າ,ປະເທດລາວພວມແຕ່ງຮ່າງກົດໝາຍວ່າດ້ວຍຂ່າວສານຫົວໜຶ່ງ,ຈະອະນຸມັດໃຫ້ສຳນັກງານຂ່າວສານຕ່າງປະເທດສ້າງຕັ້ງສຳນັກງານສາຂາຢູ່ລາວແລະດຳເນີນການເຄື່ອນໄຫວເກັບຂ່າວ,ພ້ອມກັນນັ້ນ,ຈະອະນຸມັດເສດຖະກິດເອກະຊົນເຂົ້າສູ່ກິດຈະກຳສື່ມວນຊົນ.

<<ຫນັງສືພິມທາມວຽງຈັນ>>ວັນທີ17ນຳໃຊ້ຄວາມເວົ້າຂອງທ່ານດວງດີວ່າ,ເມື່ອເວລາໂອກາດສຸກງອມແລ້ວ,ລາວຈະເປີດກິດຈະກຳສື່ ມວນຊົນຕໍ່ນັກລົງທຶນຕ່າງປະເທດ.ປັດຈຸບັນນີ້,ບໍລິສັດຕ່າງປະເທດຍັງບໍ່ສາມາດຈັດທຳໜັງສືພິມ,ວິທະຍຸກະຈາຍສຽງແລະໂທລະທັດຢູ່ລາວໄດ້.

ທ່ານດວງດີວ່າ,ຮ່າງ<<ກົດໝາຍວ່າດ້ວຍຂ່າວສານ>>–ກໍເຫັນດີອະນຸມັດສຳນັກຂ່າວສານລາວໄປສ້າງຕັ້ງສຳນັກຂ່າວສາຂາຢູ່ຕ່າງປະເທດໄດ້.ແລະເຫັນດີເອົາທຶນປະຊາຊົນຈັດທຳໜັງສືພິມກໍໄດ້ເພື່ອເລັ່ງລັດການພັດທະນາຢ່າງຮອບດ້ານຂອງກິດຈະກຳສື່ມວນຊົນ,ສະໜອງຂໍ້ມູນຂ່າວສານຍິ່ງຫຼາຍກວ່າເກົ່າແກ່ຜູ້ອ່ານລາວ.

ທ່ານເວົ້າວ່າ, ຮ່າງ<<ກົດໝາຍວ່າດ້ວຍຂ່າວສານ>>ຍັງຊີ້ກຳນົດກ່ຽວກັບການຮັບປະກັນສິດທິເກັບຂ່າວທີ່ຖືກຕາມກົດໝາຍຂອງສື່ມວນຊົນ, ຕໍ່ນີ້ໄປໜ້າ,ອົງການໃດໆປະຕິເສດຄຳຮ້ອງຂໍເກັບຂ່າວທີ່ຖືກຕາມກົດໝາຍຈາກສື່ມວນຊົນຈະຖືເປັນຜິດຕິກຳຜິດກົດໝາຍ.










ບໍລິການນຳທ່ຽວພາຍໃນແລະຕ່າງປະເທດ

ບໍລິການຂາຍປີ້ຍົນພາຍໃນແລະຕ່າງປະເທດ

ບໍລິການຂາຍປີ້ລົດໄຟ ລົດບັດໄປປະເທດໄທ,ຫວຽດນາມ

ບໍລິການເຊົ່າລົດເກັ່ງ ລົດຈິບຖ0. ລົດຕູ້12,15ບ່ອນນັ່ງ ລົດບັດ25,35,45 ບ່ອນນັ່ງ

ບໍລິການແລ່ນວີຊາໄປຕ່າງປະເທດ





ສົນໃຈເຊີນຕິດຕໍ່: ບໍລິສັດທ່ອງທ່ຽວຄຳຫລ້າຈຳກັດ

042/3 ຖະໜົນຟ້າງຸ່ມ ບ້ານມີໄຊ ເມືອງຈັນທະບູລີ

ແຂວງນະຄອນຫລວງວຽງຈັນ ສ.ປ.ປ.ລາວ

Tel/Fax: (856-21) 218677, 218107

Mobile: (856-20) 5606000, 5620161, 5519334

E-mail: khamlatours39@yahoo.com

www.khamla.com

**Inbound Tour**

We provide:

- Tour in Vientiane
- Tour in VangViene
- Tour in Luangprabang
- Tour in Pakze
- Tour in Northern Laos
- Tour in Southern Laos

**Outbound Tour**

We provide:

- Tour to China
- Tour to Malaysia
- Tour to VietNam
- Tour to Cambodia
- Tour to Thailand
- Tour to asia

绘图/刘金昆



# ສັ່ງຊື້ຂອງ

yù dìng huò wù
## 预订货物

yī qíng jǐng duì huà
### 一、情景对话

文/陆 蕊

ສະຖານະພາບຂອງການສົນທະນາ:

hěn gāo xìng zài cì jiàn dào nín wáng xiān shēng
A：很高兴再次见到您，王先生。
ທ່ານຫວ່າງ,ຮູ້ສຶກດີອົກດີໃຈຫຼາຍທີ່ສຸດພົບໜ້າພົບຕາກັບທ່ານອີກເທື່ອໜຶ່ງ.

dài lǐ hé tong yǐ jīng qiān hǎo le xī wàng wǒ men hé zuò yú kuài
B：代理合同已经签好了，希望我们合作愉快。
ສັນຍາຕົວແທນໄດ້ເຊັນກັນຮຽບຮ້ອຍດີແລ້ວ,ຫວັງວ່າພວກເຮົາຮ່ວມມືກັນໂດຍຄວາມເບີກບານມ່ວນຊື່ນ.

zuó tiān wǒ gěi nín chuán qù yī fèn xīn chǎn pǐn míng lù shōu dào le ma
A：昨天我给您传去一份新产品名录，收到了吗？
ມື້ວານນີ້,ຂ້ອຍເອົາບັນຊີຜະລິດຕະພັນໃໝ່ສະບັບໜຶ່ງສົ່ງແຟກໃຫ້ເຈົ້າ,ບໍ່ຮູ້ໄດ້ຮັບ ແລ້ວຫຼືຍັງ?

shōu dào le jīn tiān tè yì lái kàn kan yàng pǐn
B：收到了，今天特意来看看样品。
ໄດ້ຮັບແລ້ວ, ມື້ນີ້ສະເພາະມາເບິ່ງຕົວຢ່າງ.

nà hǎo qǐng nín gēn wǒ lái zhè biān shì yàng pǐn zhǎn shì qū
A：那好，请您跟我来，这边是样品展示区。
ດີຫຼາຍ,ເຊີນເຈົ້າມານຳຂ້ອຍ,ທາງພີ້ແມ່ນເຂດສາທິດຕົວຢ່າງ.

zhè xiē jiù shì nǐ men de xīn chǎn pǐn ma
B：这些就是你们的新产品吗？
ອັນນີ້ກໍ່ແມ່ນຜະລິດຕະພັນໃໝ່ຂອງພວກເຈົ້າຫວະ?

shì de nín qǐng màn màn kàn
A：是的，您请慢慢看。
ແມ່ນແລ້ວ,ເຊີນເຈົ້າຄ່ອຍໆເບິ່ງສາ.

pǐn zhòng kě bù shǎo bāo zhuāng yě hěn piào liang
B：品种可不少，包装也很漂亮。
ມີຫຼາຍປະເພດ,ການຫຸ້ມຫໍ່ກໍ່ງາມຫຼາຍ.

nín guò jiǎng le
A：您过奖了。
ເຈົ້າຍ້ອງຍໍເກີນສ່ວນແລ້ວ.

wǒ duì zhè ge xì liè de chǎn pǐn hěn gǎn xìng qù dài lǐ jià gé shì duō shǎo
B：我对这个系列的产品很感兴趣，代理价格是多少？
ຂ້ອຍມີຄວາມສົນໃຈຫຼາຍຕໍ່ຜະລິດຕະພັນໝວດນີ້.ລາຄາຕົວ ແທນແມ່ນເທົ່າໃດ?

nín shì lǎo kè hù gěi nín líng shòu jià dǎ 3 zhé
A：您是老客户，给您零售价打3折。
ເຈົ້າເປັນລູກຄາເກົ່າແລ້ວ,ໃຫ້ລາຄາຂາຍຍ່ອຍຫລຸດ30ເປີເຊັນໃຫ້ເຈົ້າ,ໄດ້ບໍ່ ?

kě yǐ zài dǎ diǎn zhé kòu ma 2.5 zhé háng ma
B: 可以再打点折扣吗？2.5折行吗？
ຈະຫລຸດອີກນ້ອຍໜຶ່ງໄດ້ບໍ່ ? ຫລຸດ 25ເປີເຊັນໄດ້ບໍ່ ?

duì bu qǐ zhè shì xīn chǎn pǐn bù néng gěi zhè me dī de zhé kòu
A：对不起，这是新产品，不能给这么低的折扣。

ຂໍອະໄພ,ອັນນີ້ແມ່ນຜະລິດຕະພັນໃໝ່,ຫລຸດລາຄາໃຫ້ເຈົ້າຕໍ່າກ່ວານີ້ບໍ່ໄດ້.

qí tā chǎn pǐn dōu shì zhè ge jià ya
B：其它产品都是这个价呀！
ຜະລິດຕະພັນອັນອື່ນກໍ່ແມ່ນລາຄາດຽວກັນບໍ່?

zhè yàng ba wǒ gěi nín shēn qǐng yí xià zuì dī zhé kòu zhé
A：这样吧，我给您申请一下最低折扣，2.8折。
ເຣັດຈັ່ງຊີ້ສາ,ຂ້ອຍໄປຂໍລາຄາຕໍ່າສຸດໃຫ້ເຈົ້າ,28 ເປີເຊັນ.

zhé wǒ hái yào tóu rù dà liàng de xuān chuán cè huá zī jīn wǒ de lì rùn tài shǎo le
B：2.8折，我还要投入大量的宣传策划资金，我的利润太少了。
28 ເປີເຊັນ,ຂ້ອຍຍັງຈະຕ້ອງລົງທຶນໂຄສະນາວາງແຜນເປັນຈໍານວນຫລວງຫລາຍ,ກໍາໄລຂອງຂ້ອຍໜ້ອຍໂພດ.

wǒ men fù zé chǎn pǐn qián qī xuān chuán de yí xì liè gōng zuò nín zhǐ yào fù zé xiāo shòu jiù háng le
A：我们负责产品前期宣传的一系列工作，您只要负责销售就行了。
ພວກເຮົາເປັນຜູ້ຮັບຜິດຊອບວຽກງານໂຄສະນາລ່ວງໜ້າຂອງຜະລິດຕະພັນ,ເຈົ້າມີແຕ່ຮັບຜິດຊອບການຈໍາໜ່າຍກໍ່ໄດ້ແລ້ວ.

zhè yàng ya xiān dìng wàn yuán de huò kàn kan xiāo lù
B：这样呀，先订30万元的货看看销路。
ເຣັດຈັ່ງຊີ້ສາ,ຈອງຊື້ຂອງ 3 ແສນຢວນໄປຈໍາໜ່າຍລອງເບິ່ງ.

hǎo de wǒ men dào zhè biān qiān xià dìng huò xié yì
A：好的，我们到这边签下订货协议。
ໄດ້ຢູ່,ພວກເຮົາມາທາງນີ້ລົງເຊັນສັນຍາສັ່ງຊື້ຂອງນີ້.

hǎo de
B：好的。
ໄດ້.

èr jiāo nǐ dú gǔ shī
## 二：教你读古诗 编/陆蕊
ສອນໃຫ້ທ່ານອ່ານກາບກອນບູຮານ

qiū pǔ gē
### 秋浦歌

bái fà sān qiān zhàng
白发三千丈，
yuán chóu sì gè cháng
缘愁似个长。
bù zhī míng jìng lǐ
不知明镜里，
hé chù dé qiū shuāng
何处得秋霜。

dà yì
大意：

mǎn tóu de bái fā cháng dá qiān zhàng zhī yīn wǒ mián mián de chóu sī yě rú tóng bái fā nà yàng cháng zhào zhào jìng zi jìng zi li de wǒ jìng rán shuāi lǎo chéng zhè yàng bù zhī dào cóng shén yāo shí hòu kāi shǐ biàn chéng bái fā cāng cāng
满头的白发长达千丈，只因我绵绵的愁思也如同白发那样长，照照镜子，镜子里的我竟然衰老成这样，不知道从什么时候开始变成白发苍苍。

ຄວາມໝາຍ:

ຜົມຫງອກແຊມທົ່ວຫົວທີ່ວຍາວເຖິງພັນແມັດ,ຍ້ອນຄິດໝອງຍາວໆເໝືອນດັ່ງຜົມຫງອກຍາວໆ,ແຍງແວ່ນເຫັນຂ້ອຍໃນແວ່ນນັ້ນເສື່ອມເສຍຊະລາຄືຈັ່ງຊີ້,ບໍ່ຮູ້ເລີ່ມແຕ່ເວລາໃດກາຍເປັນຜົມຫງອກ.



绘图 / 刘金昆

# ຖາມຢ່າບໍ່ຫນ້າອາຍ

不耻下问



ໃນຍຸກສະໄຫມຊຸນຊຽວ, ທ່ານຂົງຢີຂອງລັດວູຍກົວທີ່ມີຄວາມຮູ້ຫລາຍ, ຄົນທັງຫລາຍກໍນັບຖືທ່ານ, ຫລັງຈາກທ່ານລ່ວງລ່າໄປແລ້ວ, ເຈົ້າຊີວິດຂອງລັດວູຍກົວທານໃຫ້ນາມມະຍົດໃຫ້ທ່ານຊື່ວ່າ "ເວີນ" ຫມາຍຄວາມວ່າມີຄວາມຮູ້ສູງ, ແຕ່ນີ້ໄປຫນ້າ, ຄົນທັງຫລາຍກໍຮຽກຊື່ຂອງທ່ານແມ່ນຂົງເວີນຈື.

ຕໍ່ມາ, ທ່ານຂົງຈືມະຫານັກຄົ້ນຄິດແລະນັກການສຶກສາມີລູກສິດຜູ້ຫນຶ່ງຊື່ວ່າຈືກອງຖາມຂົງຈືວ່າ, ເປັນຫຍັງຮຽກຊື່ເພິ່ນຂົງຢີເປັນ "ເວີນ"?ທ່ານຂົງຈືບອກຈືກອງວ່າ, ທ່ານຂົງຢີສະຫລາດຫລາຍທີ່ສຸດ, ແລະບາກບັ່ນຮໍ່າຮຽນມັກຖາມ, ເມື່ອພົບບັນຫາທີ່ບໍ່ຮູ້ນັ້ນກໍຖາມຜູ້ອື່ນຢ່າງຖ່ອມຕົວ, ນັບວ່າຜູ້ທີ່ຖາມະຕໍ່າກວ່າເພິ່ນນັ້ນ, ເພິ່ນກໍບໍ່ເຫັນວ່າຫນ້າອາຍ, ດັ່ງນັ້ນ, ນາມມະຍົດຂອງເພິ່ນຮຽກເປັນ "ເວີນ".

ສຸພາສິດຄໍານີ້ອຸປະມາວ່າ, ຂໍຖາມຜູ້ທີ່ມີຄວາມຮູ້ບໍ່ທໍ້ຂ້ອຍແລະຫນ້າທີຕໍາແຫນ່ງຕໍ່າກວ່າຂ້ອຍນັ້ນບໍ່ແມ່ນເລື່ອງທີ່ເສຍຫນ້າ, ສຶກສາໃຫ້ຄົນທັງຫລາຍຕ້ອງບາກບັ່ນຮໍ່າຮຽນມັກຖາມ, ຢ່າຊູ່ບໍ່ຮູ້ຕົ້ວຮູ້, ເມື່ອພົບບັນຫາແລ້ວ, ຈະຕ້ອງຮໍ່າຮຽນນໍາຜູ້ອື່ນຢ່າງຖ່ອມຕົວ.

## Can't we blend art and commerce?

- With your participation, PHOTOMEKONG will a most successful 'bridge' ! Please just press your shutter for the most wonderful moment and join us, to blend art and commerce!
- We are expecting your agreement to work with us as a photographer at PHOTOMEKONG!
- PHOTOMEKONG includes numerous photos representing the natural and humanistic attractions, ethnic cultures, socio-economic development and local resources of China's Yunan province, Myanmar, Thailand, Laos, Cambodia and Vietnam along the Mekong River. With its professional services, exhibition of photos by photographers from Yunnan of China and Southeast Asian countries, and a transaction platform, PHOTOMEKONG also provides state-of-the-art photo resources for the clients engaged in newspapers, periodicals, magazines, pictorials and other media.



PHOTOMEKONG
湄 公 河 图 片 库

http://www.photomekong.com Fax: +86 871 3103179 E-mail: service@photomekong.com
Address: Room 1512, Hongcheng Plaza, Youth Road, Kunming City 650021 Yunnan Province, China



Welcome to Laos... Land of Timeless Beauty
Lao Airlines
RDPL-34132
ການບິນລາວ
Lao Airlines
The Beauty of Lao Hospitality